ຄະນະກຳມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ
ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ



ການປຶກສາຫາລື ແລະ ຂໍ້ແນະນຳກ່ຽວກັບ

# ການປະຕິບັດຢູ່ສູນພັກເຊົາ ໃນອາຊຽນ

ການລາຍງານ ຈາກກອງປະຊຸມປຶກສາຫາລືລະດັບປະເທດ

# ສາລະບານ

03

ພາກທີ 1 :
**ພາກສະເໜີ**

05

ພາກທີ 2 :
**ກອບກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ**

09

ພາກທີ 3 :
**ການປຶກສາຫາລື**

42

ພາກທີ 4 :
**ຂໍ້ແນະນຳ**

47

ຂໍ້ມູນອ້າງອີງ

ຮູບພາບໜ້າປົກ: ການຕຸ້ກສານ ທີ່ ສູນປົກປ້ອງດ້ານສະຫວັດດີພາບ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ປະທຸມທານີ, ປະເທດໄທ

(ຮູບພາບໂດຍ ທ່ານນາງ ຣາວີນ້າ ຣັດເຊວ)

Australian Aid | ASEAN-Australia Counter Trafficking

ຂໍ້ຄວາມປະຕິເສດຄວາມຮັບຜິດຊອບ: ເອກະສານພິມເຜີຍແຜ່ສະບັບນີ້ ແມ່ນພາຍໃຕ້ໂຄງການຂອງ ຄະນະກຳມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC), ທີ່ໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT).

ຄວາມຄິດເຫັນໃນເອກະສານພິມເຜີຍແຜ່ສະບັບນີ້ ບໍ່ໄດ້ໝາຍເຖິງຈຸດຢືນ ຫຼື ຄວາມຄິດເຫັນຂອງອາຊຽນ ຫຼື ລັດສະມາຊິກອາຊຽນ ແລະ ບໍ່ແມ່ນຄວາມຄິດເຫັນຂອງລັດຖະບານອົດສະຕຣາລີ ຫຼື ສະຖາບັນໃດໜຶ່ງ.

# ຄຳຂອບໃຈ

ຄະນະກຳມາທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC) ແມ່ນເປັນຫຼັກທາງດ້ານນະໂຍບາຍ ແລະ ການລິເລີ່ມແຜນງານ ທີ່ເປັນຜົນກະທົບທີ່ມີຄວາມໝາຍ ໃນການປະກອບອັນສຳຄັນໃນການຈັດຕັ້ງປະຕິບັດ ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP), ໂດຍສະເພາະ ໃນການຕອບສະໜອງຄວາມຕ້ອງການດ້ານການປົກປ້ອງແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (TIP).

ການສ້າງຂໍ້ລິເລີ່ມຂອງ ACWC ໃນໄລຍະຜ່ານມາ ແລະ ປະຕິບັດຕາມ "ຄຳແນະນຳໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍ" ແລະ "ຄຳແນະນຳ ແລະ ຂັ້ນຕອນຂອງພາກພື້ນ ໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ" ທີ່ໄດ້ຮັບຮອງ, ຄະນະກຳມາທິການ ACWC ໄດ້ນຳພາການຈັດຕັ້ງປະຕິບັດ "ໂຄງການຫຼາຍປີ ເພື່ອຍົກລະດັບຂີດຄວາມສາມາດຂອງບັນດາເຈົ້າໜ້າທີ່ດ່ານໜ້າໃນການຕໍ່ສູ້ຕ້ານການຄ້າມະນຸດ ໂດຍເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄຳນຶງເຖິງ ບົດບາດຍິງ-ຊາຍ" ("ໂຄງການ"). ຜົນໄດ້ຮັບຂອງໂຄງການນີ້ ລວມມີການສົນທະນາທີ່ລວງເລິກກ່ຽວກັບ ການປະຕິບັດຂອງສູນພັກເຊົາທີ່ແຕກຕ່າງກັນສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນອາຊຽນ ເຊິ່ງນຳໄປສູ່ການພັດທະນາເອກະສານສະບັບນີ້ຂຶ້ນ ເພື່ອຊ່ວຍໃນການປັບປຸງການປະຕິບັດສູນພັກເຊົາໃນພາກພື້ນ.

ຄະນະກຳມາທິການ ACWC ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງ ຕໍ່ລັດສະມາຊິກອາຊຽນທັງໝົດ ທີ່ໃຫ້ການສະໜັບສະໜູນລວມທັງການຈັດກອງປະຊຸມປຶກສາຫາລືໃນລະດັບປະເທດ ໃນປີ 2021-2022 ທີ່ປະເທດກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ຟີລິບປິນ, ໄທ, ແລະ ຫວຽດນາມ, ພ້ອມທັງການກວດກາ ຮອບຮອມບັນດາການປຶກສາຫາລື ແລະ ຄຳແນະນຳຕ່າງໆ ເພື່ອຮັບປະກັນວ່າເປັນສິ່ງທີ່ແທດເໝາະກັບສະພາບການຂອງອາຊຽນ.

ຄະນະກຳມາທິການ ACWC ຂໍສະແດງຄວາມຮູ້ບຸນຄຸນໃນການນຳພາອັນພົ້ນເດັ່ນ ຕໍ່ທ່ານນາງ ສີຣີ ດັນທີ ອັນວາ (H.E. Sri Danti Anwar), ຜູ້ຕາງໜ້າປົກປ້ອງສິດທິຂອງແມ່ຍິງ ປະຈຳ ຄະນະກຳມາທິການ ACWC, ປະເທດອິນໂດເນເຊຍ, ຕໍ່ການນຳພາໃນການພັດທະນາ ແລະ ສຳເລັດກ່ຽວກັບ "ການປຶກສາຫາລື ແລະ ຂໍ້ແນະນຳ ກ່ຽວກັບການປະຕິບັດຢູ່ສູນພັກເຊົາໃນອາຊຽນ". ການວິເຄາະ ໄດ້ສະແດງໃຫ້ເຫັນເຖິງໂອກາດ, ຍຸດທະສາດ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການແກ້ໄຂບັນດາສິ່ງທ້າທາຍທີ່ສະຫຼັບຊັບຊ້ອນ ໃນສູນພັກເຊົາ ທີ່ເປັນຜົນເສຍຫາຍຈາກຜົນກະທົບຂອງແຜ່ລະບາດຂອງໂຄວິດ-19, ພ້ອມທັງການປັບປຸງສະພາບແວດລ້ອມຂອງຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບການສະໜັບສະໜູນໃນສູນພັກເຊົາ ຫຼື ການສະໜັບສະໜູນທີ່ຄ້າຍຄືກັນ.

ຄະນະກຳມາທິການ ACWC ຂໍສະແດງຄວາມຂອບໃຈ ໃນການໃຫ້ການຮ່ວມມືທີ່ເຂັ້ມແຂງຕໍ່ ທີມງານ ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ໃນຂົງເຂດໝາຍທີ່ສຳຄັນນີ້, ໂດຍສະເພາະການສະໜັບສະໜູນຈາກຜູ້ຊ່ຽວຊານ, ທ່ານ ນາງ ເຈັນ ເຈັນ, ທີ່ປຶກສາຂອງແຜນງານ ASEAN-ACT, ທີ່ໄດ້ຊ່ວຍຄະນະກຳມາທິການ ACWC ຕະຫລອດຂະບວນການປຶກສາຫາລື ແລະ ສ້າງຄຳແນະນຳທີ່ຮ່າງມາຈາກການວິເຄາະການສົນທະນາຂອງບັນດາລັດສະມາຊິກອາຊຽນ. ຄະນະກຳມາທິການ ACWC ຫວັງວ່າຈະໄດ້ຮັບການສືບຕໍ່ສະໜັບສະໜູນຈາກແຜນງານ ASEAN-ACT ແລະ ລັດຖະບານອົດສະຕຣາລີ, ໂດຍສະເພາະ ຈາກບັນດາລັດສະມາຊິກອາຊຽນ, ເພື່ອຈັດຕັ້ງປະຕິບັດບັນດາຄຳແນະນຳໃນການປະຕິບັດຢູ່ສູນພັກເຊົາ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ສຸດທ້າຍນີ້, ຄະນະກຳມາທິການ ACWC ຂໍຂອບໃຈຢ່າງສຸດຊຶ້ງ ຕໍ່ເລຂາທິການອາຊຽນ ໃນການສະໜັບສະໜູນ ແລະ ການປະສານງານຢ່າງມີປະສິດທິພາບ ໂດຍຜ່ານພະແນກລຶບລ້າງຄວາມທຸກຍາກ ແລະ ບົດບາດຍິງຊາຍ ໃນຕະຫລອດຂະບວນການສ້າງເອກະສານສະບັບນີ້ຈົນສຳເລັດຜົນ.

# ພາກທີ1 :
# ພາກສະເໜີ

ຄະນະກຳມາທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC) ໄດ້ຢືນຢັນ ການສະໜັບສະໜູນ ການຕີຄວາມໝາຍ ແລະ ການຈັດຕັ້ງປະຕິບັດສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP) ຢ່າງຕໍ່ເນື່ອງ ນັບແຕ່ໄດ້ມີການຮັບຮອງ, ເຊິ່ງມີການພັດທະນາສິ່ງພິມຕ່າງໆ ໃນການສະໜັບສະໜູນ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ເຊັ່ນ ຄູ່ມືແນະນຳໃນການເຮັດວຽກກັບແມ່ຍິງ ທີ່ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງຊາຍ [1] ແລະ ຄຳແນະນຳ ແລະ ຂັ້ນຕອນໃນການແກ້ໄຂຄວາມຕ້ອງການອັນ ຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນພາກພື້ນ.[2]

ການປຶກສາຫາລື ແລະ ຂໍ້ສະເໜີແນະນຳກ່ຽວກັບ ການປະຕິບັດຕົວຢູ່ສູນພັກເຊົາ ໃນອາຊຽນ ຂອງຄະນະກຳມາທິການ ACWC ໄດ້ສ້າງຂຶ້ນ ເພື່ອປຶກສາຫາລືກ່ຽວກັບໂອກາດ, ຍຸດທະສາດ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການລົບລ້າງ ສູນພັກເຊົາແບບ ປິດ ແລະ ປັບປຸງສະຖານະການ ການຄ້າມະນຸດໃນເວລາຈັດຫາສູນພັກເຊົາ. ໂດຍການແຈ້ງໃຫ້ຊາບຈາກກອງປະຊຸມປຶກສາຫາລື ລະດັບຊາດຫຼາຍຄັ້ງ ຫົກປະເທດໃນປະເທດອາຊີຕາເວັນອອກສ່ຽງໃຕ້ - ປະເທດກຳປູເຈຍ, ສປປ ລາວ, ຟີລິບປິນ, ໄທ ແລະ ຫວຽດນາມ- ນັບແຕ່ເດືອນ ທັນວາ 2021 ຫາ ມີນາ 2022. ກອງປະຊຸມດັ່ງກ່າວ ມີຜູ້ປະຕິບັດຕົວຈິງຈາກພາກລັດ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານເຂົ້າຮ່ວມ. ເອກະສານສະບັບນີ້ ໄດ້ພັດທະນາຈາກການວິເຄາະ ແລະ ຂໍ້ສະເໜີແນະນຳ ຈາກການຄົ້ນຄວ້າກ່ຽວກັບສູນພັກເຊົາ ທີ່ດຳເນີນໂດຍ ແຜນງານອາຊຽນອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ແຜນງານ ASEAN-ACT) ໃນປີ 2018.

ບົດລາຍງານຂອງແຜນງານ ASEAN-ACT ໃນປີ 2018 ກ່ຽວກັບ "ເສລີພາບໃນການເຄື່ອນຍ້າຍຂອງບຸກຄົນ ທີ່ຖືກກຳນົດ ຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ການວິເຄາະດ້ານກົດໝາຍ, ນະໂຍບາຍ ແລະ ການປະຕິບັດຕົວຈິງໃນພາກພື້ນ ອາຊຽນ" ເຊິ່ງເປັນບົດຄົ້ນຄວ້າ ທີ່ສຸມໃສ່ 3 ປະເທດໃນອາຊຽນ: ປະເທດມາເລເຊຍ, ຟີລິບປິນ ແລະ ໄທ.[3] ໂດຍສະເພາະ ຢ່າງຍິ່ງ, ໄດ້ມີການກວດສອບເຖິງເງື່ອນໄຂຂອງສູນພັກເຊົາແບບປິດ ທີ່ຈຳກັດ ເສລີພາບໃນການເຄື່ອນຍ້າຍຂອງຜູ້ພັກອາໄສ ທັງຈາກປະເທດຕົ້ນທາງ ແລະ ປະເທດປາຍທາງ. ບົດລາຍງານ ພົບວ່າ ເງື່ອນໄຂສູນພັກເຊົາແບບປິດ ມີລັກສະນະຄ້າຍໆ ກັບສະຖານທີ່ກັກຂັງ ເນື່ອງຈາກການອອກແບບສະຖານທີ່ (ຕົວຢ່າງ: ມີລັກສະນະຄືຄ້າຍຄຸມຂັງ ຫຼື ຄຸກ) ຫຼື ຂໍ້ຈຳກັດຂອງ ສະຖານທີ່ ໃນການເຄື່ອນຍ້າຍຂອງຜູ້ພັກອາໄສ ທີ່ເປັນເງື່ອນໄຂຂອງຜູ້ອາໄສຢູ່. ສູນພັກເຊົາ ທີ່ດຳເນີນການໂດຍອົງການຈັດຕັ້ງ ສາກົນທີ່ບໍ່ສັງກັດລັດຖະບານ (NGOs) ພົບວ່າມີຄວາມເຂັ້ມງວດຄືກັນກັບສູນພັກເຊົາທີ່ດຳເນີນການໂດຍພາກລັດ.




[1] ອາຊຽນ (2016). ຄູ່ມືແນະນໍາໃນການເຮັດວຽກກັບແມ່ຍິງ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງຊາຍ: ກອງເລຂາອາຊຽນ (https://asean.org/asean2020/wp-content/uploads/2021/01/Gender-Sensitive-Guidelines-for-Handling-Women-Victims-of-Trafficking-in-Persons-2016.pdf)

[2] ບໍ່ມີທາງອອນລາຍ

[3] ມາຣິກາ ແມັກອາດໍາ (Marika McAdam) (2018). ເສລີພາບໃນການເຄື່ອນຍ້າຍ ຂອງບຸກຄົນທີ່ຖືກກໍານົດຕົວວ່າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ: ການວິເຄາະກົດໝາຍ, ນະໂຍບາຍ ແລະ ການປະຕິບັດຕົວຈິງໃນພາກພື້ນອາຊຽນ. ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ. (https://www.aseanact.org/wp-content/uploads/2021/04/Freedom-of-movement_with-disclaimer.pdf)

# ພາກທີ 2 :
# ກອບກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ

## 2.1 ກົດໝາຍສາກົນທີ່ກ່ຽວຂ້ອງກັບການບໍ່ກັກຂັງຜູ້ຖືກເຄາະຮ້າຍ

- ສິດທິເສລີພາບໃນການເຄື່ອນຍ້າຍ (ມາດຕາ 12 ຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ (ICCPR)[4]

- ສິດທິ ເສລີພາບຂອງສ່ວນບຸກຄົນ (ມາດຕາ 1(9) ຂອງສົນທິສັນຍາ ICCPR)

- ສິດວ່າດ້ວຍການເຮັດວຽກ (ມາດຕາ 1(6) ສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານວັດທະນະທຳ ແລະ ເສດຖະກິດ-ສັງຄົມ (ICESCR)[5]

- ຫ້າມກັກຂັງເດັກ ຕາມສົນທິສັນຍາວ່າດ້ວຍສິດທິເດັກ (CRC)[6] ແລະ ອະນຸສັນຍາເພີ່ມເຕີມ ວ່າດ້ວຍການຂາຍເດັກ, ການຄ້າປະເວນີເດັກ ແລະ ພາບລາມົກອານາຈານເດັກ [7]

- ອິດສະລະ ໃນການເລືອກທີ່ຢູ່ອາໄສ ແລະ ພູມລຳເນົາຂອງຕົນ (ມາດຕາ 15) ຂອງສົນທິສັນຍາວ່າດ້ວຍການລົບລ້າງການຈຳແນກທຸກຮູບແບບຕໍ່ແມ່ຍິງ (CEDAW) [8]

- ສິດທິຂອງຄົນພິການ ຕໍ່ກັບອິດສະລະພາບໃນການເຄື່ອນຍ້າຍ (ມາດຕາ 18) ຂອງສົນທິສັນຍາວ່າດ້ວຍຄົນພິການ (CRPD)[9]

ຄູ່ມືວ່າດ້ວຍຫຼັກການ ແລະ ຂໍ້ສະເໜີແນະນຳ ວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ ຂອງສຳນັກງານຄະນະກຳມາທິການສູງສຸດດ້ານສິດທິມະນຸດຂອງອົງການສະຫະປະຊາຊາດ (OHCHR) ປີ 2002 ກຳນົດວ່າ "ຜູ້ຖືກຄ້າມະນຸດ ຈະບໍ່ຖືກກັກຂັງ, ຖືກຈັບ ຫຼື ດຳເນີນຄະດີ."[10] ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ກ່າວວ່າ ຜູ້ຖືກຄ້າມະນຸດ ໄດ້ຖືກກັກຕົວ ໃນສະຖານທີ່ທີ່ຮ້ອງວ່າ ສູນພັກເຊົາແບບປິດ ໃນຫຼາຍປະເທດ, ແລະ ກ່າວວ່າ ສິ່ງນີ້ເປັນເຈດຈຳນົງໜຶ່ງໃນການຊ່ວຍເຫຼືອ, ບໍ່ມີຜູ້ຖືກເຄາະຮ້າຍຈາກອາຊະຍາກຳອື່ນ ທີ່ຕ້ອງຢູ່ພາຍໃຕ້ມາດຕະການຈຳກັດດັ່ງກ່າວ ສຳລັບການປົກປ້ອງຕົນເອງ [11]

[4] ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ, ເປີດໃຫ້ລົງນາມ ໃນວັນທີ 16 ທັນວາ 1966, 999. U.N.T.S 3, ມີຜົນບັງຄັບໃຊ້ໃນວັນທີ 3 ມັງກອນ 1976. (https://www.ohchr.org/en/instruments- mechanisms/instruments/international- covenant-civil-and-political-rights)

[5] ສົນທິສັນຍາສາກົນວ່າດ້ວຍສິດທິທາງວັດທະນະທໍາ ແລະ ເສດຖະກິດ-ສັງຄົມ, ເປີດໃຫ້ລົງນາມ ໃນວັນທີ 16 ທັນວາ 1966, 993 U.N.T.S.3, ມີຜົນບັງຄັບໃຊ້ໃນວັນທີ 3 ມັງກອນ 1976. (https://www.ohchr.org/en/instruments- mechanisms/instruments/international- covenant-economic-social-and-cultural- rights)

[6] ສົນທິສັນຍາວ່າດ້ວຍສິດທິເດັກ, ໄດ້ຖືກຮັບຮອງໂດຍ GA Res 44/25 ໃນວັນທີ 20 ພະຈິກ 1989, ມີຜົນບັງຄັບໃຊ້ໃນວັນທີ 2 ກັນຍາ 1990. (https://www.ohchr.org/en/instruments- mechanisms/instruments/convention- rights-child)

[7] ອານຸສັນຍາເພີ່ມເຕີມ ໃຫ້ແກ່ສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບການຂາຍເດັກ, ການຄ້າປະເວນີເດັກ ແລະ ຮູບພາບລາມົກອານາຈານເດັກ, ຮັບຮອງໂດຍ GA Res 54/263 ໃນວັນທີ25 ພຶດສະພາ 2000, ມີຜົນບັງຄັບໃຊ້ໃນວັນທີ 18 ມັງກອນ 2002. (https://www.ohchr.org/en/instruments-mechanisms/instruments/optional-protocol-convention-rights-child-sale-children-child)

[8] ສົນທິສັນຍາສາກົນວ່າດ້ວຍການລຶບລ້າງທຸກຮູບແບບການຈໍາແນກຕໍ່ແມ່ຍິງ, ຮັບຮອງໂດຍ GA ໃນວັນທີ 18 ທັນວາ 1979, ມີຜົນບັງຄັ້ບໃຊ້ ວັນທີ 3 ກັນຍາ1981 (https://www.ohchr.org/en/instruments-mechanisms/instruments/convention-elimination-all-forms-discrimination-against-women)

[9] ສົນທິສັນຍາວ່າດ້ວຍສິດທິຄົນພິການ, ຮັບຮອງໂດຍ GA Res 61/106ວັນທີ 13 ທັນວາ 2006, ມີຜົນບັງຄັບໃຊ້ວັນທີ 3 ພຶດສະພາ 2008 (https://www.ohchr.org/en/instruments- mechanisms/instruments/convention- rights-persons-disabilities)

[10]ເບິ່ງທີ່ ຫຼັກການຂໍ້ສະເໜີແນະນໍາ ຂໍ້ທີ 7 ຂອງຄູ່ມືວ່າດ້ວຍຫຼັກການ ແລະ ຂໍ້ສະເໜີແນະນໍາ ກ່ຽວກັບການຄ້າມະນຸດ ແລະ ສິດທິມະນຸດ, ເອກະສານຊ້ອນທ້າຍ, ບົດລາຍງານຂອງສໍານັກງານຂອງຄະນະກໍາມາທິການສູງສຸດ ວ່າດ້ວຍສິດທະມະນຸດ ຕໍ່ກັບສະພາເສດຖະກິດ ແລະ ສັງຄົມ, ເອກະສານ UN. E/2002/68/Add.1 (ວັນທີ 20 ພຶດສະພາ 2002).

[11] ຄໍາເຫັນທົ່ວໄປ ເລກທີ 5 (2020) ວ່າດ້ວຍສິດທິຂອງແຮງງານເຄື່ອນຍ້າຍ ກ່ຽວກັບເສລີພາບ ແລະ ອິດສະລະພາບ ຈາກການຖືກກັກຂັງແບບຕາມໃຈ ໂດຍຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Siobhán Mullally. ວັນທີ 16 ພະຈິກ 2020 (https://www.ohchr.org/en/documents/ge neral-comments-and- recommendations/comments-special- rapporteur-draft-general-comment-no)



## 2.2 ກົດໝາຍ ແລະ ກອບການເຮັດວຽກໃນລະດັບພາກພື້ນທີ່ກ່ຽວຂ້ອງກັບການບໍ່ກັກຂັງຜູ້ຖືກເຄາະຮ້າຍ

ມາດຕາ 14 (8) ຂອງສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP) ກໍານົດໄວ້ວ່າ "ແຕ່ລະລັດພາຄີ ຈະບໍ່ກັກຂັງບຸກຄົນທີ່ຖືກກໍານົດຕົວໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍບໍ່ມີເຫດຜົນພຽງພໍ ໃນສະຖານທີ່ກັກຕົວ ຫຼື ໃນຄ້າຍຄຸມຂັງ, ກ່ອນ, ໃນລະຫວ່າງ ຫຼື ຫຼັງການດໍາເນີນຄະດີແພ່ງ, ອາຍາ ຫຼື ການບໍລິຫານໃນສະຖານການຄ້າມະນຸດ. [12]

ມາດຕາ 16 ຂອງບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືເພື່ອຕ້ານການຄ້າມະນຸດ ໃນພາກພື້ນລຸ່ມແມ່ນໍ້າຂອງ (COMMITT MOU) ກໍານົດໃຫ້ລັດສະມາຊິກໃນຫົກປະເທດຕ້ອງ "ຮັບປະກັນວ່າຜູ້ທີ່ໄດ້ຮັບການກໍານົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກກັກຂັງໂດຍໜ່ວຍງານບັງຄັບໃຊ້ກົດໝາຍ."[13]

## 2.3 ກົດໝາຍພາຍໃນ ທີ່ກ່ຽວຂ້ອງກັບ ການບໍ່ກັກຂັງຜູ້ຖືກເຄາະຮ້າຍ

ລັດສະມາຊິກອາຊຽນ ເກືອບທັງໝົດ ມີກົດໝາຍພາຍໃນ ຫຼື ຄໍາແນະນໍາ ທີ່ເປັນການສະໜອງສູນພັກເຊົາ ແລະ/ຫຼື ໃຫ້ທີ່ພັກເຊົາຊົ່ວຄາວ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ມາດຕາ 33 ຂອງກົດໝາຍວ່າດ້ວຍ ການປ້ອງກັນ ແລະ ຕ້ານການຄ້າມະນຸດ ປະເທດຫວຽດນາມ ກໍານົດວ່າ ຜູ້ຖືກເຄາະຮ້າຍ ອາດຈະໄດ້ຮັບທີ່ພັກເຊົາຊົ່ວຄາວ. ນອກນັ້ນ, ດໍາລັດຂອງປະເທດຫວຽດນາມ ເລກທີ 62/2012/ND-CP, ກໍານົດຂອບເຂດນິຍາມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການປົກປ້ອງຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ ຕາມທີ່ກໍານົດໄວ້ໃນຂໍ້ກໍານົດຂອງສູນພັກເຊົາຊົ່ວຄາວ ໃນມາດຕາ 7.

ມາດຕາ 19 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການຄ້າມະນຸດ ຂອງປະເທດສິງກະໂປ ກໍານົດກ່ຽວກັບສູນພັກເຊົາຊົ່ວຄາວ ແລະ ການບໍລິການໃຫ້ຄໍາປຶກສາແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ຄູ່ມືກ່ຽວກັບການປະຕິບັດງານຂອງທີມງານສະຫະວິຊາຊີບຂອງປະເທດໄທ ວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍານົດໃຫ້ມີການສົ່ງຕໍ່ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄປຍັງສູນພັກເຊົາ. ອີງຕາມ ພາກທີ 33 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດ ຂອງປະເທດໄທ ແມ່ນໄດ້ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ລວມທັງ ສູນພັກເຊົາ.

ພາກທີ 23 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດຂອງປະເທດຟີລິບປິນ ກໍານົດກ່ຽວກັບ ການບໍລິການທີ່ຈໍາເປັນ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງສູນພັກເຊົາແບບສຸກເສີນ ຫຼື ທີ່ພັກເຊົາ ທີ່ເໝາະສົມ.

ມາດຕາ 42-47 ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ການລັກລອບເຂົ້າ-ອອກເມືອງ ຂອງປະເທດມາເລເຊຍ ກໍານົດສະຖານທີ່ລີ້ໄພ ສໍາລັບຜູ້ຖືກເຄາະຮ້າຍ.

ມາດຕາ 44-50 ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດຂອງ ສປປ ລາວ ກໍານົດກ່ຽວກັບສິດທິຂອງຜູ້ຖືກເຄາະຮ້າຍ ໃນການເຂົ້າເຖິງການຊ່ວຍເຫຼືອ ລວມທັງ ສູນພັກເຊົາຊົ່ວຄາວ. ນອກນັ້ນ, ມາດຕາ 40 ຂອງກົດໝາຍ ສປປ ລາວ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ກໍານົດມາດຕະການແບບຮີບດ່ວນ ໃນການປົກປ້ອງ, ລວມທັງ ການສົ່ງກັບຄືນຫາພໍ່ແມ່ ຫຼື ສູນພັກເຊົາທີ່ປອດໄພ ຖ້າເປັນໄປໄດ້.

ມາດຕາ 46 ແລະ 52 ຂອງກົດໝາຍ ເລກທີ 21 ປີ 2007 ວ່າດ້ວຍການລຶບລ້າງການກະທໍາທາງອາຍາກ່ຽວກັບການຄ້າມະນຸດຂອງປະເທດອິນໂດເນເຊຍ ເຊິ່ງກໍານົດໃຫ້ລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ ສ້າງສູນພັກເຊົາ ແລະ ສູນປິ່ນປົວຄວາມບອບຊໍ້າທາງດ້ານຈິດໃຈ ເພື່ອໃຫ້ການບໍລິການດ້ານການແພດ ແລະ ການຟື້ນຟູທາງສັງຄົມ, ການຊ່ວຍເຫຼືອໃນການສົ່ງກັບ ແລະ ການກັບຄືນສູ່ສັງຄົມ. ມາດຕາ 223 ຂອງກົດລະບຽບຂອງລັດຖະບານໃນການຈັດຕັ້ງປະຕິບັດກົດໝາຍເລກທີ 6/2011 ວ່າດ້ວຍການເຂົ້າ-ອອກເມືອງ (ເລກທີ 31/2013) ໃນການສະໜອງທີ່ພັກເຊົາໃຫ້ແກ່ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຕ່າງປະເທດໃນປະເທດອິນໂດເນເຊຍ.

# ພາກທີ 3 :
# ການປຶກສາຫາລື

## 3.1 ຄໍາສັບ ແລະ ຄວາມເຂົ້າໃຈກ່ຽວກັບ ສູນພັກເຊົາແບບປິດ

ໃນບັນດາປະເທດສະມາຊິກອາຊຽນ ທີ່ໄດ້ປຶກສາຫາລື ກ່ຽວກັບເອກະສານສະບັບນີ້ ໄດ້ມີການໃຊ້ຄໍາສັບທີ່ຫຼາກຫຼາຍ ສໍາລັບສູນພັກເຊົາແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ 'ທີ່ພັກເຊົາຊົ່ວຄາວ', 'ສະຖານທີ່ປົກປ້ອງ', 'ການປົກປ້ອງຄຸ້ມຄອງ', 'ເຮືອນທີ່ປອດໄພ', 'ສະຖານທີ່ສັງຄົມສົງເຄາະ' ແລະ ອື່ນໆ. ການໃຊ້ຄໍາສັບ 'ສະຖານທີ່ປົກປ້ອງ' ແລະ 'ການປົກປ້ອງຄຸ້ມຄອງ' ເປັນການຊີ້ໃຫ້ເຫັນເຖິງການຮັບຮູ້ທົ່ວໄປກ່ຽວກັບສູນພັກເຊົາແກ່ຜູ້ຖືກເຄາະຮ້າຍ ໂດຍມີຈຸດປະສົງໃນການປົກປ້ອງທີ່ເຂັ້ມແຂງ - ໂດຍສະເພາະ ແມ່ນການປົກປ້ອງຈາກຜູ້ຄ້າມະນຸດ ແລະ ໄພຄຸກຄາມອື່ນໆ - ເປັນຂໍ້ມູນລົງເລິກ ທີ່ເນັ້ນໃຫ້ເຫັນໃນບົດລາຍງານຂອງແຜນງານ ASEAN-ACT ໃນປີ 2018.

ໂດຍມີຄວາມເປັນເອກະພາບກັນວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຈະຖືກກັກຂັງ, ໂດຍຜູ້ເຂົ້າຮ່ວມຈາກກອງປະຊຸມວິຊາການ ໄດ້ມີການຄໍານຶງເຖິງ ຂໍ້ກໍານົດໃນມາດຕາ 14 ຂອງສົນທິສັນຍາ ACTIP ທີ່ຮຽກຮ້ອງໃຫ້ບັນດາລັດ ບໍ່ກັກຂັງ ຫຼື ຈໍາຄຸກ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍບໍ່ມີເຫດຜົນ ຫຼື ລົງໂທດຜູ້ຖືກເຄາະຮ້າຍ ສໍາລັບການກະທໍາທີ່ຜິດກົດໝາຍ ທີ່ເປັນຜົນມາຈາກການຖືກຄ້າມະນຸດ.[14] ການກັກຂັງ ຕິດພັນກັບການຖືກກັກຂັງໃນສູນກັກຂັງການເຂົ້າ-ອອກເມືອງ, ຄ້າຍຄຸມຂັງ, ຄຸກ ແລະ ອື່ນໆ ບ່ອນທີ່ຜູ້ຖືກເຄາະຮ້າຍຖືກປະຕິບັດຄືກັບອາຊະຍາກອນ ຫຼື ຜູ້ກະທໍາຜິດ. ດ້ວຍເຫດນັ້ນ, ພາກສ່ວນທີ່ກ່ຽວຂ້ອງຈາກລັດ ແລະ ບໍ່ແມ່ນໜ່ວຍງານຂອງລັດ ສັງເກດເຫັນວ່າ ແນວຄວາມຄິດ ແລະ ການປະຕິບັດຕົວຈິງຂອງ 'ສູນພັກເຊົາ-ສະຖານທີ່ກັກຂັງ' ກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບໍ່ມີອີກຕໍ່ໄປ



ເນື່ອງຈາກການປະຕິບັດຕາມກົດໝາຍພາຍໃນທີ່ເຂັ້ມງວດ ແລະ ເນັ້ນໜັກເຖິງສິດທິມະນຸດຂອງຜູ້ຖືກເຄາະຮ້າຍ.

ໃນຂະນະດຽວກັນ, ຍັງມີຄວາມສັບສົນກ່ຽວກັບການນຳໃຊ້ຄຳສັບທີ່ແຕກຕ່າງກັນ ໂດຍຂຶ້ນກັບວ່າພາກສ່ວນໃດເປັນຜູ້ນຳໃຊ້. ສູນພັກເຊົາ ຖືກອະທິບາຍວ່າເປັນແບບ 'ເປີດ', 'ປິດເຄິ່ງໜຶ່ງ' ແລະ 'ປິດ' ໂດຍບໍ່ມີການແບ່ງປັນຄວາມເຂົ້າໃຈຮ່ວມກັນໃນລະດັບຊາດວ່າ ຄຳສັບເຫຼົ່ານີ້ ມີຄວາມໝາຍແນວໃດກັນແທ້ໃນພາກປະຕິບັດຕົວຈິງ.

ລັກສະນະ ໄລຍະສັ້ນຂອງສູນພັກເຊົາສ່ວນໃຫຍ່ ຖືກຍົກຂຶ້ນມາວ່າເປັນຈຸດທີ່ກົງກັນຂ້າມກັບແນວຄວາມຄິດຂອງສູນພັກເຊົາແບບປິດ. ໃນປະເທດຟີລິບປິນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ພັກອາໄສຢູ່ໃນສະຖານທີ່ເບິ່ງແຍງດ້ານທີ່ພັກອາໄສ (ພາຍໃຕ້ໂຄງການ ການຟື້ນຟູຄືນ ແລະ ສົ່ງກັບຄືນສູ່ສັງຄົມ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ) ສຳລັບໄລຍະເວລາພັກເຊົາຊົ່ວຄາວ ບ່ອນທີ່ນັກສັງຄົມສົງເຄາະ ເຮັດວຽກຮ່ວມກັບເຈົ້າໜ້າທີ່ພັດທະນາ ແລະ ສັງຄົມສົງເຄາະຂັ້ນທ້ອງຖິ່ນ ເພື່ອແຈ້ງຄອບຄົວເຂົາເຈົ້າ ແລະ ຂະບວນການ ກັບຄືນບ້ານໂດຍໄວ.ເນັ້ນໃສ່ການສະໜັບສະໜູນການກັບຄືນສູ່ຄອບຄົວຂອງຜູ້ຖືກເຄາະຮ້າຍ ທີ່ປະສົບຜົນສຳເລັດ. ໃນປະເທດຫວຽດນາມ, ຜູ້ຖືກເຄາະຮ້າຍ ສ່ວນໃຫຍ່ມັກອາໄສຢູ່ໃນສູນພັກເຊົາທີ່ຮ້ອງວ່າ ບ້ານສັນຕິພາບ ຫຼື Peace House ທີ່ຄຸ້ມຄອງໂດຍສະຫະພັນແມ່ຍິງຫວຽດນາມ ສຳລັບໄລຍະເວລາ ສາມເດືອນ ຫາ ຫົກເດືອນ ແລະ ສູນພັກເຊົາ Nhan Ai (ບ້ານເມດຕາ ຫຼື Compassion House) ທີ່ສະໜັບສະໜູນໂດຍ Pacific Links ດົນສູງສຸດຮອດສີ່ປີ.

ບ້ານສັນຕິພາບ ເຮັດໜ້າທີ່ເປັນສະຖານທີ່ບໍລິການຊົ່ວຄາວເຊັ່ນ ເປັນສະຖານທີ່ພັກເຊົາທີ່ປອດໄພ, ໃຫ້ຄຳປຶກສາດ້ານຈິດຕະວິທະຍາ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ອາຫານ. ພາກສ່ວນທີ່ກ່ຽວຂ້ອງຂອງໄທ ຍອມຮັບວ່າ ຜູ້ຖືກເຄາະຮ້າຍໃນໄທສ່ວນໃຫຍ່ ອາໄສຢູ່ໃນສູນພັກເຊົາແບບປິດ ແລະ ໂດຍປົກກະຕິ ຈະບໍ່ມີບັນຫາ ຖ້າຫາກອາໄສຢູ່ໃນໄລຍະສັ້ນ. ເຖິງຢ່າງໃດກໍຕາມ ຖ້າຫາກໄລຍະເວລາຂອງການດຳເນີນຄະດີຍາວນານ ສິ່ງຜົນເຮັດໃຫ້ຜູ້ຖືກເຄາະຮ້າຍຫຼາຍຄົນ ຖືກຄຸ້ມຄອງໃນສູນພັກເຊົາ ເປັນເວລາດົນນານ.

ການໄດ້ຮັບຄວາມຍິນຍອມໂດຍມີຂໍ້ມູນຄົບຖ້ວນຈາກຜູ້ຖືກເຄາະຮ້າຍ ກ່ອນເຂົ້າສູ່ສູນພັກເຊົາ ເປັນວິທີທາງໜຶ່ງທີ່ຈະຫຼຸດຜ່ອນ ຂໍ້ຈຳກັດເສລີພາບໃນການເຄື່ອນຍ້າຍຂອງເຂົາເຈົ້າ. ໃນພາກປະຕິບັດຕົວຈິງ, ການໄດ້ຮັບຄວາມຍິນຍອມໂດຍມີຂໍ້ມູນທີ່ຄົບຖ້ວນ ປາກົດວ່າຈະເປັນບັນຖັດຖານ ໃນຫຼາຍໆປະເທດໃນອາຊຽນ ເຊິ່ງຜູ້ຖືກເຄະຮ້າຍ ຈະໄດ້ຮັບຂໍ້ມູນກ່ຽວກັບເງື່ອນໄຂໃນການຢູ່ອາໄສ, ລະບຽບໃນການນຳໃຊ້ມືຖື, ເວລາໃດທີ່ເຂົາເຈົ້າສາມາດອອກຈາກສະຖານທີ່ ແລະ ຢູ່ພາຍໃຕ້ເງື່ອນໄຂອັນໃດ ແລະ ອື່ນໆ. ເຖິງຢ່າງໃດກໍຕາມ, ຂັ້ນຕອນປົກກະຕິໃນການໄດ້ຮັບການຍິນຍອມຈາກຜູ້ຖືກເຄາະຮ້າຍ ຖືກຂັດຂວາງດ້ວຍການສົນທະນາແບບລົງເລິກວ່າ ຜູ້ຖືກເຄາະຮ້າຍບາງຄົນ ມີທາງເລືອກທີ່ແທ້ຈິງໃນການເລີ່ມຕົ້ນ. ໂດຍສະເພາະຄົນທີ່ມີສັນຊາດຕ່າງປະເທດທີ່ບໍ່ມີທາງອື່ນທີ່ຈະໄປ ແລະ ຜູ້ທີ່ມີທາງເລືອກອື່ນ ໃນການຖືກກັກຂັງໃນສູນກວດຄົນເຂົ້າ-ອອກເມືອງ ຫຼື ໃນຄຸກ.



*ຖ້າຫາກທາງເລືອກມີຈິງ, ຜູ້ຄຸ້ມຄອງສູນພັກເຊົາ ອາດຈະບໍ່ໄດ້ອະທິບາຍໃຫ້ແກ່ຜູ້ພັກອາໄສວ່າພວກເຂົາສາມາດອອກໄປໄດ້. ເມື່ອພິຈາລະນາຈາກຄວາມບອບຊໍ້າດ້ານຈິດໃຈ ແລະ ຂາດອິດສະລະທີ່ກ່ຽວຂ້ອງກັບການຄ້າມະນຸດ, ຜູ້ຖືກເຄາະຮ້າຍ ມີແນວໂນ້ມທີ່ຈະມີຄວາມລັງເລໃຈຕໍ່ກັບຄວາມສ່ຽງດ້ານລົບ ໂດຍການເວົ້າອອກມາ.*

*ສໍາລັບຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ, ສະຖານະການ ການເຄື່ອນຍ້າຍທີ່ຜິດປົກກະຕິຂອງເຂົາເຈົ້າ ອາດໝາຍຄວາມວ່າ ບໍ່ສາມາດປ່ອຍຕົວໄດ້ທັນທີ, ເຖິງວ່າໃນພາກທິດສະດີ ຈະມີສິດໃນການອອກຈາກສູນໄດ້. ຕົວຢ່າງ: ການຮ້ອງຂໍ ໃນການອອກຈາກສູນພັກເຊົາຂອງໄທທີ່ດໍາເນີນການໂດຍລັດຖະບານ, ບໍ່ສາມາດອະນຸມັດໄດ້ຈົນວ່າເອກະສານທີ່ຈໍາເປັນໄດ້ຮັບການອະນຸມັດ, ຂະບວນການດັ່ງກ່າວ ອາດຈະໃຊ້ເວລາຫຼາຍເດືອນ ຫຼື ໃຊ້ເວລາເປັນປີ. [15]*

ໂດຍເນັ້ນໜັກໄປທີ່ ການໃຫ້ຄວາມຍິນຍອມ ໃນເວລາເລີ່ມຕົ້ນເຂົ້າພັກອາໄສ ໂດຍມີການກ່າວເລັກນ້ອຍວ່າໄດ້ມີການຂໍການຍິນຍອມຢ່າງຕໍ່ເນື່ອງ ຫຼື ບໍ່. ໃນຂະນະທີ່ຜູ້ຄຸ້ມຄອງສູນພັກເຊົາ ກ່າວວ່າຜູ້ຖືກເຄາະຮ້າຍ ມີອິດສະລະທີ່ຈະອອກໄປ ໄດ້ທຸກເວລາ ແລະ ບາງຄົນກໍໄດ້ເຮັດ, ມີອຸປະສັກຫຼາຍອັນໃນພາກປະຕິບັດຕົວຈິງ ທີ່ຈະຕ້ອງເອົາຊະນະອຸປະສັກ.

ເຊັ່ນດຽວກັນກັບການຄົ້ນພົບຂໍ້ມູນໃນບົດລາຍງານຂອງແຜນງານ ASEAN-ACT ສະບັບປີ 2018, ການໄປທັດສະນະສຶກສາ ແລະ ກິດຈະກຳນອກສູນພັກເຊົາ (ເຊັ່ນການໄປຊາຍຫາດ, ເບິ່ງໜັງ, ໂຍນໂບລິ້ງ ຫຼື ໄປຫ້າງຊັບພະສິນຄ້າ) ແລະ ການເຂົ້າເຖິງການຝຶກອົບຮົມ ແລະ ການຈ້າງງານ ໄດ້ຮັບການອ້າງອີງເປັນຕົວຢ່າງໃນເວລາທີ່ດຳເນີນກອງປະຊຸມປຶກສາຫາລືລະດັບຊາດ ປີ 2022.

ພາກສ່ວນທີ່ກ່ຽວຂ້ອງໃນ ສປປ ລາວ ກ່າວວ່າ ປະເທດລາວບໍ່ມີສູນພັກເຊົາແບບກັກຂັງ ແຕ່ມີສູນ 'ເຄິ່ງປິດ'. ອົງການ NGO ໜຶ່ງໃນ ສປປ ລາວ ກ່າວວ່າ ຜູ້ພັກອາໄສໃນສູນພັກເຊົາທີ່ປອດໄພ ມີສິດຢ່າງເຕັມທີ່ ແລະ ສາມາດເຮັດໃຫ້ສູນພັກເຊົາທີ່ປອດໄພ ມີຄວາມຮູ້ສຶກຄືກັບເຮືອນ. ສູນພັກເຊົາທີ່ປອດໄພ ມີກິດຈະກຳ ແລະ ການສະໜັບສະໜູນຕ່າງໆໃຫ້ແກ່ຜູ້ພັກອາໄສ ແລະ ຜູ້ພັກອາໄສ ສາມາດສື່ສານ ແລະ ພົບກັບຄອບຄົວຂອງເຂົາເຈົ້າໄດ້. ການສະທ້ອນເຖິງຄວາມຮູ້ສຶກເຫຼົ່ານີ້, ສະຫະພັນແມ່ຍິງລາວ ມີໜ້າທີ່ໃນການສະໜອງສູນພັກເຊົາທີ່ປອດໄພ ແລະ ການຟື້ນຟູດ້ານຮ່າງກາຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (ຜູ້ຍິງ) ໃນປະເທດ ໄດ້ແບ່ງປັນວ່າ:

*ພວກເຮົາມີບາງກິດຈະກຳ ເພື່ອຜ່ອນຄາຍຄວາມກົດດັນ ແລະ ເຄັ່ງຕຶງ (ຂອງຜູ້ພັກອາໄສ) ແລະ ບຳບັດເຂົາເຈົ້າ ໂດຍຜ່ານກິດຈະກຳທາງວັດທະນະທຳ. ພວກເຮົາພາເຂົາເຈົ້າໄປທາງນອກ ເຊັ່ນ: ໄປຕະຫຼາດ, ທ່ຽວຊົມເມືອງ. ເຖິງຢ່າງໃດກໍຕາມ (ຜູ້ພັກອາໄສ) ຈະຕ້ອງມີພະນັກງານພວກເຮົາໄປນຳ ເພາະເຂົາເຈົ້າຍັງຢູ່ພາຍໃຕ້ຄວາມຮັບຜິດຊອບຂອງພວກເຮົາ ແລະ ພວກເຮົາ ຮັບຜິດຊອບຕໍ່ຄວາມປອດໄພຂອງເຂົາເຈົ້າ.*

ການຮັບຮູ້ກ່ຽວກັບ 'ເສລີພາບໃນການເຄື່ອນຍ້າຍ' ຈາກມຸມມອງຂອງຜູ້ຖືກເຄາະຮ້າຍ ໄດ້ຖືກຍົກຂຶ້ນມາ ແຕ່ບໍ່ໄດ້ສົນທະນາກັນຢ່າງຈິງຈັງ. ສິ່ງນີ້ເຮັດໃຫ້ເຫັນວ່າ ມຸມມອງຂອງຜູ້ຖືກເຄາະຮ້າຍເອງ ອາດຈະໄດ້ບໍ່ຮັບການພິຈາລະນາຢ່າງພຽງພໍ ແລະ ປະສົມປະສານເຂົ້າກັບແຜນງານ ທີ່ອີງໃສ່ສູນພັກເຊົາໃນອາຊຽນ. ແຕ່ການປະຕິບັດທີ່ເປັນຕົວແບບທີ່ດີຂອງສາກົນ ສະແດງໃຫ້ເຫັນວ່າການສົ່ງມອບ ການບໍລິການ ແລະ ແຜນງານທີ່ມີຄຸນນະພາບສູງ ສາມາດເຮັດຂຶ້ນໄດ້ ໂດຍການຮັບຮູ້ຈາກຄວາມຮູ້ ແລະ ປະສົບການ ໃນການເຂົ້າຮ່ວມແຜນງານດັ່ງກ່າວເທົ່ານັ້ນ-ຜູ້ຖືກຄ້າມະນຸດ. ຜູ້ເຂົ້າຮ່ວມກອງປະຊຸມວິຊາການ ໄດ້ແນະນຳວ່າ ການບໍ່ນຳໃຊ້ຄຳສັບ 'ສູນພັກເຊົາແບບກັກຂັງ' ບໍ່ໄດ້ໝາຍຄວາມວ່າມັນບໍ່ມີຈິງໃນພາກປະຕິບັດ. ຖ້າຫາກຜູ້ຖືກເຄາະຮ້າຍຮູ້ສຶກວ່າ 'ຖືກກັກຂັງ' ຫຼື ຖ້າພວກເຮົາຮູ້ສຶກວ່າ ໄດ້ຖືກຕັດຄວາມເປັນອິດສະລະພາບ, ການກັກຂັງນັ້ນມີຈິງ ແລະ ຢູ່ໃນຄວາມຮູ້ສຶກຂອງຜູ້ຖືກເຄາະຮ້າຍ ໂດຍບໍ່ກ່ຽວວ່າສູນພັກເຊົານັ້ນຈະຖືກຮ້ອງວ່າແນວໃດ ໂດຍຜູ້ໃຫ້ການບໍລິການດ້ານສູນພັກເຊົາ.



ປະເທດກຳປູເຈຍ ໄດ້ສ້າງນະໂຍບາຍການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (Prakas ເລກທີ 852), ລວມທັງ ມາດຕະຖານຂັ້ນຕ່ຳ ວ່າດ້ວຍການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (Prakas ເລກທີ 857) (2009) ທີ່ແກ້ໄຂ ການບໍລິການ ແລະ ການເບິ່ງແຍງຜູ້ຖືກເຄາະຮ້າຍໃນສູນພັກເຊົາຂອງລັດຖະບານ ແລະ ອົງການ NGO. ມາດຕາ 43 ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດຂອງປະເທດບຣູໄນ້ ກຳນົດການຈັດຫາສູນພັກເຊົາ ຫຼື ທີ່ພັກຊົ່ວຄາວໃຫ້ແກ່ຜູ້ຖືກເຄາະຮ້າຍ.

[12]ເບິ່ງມາດຕາ 14(8) ຂອງສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ຮັບຮອງໂດຍອາຊຽນ ລົງວັນທີ 21 ພະຈິກ 2015 (https://asean.org/asean-convention- against-trafficking-in-persons-especially- women-and-children/)

[13]ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືເພື່ອຕ້ານການຄ້າມະນຸດ ໃນພາກພື້ນລຸ່ມແມ່ນໍ້າຂອງ, ຮັບຮອງໃນວັນທີ 29 ຕຸລາ 2004. ລັດສະມາຊິກຂອງ COMMIT ລວມມີກຳປູເຈຍ, ຈີນ, ສປປ ລາວ, ມຽນມາ, ໄທ ແລະ ຫວຽດນາມ.

[14]ເບິ່ງເພີ່ມເຕີມທີ່ ມາຣິກາ ແມັກອາດຳ (2022) ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ, ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ. (https://www.aseanact.org/wp- content/uploads/2022/04/Non-Punishment_print_smallsize.pdf)

[15]ແອັນ ກາລາເກີ ແລະ ອີລຽນ ເພຍຊັນ (Anne Gallagher and Elaine Pearson) (2008) “ການກັກຂັງຜູ້ຖືກຄ້າມະນຸດໃນສູນພັກເຊົາ: ວິເຄາະນະໂຍບາຍ ແລະ ກົດໝາຍ’; ແອັນ ກາລາເກີ ແລະ ອີລຽນ ເພຍຊັນ, ‘ອິດສະລະພາບທີ່ມີມູນຄ່າສູງ’: ວິເຄາະກົດໝາຍ ແລະ ນະໂຍບາຍຂອງສູນພັກເຊົາແບບກັກຂັງສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ’, ສິດທິມະນຸດ ປະຈຳໄຕມາດທີ 32 (2010) 73-114.

[16]ເຊີທີ ອາ (Surtees) (2013). ຫຼັງຈາກການຄ້າມະນຸດ: ປະສົບການ ແລະ ສິ່ງທ້າທາຍໃນການກັບຄືນສູ່ສັງຄົມຂອງຜູ້ຖືກຄ້າມະນຸດ ໃນພາກພື້ນລຸ່ມແມ່ນໍ້າຂອງ. ບາງກອກ, ປະເທດໄທ: ສະຖາບັນ UNIAP/NEXUS

[17]ເບິ່ງທີ່ http://kredtrakarnhome.com/Home-USLeng.html

[18]ຮູບແບບສູນພັກເຊົາທີ່ມີຄວາມສຸກ (Happy Shelter) ເປັນການລິເລີ່ມໃໝ່ ໂດຍກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດປະເທດໄທ ເພື່ອສະໜອງສູນພັກເຊົາຊົ່ວຄາວ ແລະໄລຍະຍາວ ໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນຄົນໄທ ແລະບໍ່ແມ່ນຄົນໄທ. ຮູບແບບສູນພັກເຊົາທີ່ມີຄວາມສຸກໄດ້ສຸມໃສ່ການຫຼຸດຜ່ອນຄວາມບອບຊໍ້າດ້ານຈິດໃຈຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເບິ່ງທີ່ https://www.aseanact.org/story/happy-shelters/

[19]ເບິ່ງທີ່ ມາຣິກາ ແມັກອາດຳ (2018). ເສລີພາບໃນການເຄື່ອນຍ້າຍ ຂອງບຸກຄົນທີ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ວິເຄາະກົດໝາຍ, ນະໂຍບາຍ ແລະ ການປະຕິບັດຕົວຈິງໃນພາກພື້ນອາຊຽນ. ແຜນງານ ອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ; ແອັນ ກາລາເກີ ແລະ ອີລຽນ ເພຍຊັນ ແລະ ມາຣິກາ ແມັກອາດຳ (ND). ‘ບັນທຶກຂໍ້ມູນຈາກເສລີພາບພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ແຜນອາຊຽນ-ອົດສະຕຣາລີເພື່ອຕ້ານການຄ້າມະນຸດ

## 3.2 ການສື່ສານກັບຄອບຄົວ ແລະ ບຸກຄົນພາຍນອກ

ການກີດກັນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການເຂົ້າເຖິງໂທລະສັບ ເພື່ອສື່ສານກັບຄອບຄົວ, ໝູ່ເພື່ອນ ແລະ ທະນາຍຄວາມ ເປັນການລະເມີດສິດທິເສລີພາບຂອງເຂົາເຈົ້າ. ການແຍກຜູ້ຖືກເຄາະຮ້າຍອອກຈາກບຸກຄົນທີ່ຢູ່ພາຍນອກສູນພັກເຊົາ ເຖິງວ່າຈະເປັນເຈດຕະນາທີ່ດີ ອາດເບິ່ງຄືວ່າເປັນການລົງໂທດ ແລະ ກັກຂັງ. ມັນເປັນເລື່ອງປົກກະຕິທີ່ຜູ້ຄຸ້ມຄອງສູນພັກເຊົາ ຈະຈຳກັດການຢ້ຽມຢາມຈາກຄອບຄົວ ແລະ ຕິດຕາມການສື່ສານຂອງຜູ້ພັກອາໄສໃນສູນ. ເຖິງຢ່າງໃດກໍຕາມ, ການສຶກສາຄົ້ນຄວ້າສະແດງໃຫ້ເຫັນວ່າ ການບໍ່ອະນຸຍາດໃຫ້ມີການຕິດຕໍ່ກັບສະມາຊິກຄອບຄົວ ສາມາດນຳໄປສູ່ຄວາມກົດດັນດ້ານອາລົມຂອງຜູ້ຖືກເຄາະຮ້າຍ ເນື່ອງຈາກເຂົາເຈົ້າກັງວົນກ່ຽວກັບການເປັນຢູ່ດ້ານເສດຖະກິດ-ສັງຄົມຂອງຄອບຄົວ ໃນເວລາທີ່ຢູ່ໃນສູນພັກເຊົາ. [16] ການແຍກຈາກຄອບຄົວ ອາດເປັນສາເຫດນຳໄປສູ່ການວິຕົກກັງວົນສູງ, ຄວາມອຸກໃຈ ແລະ ທຸກໃຈຂອງຜູ້ຖືກເຄາະຮ້າຍ.

ກອງປະຊຸມປຶກສາຫາລືລະດັບຊາດ ໄດ້ຍົກຫຼາຍຄຳຖາມກ່ຽວກັບການຄອບຄອງ ແລະ ນຳໃຊ້ໂທລະສັບ ໂດຍຜູ້ອາໄສໃນສູນພັກເຊົາ ແລະ ຄວາມສາມາດຂອງເຂົາເຈົ້າໃນການສື່ສານກັບສະມາຊິກຄອບຄົວ. ບໍ່ມີປະເທດໃດໃນອາຊຽນໄດ້ມີການສຳຫຼວດກ່ຽວກັບເອກະສານນີ້ ທີ່ປາກົດວ່າມີຊຸດຄຳແນະນຳລະດັບຊາດກ່ຽວກັບເລື່ອງນີ້; ນອກຈາກນັ້ນມີກົດລະບຽບທີ່ແຕກຕ່າງກັນ ຈາກສູນພັກເຊົາແຫ່ງ ໜຶ່ງໄປຫາສູນພັກເຊົາອື່ນພາຍໃນປະເທດ.

ໃນປະເທດໄທ, ສູນພັກເຊົາຂອງລັດ ມີການຜ່ອນຜັນລະບຽບໃນການນຳໃຊ້ໂທລະສັບ, ມີການອະນຸຍາດໃຫ້ຜູ້ພັກອາໄສ ນຳໃຊ້ໂທລະສັບໄດ້ຢ່າງອິດສະລະໃນຊົ່ວໂມງເຮັດວຽກ. ຜູ້ພັກອາໄສ ສາມາດນຳໃຊ້ສັນຍານອິນເຕີເນັດຂອງສູນພັກເຊົາ ນຳໃຊ້ເພື່ອພັດທະນາທັກສະໃນການເຮັດວຽກ ຫຼື ຕິດຕາມຂ່າວຈາກບ້ານຂອງເຂົາເຈົ້າ. ໃນອະດີດເຂົາເຈົ້າສາມາດນຳໃຊ້ໂທລະສັບໄດ້ແຕ່ສອງມື້ຕໍ່ອາທິດ. ສູນຊ່ວຍເຫຼືອແມ່ຍິງໃນອິນໂດເນເຊຍ (A women’s crisis centre) ໃຫ້ທີ່ພັກອາໄສ 14 ມື້ ແກ່ແມ່ຍິງ ແລະ ເດັກຍິງທີ່ຕ້ອງການ, ໄດ້ກ່າວວ່າ ໃນຊ່ວງເວລາດັ່ງກ່າວ ຜູ້ພັກອາໄສ ບໍ່ອະນຸຍາດໃຫ້ຄອບຄອງ ຫຼື ນຳໃຊ້ໂທລະສັບຂອງຕົນ. ໃນບາງກໍລະນີ, ໂທລະສັບ ໄດ້ຖືກນຳໃຊ້ໂດຍຜູ້ຄ້າມະນຸດ ຫຼື ຜູ້ຖືກເຄາະຮ້າຍເອງ ເພື່ອເປັນວິທີການໃນການກໍ່ອາຊະຍາກຳ ແລະ ດັ່ງນັ້ນ, ຈິ່ງຖືກຍຶດໄວ້ເປັນໜຶ່ງໃນຫຼັກຖານທາງນິຕິວິທະຍາ. ຕົວຢ່າງ, ຜູ້ຖືກເຄາະຮ້າຍຈະກັງວົນກ່ຽວກັບການສົນທະນາໃນຂໍ້ຄວາມ ໃນໂທລະສັບຂອງຕົນ ເຊິ່ງຜູ້ຖືກເຄາະຮ້າຍໄດ້ໃຫ້ “ຄວາມຍິນຍອມ” ແກ່ຜູ້ກະທຳຜິດ. ດັ່ງນັ້ນ, ອີງຕາມສູນຊ່ວຍເຫຼືອ, ການເອົາໂທລະສັບອອກຈາກຜູ້ຖືກເຄາະຮ້າຍ ຊ່ວຍໃນການປ້ອງກັນຜູ້ຖືກເຄາະຮ້າຍຈາກຄວາມກົດດັນຫຼາຍເກີນໄປຈາກສະຖານະການຂອງເຂົາເຈົ້າ.

ພາກສ່ວນທີ່ກ່ຽວຂ້ອງຂອງອາຊຽນ ມີຄວາມເຫັນດີວ່າ ເປັນເຫດຜົນດ້ານຄວາມປອດໄພ ໃນການຍຶດໂທລະສັບຂອງຜູ້ຖືກເຄາະຮ້າຍ ໂດຍສິ່ງທີ່ສຳຄັນທີ່ສຸດແມ່ນຄວາມສາມາດຂອງຜູ້ຄ້າມະນຸດ ໃນການລະບຸຕຳ ແໜ່ງຂອງຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍອາດຈະເປີດເຜີຍສູນພັກເຊົາແກ່ຜູ້ຄ້າມະນຸດ ໂດຍບໍ່ຕັ້ງໃຈ ຫຼື ຜູ້ຄ້າມະນຸດ ອາດຈະລະບຸສູນພັກເຊົາ ດ້ວຍການນຳໃຊ້ແອັບຕິດຕາມທີ່ຕິດຕັ້ງໄວ້ໃນໂທລະສັບມືຖືຂອງຜູ້ຖືກເຄາະຮ້າຍເອງ. ຜູ້ຄຸ້ມຄອງສູນພັກເຊົາ ແລະ ນັກສັງຄົມສົງເຄາະ ແມ່ນມີຄວາມລະມັດລະວັງທີ່ຜູ້ຖືກເຄາະຮ້າຍຈະຕິດຕໍ່ກັບຜູ້ຄ້າມະນຸດ ຫຼື ຄອບຄົວຂອງເຂົາເຈົ້າ ໂດຍສະເພາະຢ່າງຍິ່ງ ຖ້າຫາກ ຜູ້ຖືກເຄາະຮ້າຍຮູ້ເຫັນຕໍ່ກັບການລະເມີດ ແລະ ການຂູດຮີດ. ສູນພັກເຊົາ ມີຄວາມກັງວົນວ່າມັນຈະກະທົບຕໍ່ກັບຂະບວນການຟື້ນຟູຂອງຜູ້ຖືກເຄາະຮ້າຍ ລວມທັງ ເຈດຈຳນົງໃນການສືບຕໍ່ເຂົ້າຮ່ວມໃນຂະບວນຍຸຕິທຳທາງອາຍາ. ຜູ້ປະຕິບັດຕົວຈິງ ໄດ້ເນັ້ນໃຫ້ເຫັນເຖິງຄວາມຫຍຸ້ງຍາກໃນການສ້າງຄວາມດຸ່ນດ່ຽງລະຫວ່າງ ຄວາມສ່ຽງດ້ານຄວາມປອດໄພ ແລະ ການເປັນຢູ່ທີ່ດີຂອງຜູ້ຖືກເຄາະຮ້າຍ ແລະ ສິດຂອງຜູ້ຖືກເຄາະຮ້າຍໃນການສື່ສານກັບຄອບຄົວ ແລະ ບຸກຄົນໃກ້ຊິດຂອງເຂົາເຈົ້າ. ອົງການຈັດຕັ້ງ NGO ຂອງອິນໂດເນເຊຍ ໄດ້ມີການລາຍງານ ໂດຍຊີ້ໃຫ້ເຫັນເຖິງລະບຽບການນຳໃຊ້ໂທລະສັບ ແລະ ໂທລະສັບມືຖືພາຍໃນສູນພັກເຊົາ ແລະ ຄວາມສ່ຽງໃນການກະທຳດັ່ງກ່າວ. ຜູ້ຖືກເຄາະຮ້າຍ ໃຫ້ຄວາມຍິນຍອມໃນການຍຶດໂທລະສັບຂອງເຂົາເຈົ້າ. ຖ້າມີຄວາມຈຳເປັນ ຜູ້ຢູ່ອາໄສໃນສູນພັກຊົາ ຈະໄດ້ຮັບໂທລະສັບມືຖືໜ່ວຍໃໝ່ ເພື່ອເປັນແນວທາງໃນການຫຼຸດຜ່ອນຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍ ຈະຖືກຕິດຕໍ່ຈາກຜູ້ຄ້າມະນຸດ.

ໃນກໍລະນີຂອງເດັກ, ໄດ້ມີການລາຍງານ ຫຼັກການສິດ ແລະ ຜົນປະໂຫຍດສູງສຸດຂອງເດັກ ເພື່ອເປັນແນວທາງໃນການປະຕິບັດຕໍ່ເດັກ ທີ່ເປັນຜູ້ຖືກເຄາະຮ້າຍໃນສູນພັກເຊົາ. ຜູ້ໃຫ້ບໍລິການດ້ານສູນພັກເຊົາ ໄດ້ເນັ້ນໜັກໃຫ້ເຫັນເຖິງສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼັກການດັ່ງກ່າວໃນພາກປະຕິບັດຕົວຈິງ. ອີກດ້ານໜຶ່ງ, ຕ້ອງໄດ້ປະເມີນວ່າການກັບຄືນສູ່ຄອບຄົວຂອງເດັກ ເປັນທາງເລືອກທີ່ດີທີ່ສຸດສຳລັບເດັກ. ສິ່ງນີ້ ເປັນຂະບວນການທີ່ຊັບຊ້ອນ ໂດຍຂຶ້ນກັບສະພາບຂອງເດັກ ແລະ ທາງເລືອກອື່ນທີ່ມີຢູ່. ນອກນັ້ນ, ຂັ້ນຕອນຂອງລະບົບທາງການທີ່ຫຼາຍເກີນໄປ ແລະ ການປະສານງານທີ່ຍັງເຮັດບໍ່ໄດ້ດີ ລະຫວ່າງ ຜູ້ໃຫ້ບໍລິການ ໄດ້ສ້າງຄວາມກົດດັນ ແລະ ສັບສົນໃຫ້ແກ່ທຸກຄົນ. ອົງການຈັດຕັ້ງ NGO ຂອງອິນໂດເນເຊຍ ໄດ້ແບ່ງປັນປະສົບການຂອງເດັກ ທີ່ຖືກສົ່ງຕໍ່ຈາກສູນພັກເຊົາຂອງເຂົາເຈົ້າ ໄປຍັງສູນປົກປ້ອງທີ່ພັກເຊົາ ແລະ ດູແລຄວາມບອບຊໍ້າດ້ານຈິດໃຈ (RPTC). ຄອບຄົວຂອງເດັກ ຖືກຫ້າມບໍ່ໃຫ້ຢ້ຽມຢາມ ຫຼື ລົມກັບເດັກ. ອົງການ NGO ບໍ່ສາມາດເຮັດຫຍັງໄດ້ ເນື່ອງຈາກຕ້ອງປະຕິບັດຕາມຫຼັກການດ້ານຄວາມປອດໄພ ທີ່ກຳນົດໂດຍ RPTC ແລະ ສິ່ງຜົນໃຫ້ອົງການເຈົ້າຖືກຕຳນິຈາກຄອບຄົວ ທີ່ຫ້າມບໍ່ໃຫ້ຄອບຄົວສື່ສານກັບລູກຂອງເຂົາເຈົ້າ.

ຜູ້ຕາງໜ້າຈາກສູນປົກປ້ອງ ແລະ ພັດທະນາອາຊີບເກດຕະການ[17] ໃນປະເທດໄທ ໄດ້ແບ່ງປັນວ່າ ການແຜ່ລະບາດຂອງພະຍາດ ໄດ້ປ່ຽນລະບຽບ ຂອງຜູ້ພັກອາໄສໃນສູນພັກເຊົາໃນການຕິດຕໍ່ສື່ສານກັບບຸກຄົນພາຍນອກ. ກ່ອນ COVID-19, ພໍ່ແມ່ ໄດ້ຖືກອະນຸຍາດໃຫ້ມາຢ້ຽມຢາມ ແລະ ໂອ້ລົມກັບລູກຂອງຕົນທີ່ສູນ, ສະນັ້ນ ຈຶ່ງບໍ່ຈຳປັນທີ່ຜູ້ພັກອາໄສ ຈະມີໂທລະສັບມືຖື. ໃນກໍລະນີທີ່ພໍ່ແມ່ ຫາກອາໄສຢູ່ໄກຈາກສູນ, ພະນັກງານຈະກະກຽມ ວັນທີ ແລະ ເວລາໃຫ້ແກ່ເດັກ ໃນການໂທຫາພໍ່ແມ່ຂອງເຂົາເຈົ້າ ດ້ວຍການນຳໃຊ້ໂທລະສັບຂອງສູນພັກເຊົາ.

ການສ້າງຕົວແບບ ສູນພັກເຊົາທີ່ມີຄວາມສຸກ (Happy Shelter),[18] ສູນ ໄດ້ຮັບຮອງການນຳໃຊ້ ລາຍແອັບພິເຄຊັນ (LINE application) ມາໃຊ້ໃນການສົນທະນາທາງໄກ ເຊິ່ງເຮັດໃຫ້ຜູ້ພັກອາໄສ ໄດ້ເຫັນຄອບຄົວຂອງເຈົ້າເຮົາ ແລະ ເຮັດໃຫ້ເຂົາເຈົ້າມີຄວາມສຸກຫຼາຍຂຶ້ນ ແລະ ໃຫ້ຄວາມຮ່ວມມືຫຼາຍຂຶ້ນ. ສູນພັກເຊົາ ກຳນົດໃຫ້ພະນັກງານຕ້ອງຢູ່ນຳ ຖ້າຫາກຜູ້ໃຊ້ໂທລະສັບຫາກ ມີອາຍຸຕ່ຳກວ່າ 18 ປີ. ສິ່ງນີ້ ກໍເພື່ອຮັບປະກັນວ່າ ພະນັກງານ ສາມາດໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນຕໍ່ກັບການເປັນຢູ່ທີ່ດີຂອງເດັກໄດ້ ຖ້າຫາກພໍ່ແມ່ ມີການສື່ສານທີ່ບໍ່ດີກັບເດັກ.



## 3.3 ເຫດຜົນໃນການຈຳກັດເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍ

ບົດລາຍງານຂອງແຜນງານ ASEAN-ACT ປີ 2018 ພົບວ່າການແຊກແຊງຕໍ່ກັບ ເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍ ມັກຈະມີເຫດຜົນບົນພື້ນຖານການໂຕ້ແຍ່ງແບບກວ້າງຂວາງ ສາມດ້ານເຊັ່ນ: ການປົກປ້ອງ, ການຊ່ວຍເຫຼືອ ແລະ ການດຳເນີນຄະດີ. [19]

ບັນດາປະເທດໃນອາຊຽນ ທີ່ໄດ້ເຂົ້າຮ່ວມ, ເຫດຜົນ ການປົກປ້ອງ ຍັງເປັນເຫດຜົນທີ່ນິຍົມສູງສຸດ ໃນການຮັກສາເອົາຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ໃນສູນພັກເຊົາແບບປິດ ຫຼື ແບບເຄິ່ງປິດ. ເຫດຜົນໃນການປົກປ້ອງຜູ້ຖືກເຄາະຮ້າຍ ແມ່ນມາຈາກຄວາມເຊື່ອທີ່ວ່າ ຜູ້ຖືກເຄາະຮ້າຍຈຳເປັນຕ້ອງຖືກປົກປ້ອງຈາກຜູ້ຄ້າມະນຸດ ແລະ ບຸກຄົນອື່ນໆ ທີ່ມີສ່ວນກ່ຽວຂ້ອງກັບການຄ້າມະນຸດ ລວມທັງ ນາຍໜ້າ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ ໂດຍມີການຕັ້ງສົມມຸດຕິຖານວ່າ ຜູ້ຖືກເຄາະຮ້າຍທີ່ສາມາດເຄື່ອນຍ້າຍໄດ້ຢ່າງອິດສະລະ ຈະໄດ້ຮັບບາດເຈັບ, ຖືກຂ້າ ຫຼື ຖືກຫ້າມບໍ່ໃຫ້ການຕໍ່ກັບຜູ້ຄ້າມະນຸດ. ນອກນັ້ນ, ຍັງສົມມຸດຕິຖານວ່າ ຜູ້ຖືກເຄາະຮ້າຍ ທີ່ເຄື່ອນຍ້າຍຢ່າງອິດສະລະ ຈະມີການຕັດສິນໃຈທີ່ບໍ່ດີ, ຫຼົບໜີ ແລະ ກັບຄືນໄປຫາຜູ້ຄ້າມະນຸດ ແລະ/ຫຼື ຮູບແບບການຂູດຮີດ ຫຼື ເງື່ອນໄຂການເຮັດວຽກ.

ນອກນັ້ນ, ເຫດຜົນໃນການປົກປ້ອງ ທີ່ຜູ້ຖືກຄ້າມະນຸດ ຈຳເປັນຕ້ອງອາໄສຢູ່ໃນສູກພັກເຊົາ ເພື່ອປ້ອງກັນເຂົາເຈົ້າຈາກການທຳຮ້າຍຕົນເອງ ຫຼື ຜູ້ອື່ນ. ຜູ້ຖືກເຄາະຮ້າຍຫຼາຍຄົນ ພົບກັບບັນຫາດ້ານຈິດຕະວິທະຍາ ແລະ ສຸຂະພາບຈິດ ເຊິ່ງເປັນຜົນມາຈາກການຖືກທາລຸນ ແລະ ມີຄວາມບອບຊ້ຳດ້ານຈິດໃຈ. ອົງການ NGO ທີ່ເຂົ້າຮ່ວມກອງປະຊຸມປຶກສາຫາລືລະດັບຊາດ ໄດ້ອ້າງວ່າມີຄວາມຈຳເປັນທີ່ຕ້ອງຕິດຕາມຢ່າງໃກ້ຊິດຕໍ່ກັບຜູ້ຖືກເຄາະຮ້າຍບາງຄົນໃນອະດີດທີ່ເຄີຍຖືກຄວາມຮຸນແຮງດ້ານຮ່າງກາຍ ມີແນວໂນ້ມທີ່ຈະທຳຮ້າຍຕົນເອງ ຫຼື ຖືກບັງຄັບໃຫ້ມີເພດສຳພັນຫຼາຍເກີນໄປ (ການເສບຕິດການມີເພດສຳພັນ). ເຫດຜົນໃນການປົກປ້ອງ ໄດ້ຮັບການເສີມສ້າງດ້ວຍເຫດຜົນຈາກການຂົ່ມຂູ່ ແລະ ການຄຸກຄາມຈາກຜູ້ຄ້າມະນຸດ ແລະ ຜູ້ອື່ນຕໍ່ກັບຜູ້ຖືກເຄາະຮ້າຍ (ລວມທັງ ພະນັກງານຂອງສູນພັກເຊົາ) ໂດຍສະເພາະ ຖ້າຫາກເຂົາເຈົ້າຫາກມີສ່ວນຮ່ວມໃນການສ້າງກິດຈະກຳທາງອາຍາ.

ນັກສັງຄົມສົງເຄາະ ແລະ ຜູ້ຄຸ້ມຄອງສູນພັກເຊົາ ໄດ້ບອກເຖິງຄວາມກັງວົນຂອງເຂົາເຈົ້າ ໃນພາກປະຕິບັດຕົວຈິງ ໃນການຮັບປະກັນຄວາມປອດໄພ ແລະ ສະຫວັດດີການຂອງຜູ້ຖືກເຄາະຮ້າຍ ຖ້າເຂົາເຈົ້າບໍ່ອາໄສຢູ່ໃນສູນພັກເຊົາ. ຄວາມຈຳເປັນໃນການປົກປ້ອງ ຍິ່ງມີຄວາມຊັດເຈນຫຼາຍຂຶ້ນ ໃນກໍລະນີຂອງເດັກ ແລະ ເຍົາວະຊົນ ຜູ້ທີ່ບໍ່ມີສິດທິຄືກັບຜູ້ໃຫຍ່ ແລະ ມີຄວາມສ່ຽງຫຼາຍກວ່າທີ່ຈະຖືກຫຼອກລວງ ແລະ ລ່ວງລະເມີດ. ພາກສ່ວນທີ່ກ່ຽວຂ້ອງຫຼາຍພາກສ່ວນ ຍອມຮັບວ່າ ມັນເປັນໄປບໍ່ໄດ້ທີ່ຜູ້ຖືກເຄາະຮ້າຍ ຈະມີອິດສະລະພາບໃນການເຂົ້າ-ອອກ ສູນພັກເຊົາ ໃນເວລາໃດກໍໄດ້ຕາມທີ່ເຂົາເຈົ້າຕ້ອງການ. ຜູ້ເຂົ້າຮ່ວມຄົນລາວທ່ານໜຶ່ງ ໄດ້ກ່າວວ່າ ຈຳເປັນຕ້ອງໄດ້ຄວບຄຸມ ການເຄື່ອນໄຫວຂອງຜູ້ຖືກເຄາະຮ້າຍ ເນື່ອງຈາກວ່າ “ພວກເຮົາມີຄວາມຮັບຜິດຊອບຕາມກົດໝາຍຕໍ່ກັບຊີວິດຂອງເຂົາເຈົ້າ ໃນເວລາທີ່ອາໄສຢູ່ກັບພວກເຮົາ”. ນີ້ແມ່ນທັດສະນະທີ່ສະທ້ອນກັບຜູ້ຄຸ້ມຄອງສູນພັກເຊົາຫຼາຍໆແຫ່ງ ໃນບັນດາປະເທອາຊຽນ. ພາກສ່ວນທີ່ກ່ຽວຂ້ອງ ຍັງໄດ້ຢ້ຳຄືນອີກ ຕໍ່ກັບສິ່ງທ້າທາຍໃນການສ້າງຄວາມສົມດຸນ ລະຫວ່າງຄວາມຕ້ອງການຫຼາຍປະການກັບຄວາມປອດໄພ, ຄວາມໝັ້ນຄົງ ແລະ ເປັນເອກະລາດຂອງຜູ້ຖືກເຄາະຮ້າຍ.

ເຖິງວ່າຈະເປັນເຈດຕະນາທີ່ດີ, ວິທີການທີ່ອີງໃສ່ເຫດຜົນໃນການປົກປ້ອງ ສ່ຽງຕໍ່ການຕັດສິນໃຈດ້ວຍຕົນເອງ ແລະ ຄວາມເປັນເອກະລາດຂອງຜູ້ຖືກເຄາະຮ້າຍ. ການວິໄຈກ່ຽວກັບແມ່ຍິງທີ່ອາໄສຢູ່ໃນສູນພັກເຊົາ ສະແດງໃຫ້ເຫັນວ່າ ເຂົາເຈົ້າມັກຈະຖືກເບິ່ງວ່າ ບໍ່ມີຄວາມສາມາດໃນການນຳໃຊ້ດຸນພິນິດຂອງຕົນເອງ ແລະ ແຕ່ລະຄົນບໍ່ມີອິດສະລະພາບໃນການເລືອກ.[20] ນີ້ແມ່ນຄວາມສ່ຽງ ຕໍ່ກັບເງື່ອນໄຂທີ່ອາດຈະສ້າງການບັງຄັບ ແລະ ປະຕິເສດຕໍ່ການດຳເນີນການຂອງໜ່ວຍງານທີ່ຜູ້ຄ້າມະນຸດດຳເນີນ. ນອກຈາກນີ້ ຍັງກົງກັນຂ້າມກັບຮູບແບບການການເບິ່ງແຍງຄວາມບອບຊ້ຳທາງດ້ານຈິດໃຈ ທີ່ມີເປົ້າໝາຍໃນການຟື້ນຟູຄວາມເປັນເອກະລາດ ແລະ ແກ້ໄຂຄວາມບໍ່ຍຸຕິທຳ ເຊິ່ງພາກສ່ວນຕ່າງໆໃນອາຊຽນ ມີຄວາມໝາຍໝັ້ນ ທີ່ຈະຈັດຕັ້ງປະຕິບັດ.

ໃນລັກສະນະດຽວກັນ, ເຫດຜົນການປົກປ້ອງ ໄດ້ຂັດຂວາງພາກສ່ວນທີ່ກ່ຽວຂ້ອງ ຈາກການຈັດຕັ້ງປະຕິບັດຮູບແບບສູນພັກເຊົາ ທີ່ອີງໃສ່ສິດທິ ຢ່າງສະໝ່ຳສະເໝີ. ຜູ້ຖືກເຄາະຮ້າຍ ທີ່ມີສິດ ແລະ ຜົນປະໂຫຍດ ບໍ່ໄດ້ຮັບການປົກປ້ອງ ຫຼື ບໍ່ໄດ້ນຳໃຊ້ຈະສືບຕໍ່ຫຼົບໜີອອກຈາກສູນພັກເຊົາ. ໂດຍບໍ່ກ່ຽວຂ້ອງກັບວ່າ ຈະເປັນການພິຈາລະນາວ່າ ເປັນສູນທີ່ 'ເປີດ', 'ປິດ' ຫຼື 'ເຄິ່ງປິດ' ສູນພັກເຊົາທີ່ອີງໃສ່ສິດທິ ບໍ່ຄວນກີດຂວາງເສລີພາບໃນການເຄື່ອນຍ້າຍ ຫຼື ເສລີພາບຂອງຜູ້ຖືກເຄາະຮ້າຍ. ເຂົາເຈົ້າຄວນຈະມີສິດທີ່ຈະອອກຈາກສູນ ຖ້າຫາກເຂົາເຈົ້າສາມາດເຮັດໄດ້ ໂດຍມີຄວາມປອດໄພ.

*ຜູ້ຍິງບາງຄົນ ໄດ້ຖືກສົ່ງຕໍ່ໄປຍັງສະຖານທີ່ເບິ່ງແຍງຜູ້ພັກອາໄສ ເຊິ່ງມີລັກສະນະຄືກັບສູນກັກຂັງ. ຢູ່ບ່ອນນີ້, ການເຄື່ອນໄຫວຂອງຜູ້ຢູ່ອາໄສ ຖືກຈຳກັດ. ຜູ້ຍິງເຫຼົ່ານີ້ ຕໍ່ຕ້ານແນວຄິດທີ່ຈະອາໄສຢູ່ນີ້ ເພາະເຂົາເຈົ້າກັງວົນວ່າ ເຂົາເຈົ້າສາມາດອອກຈາກສູນ ຫຼື ຕິດຕໍ່ກັບຄອບຄົວໄດ້ ຫຼື ບໍ່. ຫຼາຍຄົນ ເປັນຄົນຫາລ້ຽງຄອບຄົວ ແລະ ຄອບຄົວຂອງເຂົາເຈົ້າແມ່ນເພິ່ງພາອາໄສເຂົາເຈົ້າ ຕໍ່ກັບຄວາມຕ້ອງການຂັ້ນພື້ນຖານ. ເຂົາເຈົ້າເລີ່ມປະຕິບັດທີ່ແຂງກະດ້າງຕໍ່ກັບພະນັກງານ ຍ້ອນບໍ່ຍິນຍອມທີ່ຈະອາໄສຢູ່ຫັ້ນ. ເຂົາເຈົ້າເລີ່ມຂາດຄວາມໄວ້ວາງໃຈຕໍ່ກັບນັກສັງຄົມສົງເຄາະຍ້ອນລັກສະນະການຖືກສຳພາດ ຫຼື ການປະຕິບັດ ໂດຍເຈົ້າໜ້າໃນ ເຄື່ອງແບບທີ່ສະຖານີຕຳຫຼວດ.*

*--- ນັກສັງຄົມສົງເຄາະ ແລະ ຫົວໜ້າໜ່ວຍງານດ້ານການພັດທະນາ ແລະ ເພດພາວະຂອງພະແນກຄຸ້ມຄອງ ແລະ ບໍລິການດ້ານສັງຄົມຂອງໂຄງການ Pantawid Pamilyang Pilipino, ປະເທດຟີລິບປິນ, ກອງປະຊຸມປຶກສາຫາລືລະດັບຊາດຂອງຟີລິປິນ, ວັນທີ 14 ທັນວາ 2021.*



ເຫດຜົນຂອງ **ການຊ່ວຍເຫຼືອ** ສັນນິຖານວ່າ ການສະໜັບສະໜູນ ແລະ ການບໍລິການ ການເບິ່ງແຍງດ້ານຈິດຕະ-ສັງຄົມ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການພັດທະນາທັກສະ ແມ່ນໄດ້ສະໜອງໃຫ້ແກ່ຜູ້ຖືກຄ້າມະນຸດ ແລະ ສິ່ງທີ່ດີທີ່ສຸດໃນບໍລິບົດຂອງສູນພັກເຊົາ. ໃນມຸມມອງຂອງຜູ້ໃຫ້ການບໍລິການບາງທ່ານ, ສະຖານທີ່ຄອບຄຸມເຊັ່ນ ສູນພັກເຊົາ ສາມາດໃຫ້ບໍລິການ ເປັນສະຖານທີ່ປອດໄພ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອປິ່ນປົວ ແລະ ຟື້ນຟູ. ສໍາລັບຜູ້ທີ່ຕ້ອງການ ການເບິ່ງແຍງເປັນພິເສດ, ສູນພັກເຊົາ ເປັນສະຖານທີ່ທີ່ດີ ໃນການເຂົ້າເຖິງການບໍລິການດັ່ງກ່າວ; ການບໍລິການດັ່ງກ່າວ ອາດຈະບໍ່ເຂົ້າເຖິງໄດ້ ຖ້າຫາກຜູ້ພັກອາໄສ ຫາກພັກອາໄສຢູ່ນອກສູນພັກເຊົາ. ປະເທດໄທ ກໍາລັງປະສົບກັບສິ່ງທ້າທາຍ ຕໍ່ກັບເຫດຜົນໃນການຊ່ວຍເຫຼືອ ທັງສະຖານທີ່ພັກເຊົາທີ່ເປັນຂອງລັດ ແລະ ຂອງອົງການຈັດຕັ້ງສາກົນ ທີ່ໃຫ້ການບໍລິການ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍ ເຖິງວ່າ ເຂົາເຈົ້າຈະບໍ່ຕ້ອງການທີ່ຈະອາໄສຢູ່ໃນສູນພັກເຊົາ. ໃຫ້ຄວາມສໍາຄັນກັບການດໍາເນີນການປະເມີນຄວາມສ່ຽງຢ່າງລະອຽດ ແລະ ຮັບປະກັນວ່າຜູ້ຖືກເຄາະຮ້າຍ ມີຄວາມປອດໄພ ຖ້າຫາກເຂົາເຈົ້າ ເລືອກທີ່ຈະບໍ່ຢູ່ສູນພັກເຊົາ.

ເຫດຜົນ **ການດໍາເນີນຄະດີ** ເຫັນວ່າ ມີຄວາມຖືກຕ້ອງຕາມກົດໝາຍ ໃນຂໍ້ເທັດຈິງທີ່ວ່າ ການປະກົດຕົວຂອງຜູ້ຖືກເຄາະຮ້າຍ-ພະຍານ ຍັງຈໍາເປັນໃນຂະບວນຍຸຕິທໍາທາງອາຍາ ໃນຫຼາຍໆປະເທດໃນອາຊຽນ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກໃຫ້ພັກອາໄສຢູ່ໃນສູນພັກເຊົາ ຕະຫຼອດໄລຍະເວລາຂອງຂະບວນການດໍາເນີນຄະດີ ເພື່ອໃຫ້ເຂົາເຈົ້າສາມາດຖືກຮຽກຕົວໄດ້ຕະຫຼອດເວລາ ເພື່ອສະເໜີຫຼັກຖານ ໃນການຕໍ່ສູ້ກັບຜູ້ກະທໍາຜິດ.ນອກຈາກນີ້, ເຂົາເຈົ້າຍັງຖືກກີດກັນ ຈາກການອອກຈາກສູນ ເນື່ອງຈາກ ເຂົາເຈົ້າມີແນວໂນ້ມບໍ່ຕ້ອງການຮ່ວມມືກັບໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ໜ່ວຍງານຕຸລາການ ພາຍຫຼັງທີ່ກັບຄືນສູ່ຄອບຄົວແລ້ວ. ພາກສ່ວນທີ່ກ່ຽວຂ້ອງ ລະບຸວ່າ ມີບັນຫາທາງດ້ານການເງິນ, ການປ່ຽນແປງທາງສັງຄົມ ແລະ ສະຖານະສ່ວນບຸກຄົນ, ຄວາມກົດດັນຈາກການຖືກສັງຄົມປະນາມ ແລະ ມີຄວາມບອບຊໍ້າທາງຈິດໃຈ ລວມທັງ ຄວາມກົດດັນ ເຊິ່ງເປັນເຫດຜົນບາງປະການ ທີ່ນໍາໄປສູ່ການຖອນໂຕຂອງ ຜູ້ຖືກເຄາະຮ້າຍອອກຈາກຂະບວນການທາງກົດໝາຍ.

ຄວາມຊັກຊ້າໃນຂະບວນຍຸຕິທຳທາງອາຍາ ສິ່ງຜົນໃຫ້ຜູ້ຖືກເຄາະຮ້າຍຍັງຖືກຄຸ້ມຄອງ ແລະ ຢູ່ໃນສູນພັກເຊົາ. ການຕັດສິນຄະດີອາດຈະໃຊ້ເວລາຫຼາຍປີ ໂດຍບໍ່ມີການຮັບປະກັນຜົນໄດ້ຮັບທາງບວກທີ່ປະຈັກຕາ ແກ່ຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ. ຈາກການຮັບຮູ້ສິ່ງດັ່ງກ່າວນີ້, ບາງປະເທດໃນອາຊຽນ ໄດ້ພະຍາຍາມທີ່ຈະຢຸດຕິການເຊື່ອມໂຍງການປົກປ້ອງຜູ້ຖືກເຄາະຮ້າຍອອກຈາກເຈດຈຳນົງຂອງເຂົາເຈົ້າ ໃນການມີສ່ວນຮ່ວມໃນການດຳເນີນຄະດີ. ປະເທດຟີລິບປິນ ແລະ ປະເທດໄທເປັນສອງປະເທດຕົວຢ່າງທີ່ດີ ທີ່ຜູ້ຖືກເຄາະຮ້າຍບໍ່ຈຳເປັນຕ້ອງຢູ່ໃນສູນພັກເຊົາ ເພື່ອດຳເນີນຄະດີ.

ພາກສ່ວນທີ່ກ່ຽວຂ້ອງຂອງໄທ ໄດ້ແບ່ງປັນວ່າ ມີການສັນນິຖານທົ່ວໄປມາດົນແລ້ວວ່າ ຜູ້ຖືກເຄາະຮ້າຍ ຈະຫຼົບໜີຈາກການສືບສວນ-ສອບສວນ ແລະ ຂະບວນການທາງກົດໝາຍ ຖ້າເຂົາເຈົ້າເຮັດໄດ້, ສິ່ງຜົນເຮັດໃຫ້ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍຂອງໄທ ມັກຈະໃຫ້ຜູ້ຖືກເຄາະຮ້າຍ ທີ່ເປັນພະຍານ ຢູ່ໃນສູນພັກເຊົາ.

ປະເທດໄທ ໄດ້ມີການປັບປຸງລະບົບສານຂອງຕົນ ໂດຍມີການພິຈາລະນາ ແລະ ອະນຸຍາດໃຫ້ປະກັນຕົວແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນອະດີດ, ມີການລາຍງານວ່າ ການຮ້ອງຂໍການປະກັນຕົວ ມີຄວາມຫຍຸ້ງຍາກ. ເພື່ອຊອກຫາການແກ້ໄຂແບບຍືນຍົງ, ພາກສ່ວນທີ່ກ່ຽວຂ້ອງຂອງໄທ ໄດ້ມີການປຶກສາຫາລື ຄວາມເປັນໄປໄດ້ ກັບກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດ (MSDHS) ເຊິ່ງເປັນໜ່ວຍງານຫຼັກໃນການຊ່ວຍເຫຼືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຮັບຮອງຄວາມເປັນໄປໄດ້ຂອງຜູ້ຖືກເຄາະຮ້າຍທີ່ຈະຫຼົບໜີຈາກຂະບວນການທາງກົດໝາຍ ແລະ ສານ. ວິທີການດັ່ງກ່າວ ໝາຍຄວາມວ່າຜູ້ຖືກເຄາະຮ້າຍ ບໍ່ໄດ້ສະໝັກໃຈ ແລະ ບໍ່ມີເຫດຜົນທີ່ຈະຢູ່ໃນສູນພັກເຊົາເປັນເວລາດົນນານ, ເຮັດໃຫ້ຫຼຸດແຮງຈູງໃຈຂອງເຂົາເຈົ້າ ໃນການຮ່ວມມືໃນການດຳເນີນຄະດີຕໍ່ກັບຜູ້ກະທຳຜິດ ບໍ່ວ່າໃນກໍລະນີໃດກໍຕາມ.

## 3.4 ການນຳໄປສູ່ ສູນພັກເຊົາທີ່ຄອບຄຸມຮອບດ້ານຫຼາຍຂຶ້ນ

ບົດລາຍງານຂອງແຜນງານ ASEAN-ACT ປີ 2018 ພົບວ່າ ການປະຕິບັດຢູ່ສູນພັກເຊົາໃນອາຊຽນ ມີຫຼາຍເພດພາວະຕ່າງໆ (highly gendered).[21] ການປະຕິບັດຂອງສູນພັກເຊົາ ທີ່ແຜ່ຫຼາຍນັ້ນ ສະທ້ອນໃຫ້ເຫັນສິ່ງຕ່າງໆ ເຊັ່ນ ສືບຕໍ່ຂາດແຄນສູນພັກເຊົາທີ່ເໝາະສົມແກ່ຄົນພິການ, ຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ແລະ ບຸກຄົນທີ່ມີເພດພາວະທີ່ແຕກຕ່າງກັນ. ພາກສ່ວນທີ່ກ່ຽວຂ້ອງ ບາງພາກສ່ວນ ໄດ້ລາຍງານວ່າ ພວກເຂົາຕ້ອງຫຼີບໜີ ແລະ ສົ່ງຜູ້ຖືກເຄາະຮ້າຍເພດຊາຍ ກັບບ້ານ ຍ້ອນພວກເຂົາບໍ່ມີຄວາມສາມາດໃນການຈັດຫາບ່ອນພັກເຊົາໃຫ້ໄດ້. ສູນພັກເຊົາຫຼາຍບ່ອນໃນອາຊຽນ, ຜູ້ພັກອາໄສເພດຍິງ ຍັງໄດ້ຮັບການຝຶກທັກສະວຽກພາຍໃນແບບດັ້ງເດີມຂອງແມ່ຍິງ ເຊັ່ນ: ຫັດຖະກຳ, ຫຍິບ-ແສ່ວ, ປຸງແຕ່ງ ແທນທີ່ຈະຝຶກທັກສະທີ່ເຂົາເຈົ້າສົນໃຈ, ຄວາມຖະໜັດ ຫຼື ສອດຄ່ອງຕາມຄວາມຕ້ອງການຂອງຕະຫຼາດແຮງງານ. ເນື່ອງຈາກການຈຳກັດ ໂອກາດທາງວິຊາຊີບໄວ້ສະເພາະຂົງເຂດພາຍໃນປະເທດ, ແຜນງານເຫຼົ່ານີ້ ສາມາດເຮັດໃຫ້ມັນອ່ອນແອລົງ ແທນທີ່ຈະພັດທະນາຄວາມເປັນເອກະລາດ ແລະ ຄວາມສີວິໄລດ້ານເສດຖະກິດໃນອະນາຄົດຂອງຜູ້ຖືກເຄາະຮ້າຍເພດຍິງ ແລະ ເດັກຍິງ.

ປະເທດໄທ ກຳລັງນຳໃຊ້ວິທີການທີ່ຮອບດ້ານ ເມື່ອຜູ້ຖືກເຄາະຮ້າຍມາພັກໃນສູນພັກເຊົາ. ການຮັບຮູ້ວ່າແຕ່ລະກຸ່ມທີ່ແຕກຕ່າງກັນ ມີຄວາມຕ້ອງການທີ່ແຕກຕ່າງກັນ ເຊິ່ງຂຶ້ນກັບເພດ ແລະ ອາຍຸ, ກະຊວງ MSDHS ໄດ້ສ້າງສູນພັກເຊົາເກົ້າສູນ- ສີ່ສູນສຳລັບແມ່ຍິງ ແລະ ເດັກຍິງ, ສີ່ສູນສຳລັບຜູ້ຊາຍທີ່ມີອາຍຸຫຼາຍກວ່າ 15 ປີ ແລະ ໜຶ່ງສູນສຳລັບເດັກຊາຍທີ່ອາຍຸຕ່ຳກວ່າ 15 ປີ. ກະຊວງທີ່ເປັນຄູ່ຮ່ວມງານຂອງອົງການ NGO ໄດ້ເຮັດສູນຂອງຕົນເອງ ເພື່ອເປັນທາງເລືອກ ນອກຈາກສູນພັກເຊົາຂອງລັດ ແລະ ຜູ້ຖືກເຄາະຮ້າຍມີສິດທີ່ຈະເລືອກວ່າຈະຢູ່ສູນໃດ. ກະຊວງ MSDHS ຍັງມີສູນພັກເຊົາຊົ່ວຄາວ ທີ່ຕັ້ງຢູ່ໃນລະດັບແຂວງ ເຊິ່ງສາມາດໃຫ້ທີ່ພັກເຊົາຊົ່ວຄາວ ສາມ ຫາ ເຈັດວັນ ກ່ອນທີ່ຈະນຳສົ່ງຜູ້ຖືກເຄາະຮ້າຍໄປຫາສູນພັກເຊົາແບບຖາວອນ.



ເຊັ່ນດຽວກັນກັບ ຄະນະກຳມະການລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດຂອງຟີລິບປິນ (IACAT) ໄດ້ເປີດຕົວ Tahanan ng Inyong Pag-Asa ຫຼື ສູນ T.I.P. ໃນເດືອນທັນວາ 2020 - ເຊິ່ງເປັນສູນພັກເຊົາສູນທຳອິດຂອງ IACAT ແລະ ການບໍລິການແບບປະຕູດຽວ ແບບຄົບວົງຈອນແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງໃຫ້ບໍລິການເປັນສູນພັກເຊົາຊົ່ວຄາວ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ໄດ້ຮັບການກອບກູ້ຊີວິດ ແລະ ມາຮອດປັດຈຸບັນ, ໄດ້ໃຫ້ການສະໜັບສະໜູນແມ່ຍິງ 24 ຄົນ, ຊາຍ 6 ຄົນ, ເດັກຍິງ 14 ຄົນ ແລະ ເດັກຊາຍ 10 ຄົນ.

ກະຊວງພັດທະນາແມ່ຍິງ, ຄອບຄົວ ແລະ ຊຸມຊົນຂອງມາເລເຊຍ ໄດ້ສ້າງສະຖານທີ່ອຳນວຍຄວາມສະດວກ 10 ເຈັດແຫ່ງ ເພື່ອເປັນທີ່ຢູ່ອາໄສສະເພາະແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ສູນພັກເຊົາແປດແຫ່ງເປັນສູນຂອງລັດຖະບານ (ຫ້າສູນສຳລັບແມ່ຍິງ, ສອງສູນສຳລັບເດັກ ແລະ ໜຶ່ງສູນສຳລັບຜູ້ຊາຍ) ແລະ ສອງສູນ ທີ່ດຳເນີນງານໂດຍອົງການ NGO ທີ່ເປັນສູນສຳລັບແມ່ຍິງ ແລະ ເດັກນ້ອຍ.

ປະເທດໄທ ໄດ້ສຶກສາວິທີການ ໃນການເບິ່ງແຍງ ແລະ ປົກປ້ອງທີ່ດີກວ່າໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ລະບຸຕົວວ່າເປັນກຸ່ມຄົນຫຼາຍຫຼາກທາງເພດ (LGBTQI- ຍິງຮັກຍິງ, ຊາຍຮັກຊາຍ, ຜູ້ທີ່ຮັກທັງເພດຍິງ-ເພດຊາຍ, ບຸກຄົນຂ້າມເພດ ຫຼື ແປງເພດ, ບຸກຄົນທີ່ຍັງບໍ່ມີຄວາມຊັດເຈນດ້ານເພດ, ບຸກຄົນທີ່ມີຄວາມມັກທັງສອງເພດ). ພາຍຫຼັງການປຶກສາຫາລືກັບຊຸມຊົນ LGBTQI, ກະຊວງ MSDHS ຕັດສິນໃຈທີ່ຈະບໍ່ສືບຕໍ່ໃນການສ້າງສູນພັກເຊົາສະເພາະໃນແຂວງ ຊຽງຣາຍ ສຳລັບຜູ້ຖືກເຄາະຮ້າຍທີ່ເປັນຄົນຫຼາກຫຼາຍທາງເພດ. ແຕ່ໃນທາງກົງກັນຂ້າມ, ສູນພັກເຊົາທີ່ມີຢູ່ແລ້ວນັ້ນ ໄດ້ຮັບການສົ່ງເສີມ/ຮຽກຮ້ອງໃຫ້ ອອກແບບພື້ນທີ່ສ່ວນຕົວ ແລະ ພື້ນທີ່ປອດໄພໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນກຸ່ມຄົນຫຼາກຫຼາຍທາງເພດ. ໃນຂະນະດຽວກັນ, ຜູ້ຄຸ້ມຄອງສູນພັກເຊົາໃນທຸກໆສູນ ຈະໄດ້ຮັບການຝຶກອົບຮົມກ່ຽວກັບວິທີການ ໃນການປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍທີ່ເປັນກຸ່ມຄົນຫຼາກຫຼາຍທາງເພດ ດ້ວຍການນຳໃຊ້ຮູບແບບດຽວກັນທີ່ໄດ້ມີການພັດທະນາຢູ່ໃນສູນພັກເຊົາຊຽງຣາຍ. ໂຄສົກຂອງກະຊວງ MSDHS ກ່າວວ່າ ມາດຕະການເຫຼົ່ານີ້ ມີເຈດຕະນາທີ່ຈະສົ່ງເສີມໃຫ້ກຸ່ມຄົນຫຼາກຫຼາຍທາງເພດ ໄດ້ເຂົ້າມາເພື່ອໃຫ້ກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼາຍຂຶ້ນ.

ການເບິ່ງແຍງຜູ້ຖືກເຄາະຮ້າຍທີ່ເປັນເດັກ ເປັນສິ່ງທ້າທາຍທີ່ທຸກພາກສ່ວນທີ່ກ່ຽວຂ້ອງໃນອາຊຽນເຫັນດີຮ່ວມກັນ ໃນກອງປະຊຸມປຶກສາຫາລືລະດັບຊາດ. ສິ່ງທ້າທາຍດັ່ງກ່າວ ມີຄວາມທ້າທາຍສູງໂດຍສະເພາະ ເດັກທີ່ມີຄວາມບອບຊ້ຳທາງດ້ານຈິດໃຈສູງ ແລະ ຮຽກຮ້ອງໃຫ້ຕ້ອງມີການເບິ່ງແຍງ ແລະ ປິ່ນປົວສະເພາະດ້ານໄລຍະຍາວ ລວມທັງເດັກທີ່ເປັນບຸກຄົນບໍ່ມີສັນຊາດ. ຜູ້ໃຫ້ບໍລິການສູນພັກເຊົາ ຍັງສະແດງເຖິງຄວາມຜິດຫວັງ ທີ່ຂາດພະນັກງານທີ່ມີຄຸນສົມບັດຄົບຖ້ວນ ແລະ ການສະໜັບສະໜູນທາງດ້ານການເງິນ ໃນການເບິ່ງແຍງເດັກດັ່ງກ່າວ. ພາກສ່ວນທີ່ກ່ຽວຂ້ອງ ຂອງຟີລິບປິນ ໄດ້ແບ່ງປັນວ່າ ພວກເຂົາມີຂໍ້ຂັດແຍ່ງກັນ ທີ່ຈະຊະລໍໃຫ້ເຍົາວະຊົນອອກຈາກສູນ ເພື່ອການປົກປ້ອງ ຫຼື ຈະໃຫ້ເຂົາເຈົ້າ ຕັດສິນໃຈດ້ວຍຕົນເອງຕົວຢ່າງ ກັບໄປຢູ່ໃນບາ (Bar) ແລະ ອາດຈະຖືກຂົ່ມຂືນ. ອີງຕາມປະສົບການຂອງເຂົາເຈົ້າ, ຜູ້ຍິງ ແລະ ເດັກຍິງ ທີ່ຖືກ "ກອບກູ້" ຈາກສະຖານບັນເທີງ ມັກຈະກັບໄປສະຖານທີ່ເຮັດວຽກຂອງເຂົາເຈົ້າໄວທີ່ສຸດ ພາຍຫຼັງທີ່ອອກຈາກສູນພັກເຊົາ. ເພື່ອຫຼີກລ້ຽງສິ່ງດັ່ງກ່າວ, ຜູ້ໃຫ້ບໍລິການສູນພັກເຊົາ ແລະ ນັກສັງຄົມສົງເຄາະ ພະຍາຍາມທີ່ຈະຫ້າມຜູ້ຖືກເຄາະຮ້າຍ ໂດຍສະເພາະ ເດັກນ້ອຍ ຈາກການອອກຈາກສູນໂດຍໄວ ແລະ ແຈ້ງເຂົາເຈົ້າກ່ຽວກັບທາງເລືອກອື່ນ ທີ່ເຂົາເຈົ້າມີ ແລະ ການບໍລິການຕ່າງໆ ທີ່ເຂົາເຈົ້າສາມາດເຮັດໄດ້ໃນສູນພັກເຊົາ.



ຮູບພາບ: ສູນປົກປ້ອງສະຫວັດດີການ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມະນຸດ ປະທຸມທານີ ປະເທດໄທ (ຮູບພາບໂດຍ: ຣາວີນ້າ ຣັດເຊວ)

ອົງການຍຸຕິທຳສາກົນ ແລະ ກົມພັດທະນາສະຫວັດດີການ ແລະ ການພັດທະນາ ຂອງຟີລິບປິນ (DSWD) ກຳລັງຮ່ວມມືກັນ ເພື່ອພັດທະນາ ຮູບແບບການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຖືກລ່ວງລະເມີດທາງເພດ ແລະ ຂູດຮີດທາງເພດເດັກທາງອອນລາຍ (OSAEC). ຟີລິບປິນ ໄດ້ຮັບການກຳນົດວ່າເປັນປະເທດຕົ້ນທາງຫຼັກ ສຳລັບ OSAEC ແລະ ການແຜ່ລະບາດ COVID-19 ເຮັດໃຫ້ແນວໂນ້ມນີ້ເພີ່ມຂຶ້ນຢ່າງຮຸນແຮງ.[22] ຮູບແບບການເບິ່ງແຍງ ທີ່ເນັ້ນໃສ່ຜູ້ຖືກເຄາະຮ້າຍ ໄວໜຸ່ມ ແລະ ພີ່ນ້ອງທີ່ແຕກຕ່າງກັນ/ເພດທີ່ແຕກຕ່າງກັນ ໂດຍແກ້ໄຂ ການຂາດແຄນສູນພັກເຊົາທີ່ມີຢູ່ ໃນຟີລິປິນ ໃຫ້ສາມາດຮັບຮອງເອົາກຸ່ມຄົນເພດຕ່າງໆໄດ້.

ມູນນິທິສານສຳພັນຄອບຄົວ (Family Connection Foundation)[23] ທີ່ຕັ້ງຢູ່ຊຽງໃໝ່ ເປັນມູນນິທິສູນເດັກກຳພ້າ ສຳລັບເດັກທີ່ດ້ອຍໂອກາດ ທີ່ບ້ານ ແສນຮັກ. ການປະຕິບັດຄືກັບເຮືອນ ໂດຍໃຫ້ເດັກນ້ອຍບໍ່ເກີນຫົກຄົນ ຢູ່ໃນບ້ານຫຼັງໜຶ່ງ ໂດຍໃຫ້ເດັກຢູ່ໃນຫ້ອງໜຶ່ງບໍ່ເກີນສາມຄົນ.

ພະນັກງານສູນພັກເຊົາ ຈະມີກິດຈະກຳທີ່ຫຼາກຫຼາຍແກ່ເດັກ ເຊັ່ນການໄປເບິ່ງໜັງ. ມູນນິທິ ໄດ້ເນັ້ນໃສ່ການສະໜັບສະ ໜູນເດັກທີ່ປະເມີນວ່າເປັນເດັກກຳພ້າແທ້ຈິງ ແລະ ເດັກທີ່ມີປະສົບການຈາກການຖືກປະຖິ້ມ, ລ່ວງລະເມີດ ແລະ ປະປ່ອຍ ແລະ ຜູ້ທີ່ບໍ່ສາມາດກັບຄືນຫາຄອບຄົວໄດ້. ຈະມີການຝຶກອົບຮົມການເບິ່ງແຍງເດັກໃຫ້ແກ່ພະນັກງານທີ່ເຮັດວຽກ ໃນການສ້າງຄວາມຜູກພັນກັບເດັກ ໃນ 3-6 ເດືອນທຳອິດ ທີ່ເຂົາເຈົ້າເຂົ້າມາໃນສູນ. ມູນນິທິ ຈະໃຫ້ຄວາມສຳຄັນແກ່ການສົ່ງເສີມໃຫ້ເດັກມີຄວາມເຄົາລົບຕໍ່ຜູ້ອື່ນ ແລະ ເຫັນຄຸນຄ່າຂອງຕົນເອງ; ເປັນພົນລະເມືອງທີ່ມີຄວາມຮັບຜິດຊອບ; ມີທັດສະນະຄະຕິດ້ານບວກຕໍ່ກັບຊີວິດ. ວິທີການທີ່ເອົາເດັກເປັນໃຈກາງ ໄດ້ຖືກນຳໃຊ້ເຂົ້າໃນແຜນພັດທະນາເດັກແຕ່ລະຄົນ. ເດັກ ມີສ່ວນຮ່ວມຢ່າງຫ້າວຫັນໃນການວາງແຜນກັບເດັກຜູ້ໃຫຍ່ກວ່າ ໃນການຕັດສິນໃຈດ້ວຍຕົນເອງວ່າ ຈະເຮັດຫຍັງ/ຮຽນຫຍັງຢູ່ໃສ.

[20] Cordisco Tsai, L., Lim, V., Nhanh, C., & Namy, S. (2022). "ພວກເຂົາບໍ່ໄດ້ໃຫ້ຄວາມສົນໃຈ ຫຼື ຕ້ອງການທີ່ຈະຟັງ ໃນເວລາທີ່ພວກເຮົາເວົ້າ": ປະສົບການຂອງແມ່ຍິງ ໃນສູນພັກເຊົາສະເພາະການຄ້າມະນຸດ ໃນກຳປູເຈຍ. ສັງກັດ, 37(1), 151–168.

[21] ມາຣິກາ ແມັກອາດຳ (Marika McAdam) (2018). ເສລີພາບໃນການເຄື່ອນຍ້າຍ ຂອງບຸກຄົນທີ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ: ການວິເຄາະກົດໝາຍ, ນະໂຍບາຍ ແລະ ການປະຕິບັດຕົວຈິງໃນພາກພື້ນອາຊຽນ. ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ

[22] ການສຶກສາຄົ້ນຄວ້າ: ຟີລິບປິນ ເປັນຈຸດເດັ່ນຂອງໂລກກ່ຽວກັບການລ່ວງລະເມີດເດັກທາງອອນລາຍ". ຂ່າວທີ່ກ່ຽວຂ້ອງ. ວັນທີ 21 ພຶດສະພາ 2020. ເບິ່ງທີ່ https://abcnews.go.com/International/wire Story/study-philippines-global-hot-spot- online-child-abuse-70804205

[23] ເບິ່ງທີ່ https://fcfthailand.org/live/portfolio/bansanrak/

[24] ຂໍ້ມູນນີ້ ແມ່ນຖືກຕ້ອງ ໃນວັນທີ 1 ມິຖຸນາ 2021.

[25] ຂໍ້ມູນນີ້ແມ່ນຖືກຕ້ອງ ໃນເວລາທີ່ມີກອງປະຊຸມປຶກສາຫາລືລະດັບຊາດຂອງຟີລິປິນ ວັນທີ 14 ທັນວາ 2021.

[26] Cordisco Tsai, L., Lim, V., Nhanh, C., & Namy, S. (2022). "ພວກເຂົາບໍ່ໄດ້ໃຫ້ຄວາມສົນໃຈ ຫຼື ຕ້ອງການທີ່ຈະຟັງ ໃນເວລາທີ່ພວກເຮົາເວົ້າ": ປະສົບການຂອງແມ່ຍິງ ໃນສູນພັກເຊົາສະເພາະການຄ້າມະນຸດ ໃນກຳປູກເຈຍ. ສັງກັດ, 37(1), 151–168.

[27] ເບິ່ງທີ່ ອາຊຽນ (2023). ຄູ່ມືອາຊຽນ ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ່ານໜ້າ: ການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຈາກາຕ້າ: ກອງເລຂາອາຊຽນ.

## 3.5 ສິ່ງທ້າທາຍ ນອກເໜືອຈາກສູນພັກເຊົາແບບປິດ ແລະ ເສລີພາບພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ກອງປະຊຸມປຶກສາຫາລືລະດັບຊາດ ໄດ້ສົນທະນາສິ່ງທ້າທາຍຕ່າງໆ ທີ່ກ່ຽວຂ້ອງກັບການປົກປ້ອງ ແລະ ເບິ່ງແຍງຜູ້ຖືກເຄາະຮ້າຍ. ໃນເບື້ອງຕົ້ນ, ເອກະສານສະບັບນີ້ ໄດ້ອະທິບາຍວ່າ ບໍ່ມີການບໍລິການ ແລະ ສູນພັກເຊົາສໍາລັບຜູ້ຖືກເຄາະຮ້າຍເພດຊາຍ ແລະ ກຸ່ມຄົນດ້ອຍໂອກາດອື່ນໆ ເຊິ່ງເປັນຊ່ອງຫວ່າງທີ່ສໍາຄັນໃນການຕ້ານການຄ້າມະນຸດ ແລະ ສິ່ງທ້າທາຍໃນການຈັດການກັບບັນຫາຄວາມລະອຽດອ່ອນ ທີ່ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນ/ສາມາດ ຕິດຕໍ່ສື່ສານກັບຄອບຄົວຂອງເຂົາເຈົ້າໄດ້ແນວໃດ. ໃນພາກນີ້ ຈະສະຫຼຸບ ບັນດາສິ່ງທ້າທາຍຕ່າງໆ ໃນພາກປະຕິບັດຕົວຈິງຂອງສູນພັກເຊົາ ລວມທັງສາເຫດທີ່ເກີດຂຶ້ນໃນລະຫວ່າງການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ພາກສ່ວນຕ່າງໆໃນອາຊຽນ ໄດ້ມີການແບ່ງປັນ.

### 3.5.1 ການຢຸດຕິ ເນື່ອງຈາກພະຍາດໂຄໂຣນາໄວຣັດ

ການແຜ່ລະບາດຂອງ COVID-19 ມີຜົນກະທົບຢ່າງໃຫຍ່ຫຼວງ ໃນເວລາທີ່ຜູ້ຖືກເຄາະຮ້າຍ ເຂົ້າມາໃນສູນພັກເຊົາ ແລະ ເຂົ້າເຖິງການບໍລິການອື່ນໆ. ນອກຈາກຂໍ້ຈໍາກັດໃນສູນ ກ່ຽວກັບການໄປມາ ແລະ ພາລະຂອງວຽກທີ່ເພີ່ມຂຶ້ນ ທີ່ກ່ຽວຂ້ອງກັບການປະຕິບັດຕາມຫຼັກການ ແລະ ລະບຽບການໃໝ່ແລ້ວ, ຜູ້ຄຸ້ມຄອງສູນພັກເຊົາໃນອາຊຽນ ຍັງຍົກໃຫ້ເຫັນເຖິງສິ່ງທ້າທາຍອັນສະເພາະ ທີ່ກະທົບຕໍ່ກັບຄວາມສາມາດຂອງເຂົາເຈົ້າໃນການໃຫ້ການເບິ່ງແຍງ ແລະ ປົກປ້ອງທີ່ມີຄຸນນະພາບ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ໜຶ່ງໃນສິ່ງທ້າທາຍ ທີ່ຖືກຍົກຂຶ້ນມາ ແມ່ນຄວາມຈໍາເປັນໃນສູນສິ່ງຕໍ່ ເຊິ່ງມີຈຸດປະສົງເພື່ອໃຊ້ເປັນສະຖານທີ່ໃນການກັກຕົວຜູ້ຖືກເຄາະຮ້າຍ ເພື່ອກວດຫາພະຍາດໂຄວິດ. ການຂາດຊັບພະຍາກອນດ້ານງົບປະມານຈາກລັດ ເປັນເຫດຜົນວ່າເປັນຫຍັງຈໍານວນໃນສູນສິ່ງຕໍ່ ຈຶ່ງບໍ່ພຽງພໍຕໍ່ກັບຄວາມຕ້ອງການ. ຄໍາຖາມຄື ໃຜຈະເປັນຄົນຈ່າຍຄ່າກວດຫາພະຍາດໂຄວິດ ລວມທັງການກວດແບບໄວ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງຖືກຍົກຂຶ້ນມາສົນທະນາກັນໃນກອງປະຊຸມປຶກສາຫາລືລະດັບຊາດ. ພາກສ່ວນທີ່ກ່ຽວຂ້ອງຂອງອິນໂດເນເຊຍ ໄດ້ແບ່ງປັນວ່າ ການຂາດຄວາມຊັດເຈນຕໍ່ກັບບັນຫາດັ່ງກ່າວ ກ້າວໄປສູ່ເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມອິດເມື່ອຍ ເປັນເວລາຫຼາຍເດືອນໃນສູນສິ່ງຕໍ່.

ມາດຕະການໃນການຫຼຸດຜ່ອນຄວາມແອອັດໃນສູນພັກເຊົາ ໝາຍເຖິງ ຄວາມສາມາດພາຍໃນສູນພັກເຊົາຫຼາຍແຫ່ງ ແມ່ນຫຼຸດລົງ. ສູນພັກເຊົາບາງແຫ່ງ ອ້າງວ່າສິ່ງທ້າທາຍໃນການລະດົມທຶນ ເກີດຈາກການແຜ່ລະບາດຂອງເຊື້ອພະຍາດ ເນື່ອງຈາກລັດຖະບານ ແລະ ຜູ້ໃຫ້ທຶນ ໄດ້ຫັນທິດການໃຫ້ທຶນໄປຍັງຂະແໜງສາທາລະນະສຸກ. ສູນພັກເຊົາຂອງ NGO ຍັງເພິ່ງພາການບໍລິຈາກ ຈາກເອກະຊົນຫຼາຍ ເພື່ອເປັນທຶນໃນການບໍາລຸງຮັກສາ ແລະ ການບໍລິການຂອງສູນ ສິ່ງຜົນເຮັດໃຫ້ຜູ້ສະໜອງການບໍລິການ ມີຄວາມກົດດັນເພີ່ມຂຶ້ນ




ອີກປະເດັນໜຶ່ງແມ່ນສະຖານະວັກຊີນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ວັກຊີນ ບໍ່ແມ່ນພາກບັງຄັບໃນບັນດາປະເທດອາຊຽນທັງໝົດ ຍົກເວັ້ນ ອິນໂດເນເຊຍ ເຊິ່ງປະກາດບັງຄັບ ໃຫ້ສັກວັກຊີນ ແກ່ພົນລະເມືອງທີ່ມີສິດທັງໝົດ ໃນເດືອນກຸມພາ 2021.[24] ຜູ້ຄຸ້ມຄອງສູນພັກເຊົາ ມີຄວາມລຳບາກໃຈ ໃນການຄຸ້ມຄອງຜູ້ພັກອາໄສ (ເກົ່າ ແລະ ໃໝ່) ທີ່ປະຕິເສດທີ່ຈະສັກຢາຕ້ານກັບພະຍາດໂຄວິດ. ເຖິງວ່າ ກົດໝາຍຈະກຳນົດໄວ້ກໍຕາມ, ຜູ້ຄຸ້ມຄອງສູນພັກເຊົາ ຈຳເປັນຕ້ອງໄດ້ຮັບຄຳແນະນຳວ່າຈະຊຸກຍູ້ຜູ້ພັກອາໄສ ທີ່ຕໍ່ຕ້ານການສັກວັກຊີນແນວໃດ ດ້ວຍເຫດຜົນສ່ວນຕົວ ແລະ ວັດທະນະທຳ ໃຫ້ໄດ້ຮັບການສັກວັກຊີນ.

ໃນປະເທດຟີລິບປິນ, ສູນ Tanglaw Buhay ເວົ້າວ່າ ພະຍາດ COVID-19 ມີຜົນກະທົບຕໍ່ກັບການສົ່ງຕໍ່ເດັກຜູ້ໃໝ່ເນື່ອງຈາກເຂົາເຈົ້າຕ້ອງກວດ PCR ໃຫ້ເປັນຜົນລົບກ່ອນທີ່ຈະເຂົ້າມາໃນສູນ. ຂໍ້ກຳນົດນີ້ ໄດ້ສ້າງຄ່າໃຊ້ຈ່າຍເພີ່ມເຕີມໃຫ້ແກ່ການປະຕິບັດງານຂອງສູນ. ໜ່ວຍງານລັດຂັ້ນທ້ອງຖິ່ນໃນຟີລິປິນ ບໍ່ສາມາດ ໃຫ້ຊຸດອະນາໄມຟີແກ່ທຸກຄົນໄດ້, ສະນັ້ນຂໍ້ກຳນົດໃນການກວດຫາເຊື້ອ ຈຶ່ງເປັນຄວາມຮັບຜິດຊອບຂອງສູນ. ການປ່ຽນໄປໃຊ້ຮູບແບບການຮຽນຮູ້ແບບອອນລາຍສຳລັບເດັກ ໝາຍຄວາມວ່າ ພະນັກງານສູນພັກເຊົາ ຕ້ອງໃຊ້ເວລາ ແລະ ພະລັງງານຫຼາຍ ໃນການຝຶກແອບເດັກ ຜູ້ທີ່ບໍ່ສາມາດປັບຕົວໄດ້ໄວ ແລະ ທັນກັບຮູບແບບການຮຽນຮູ້ແບບໃໝ່ນີ້. ນອກນັ້ນ, ຄວາມບໍ່ສະຖຽນຂອງສັນຍານອິນເຕີເນັດ ຍັງຂັດຂວາງການຮຽນຮູ້ຂອງເດັກ. ສູນຍັງລາຍງານ ຄວາມຄືບໜ້າອັນຊັກຊ້າ ໃນຄະດີທາງກົດໝາຍ ທີ່ກ່ຽວຂ້ອງກັບເດັກ ທີ່ເປັນຜົນມາຈາກການແຜ່ລະບາດຂອງພະຍາດ - ມີພຽງແຕ່ 9 ຄະດີໃນ 64 ຄະດີທີ່ຍື່ນຟ້ອງຫາສານ - ສິ່ງຜົນເຮັດໃຫ້ການຟື້ນຟູຂອງເດັກບາງຄົນມີຄວາມຊັກຊ້າ .[25]

### 3.5.2 ສູນພັກເຊົາ ແລະ ຜູ້ໃຫ້ການບໍລິການ ບໍ່ມີຊັບພະຍາກອນທີ່ພຽງພໍ

ການຂາດຊັບພະຍາກອນທົ່ວໄປ ແລະ ນັກສັງຄົມສົງເຄາະ ແລະ ນັກຈິດຕະວິທະຍາທີ່ຜ່ານການຝຶກອົບຮົມ ເພື່ອເບິ່ງແຍງ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍນັ້ນ ເປັນບັນຫາອຸກອັ່ງໃຈຂອງພາກສ່ວນທີ່ກ່ຽວຂ້ອງເກືອບທັງໝົດໃນອາຊຽນ. ຜູ້ໃຫ້ບໍລິການ ອາດຈະບໍ່ໄດ້ຮັບການຝຶກອົບຮົມຂັ້ນພື້ນຖານກ່ຽວກັບການເຮັດວຽກກັບບຸກຄົນທີ່ມີປະສົບການບອບຊ້ຳດ້ານຈິດໃຈ. ການຮັບປະກັນວ່າມີພະນັກງານທີ່ມີຄຸນສົມບັດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ໃຫ້ບໍລິການ ເປັນບັນຫາໃຫຍ່ຂອງພາກສ່ວນທີ່ກ່ຽວຂ້ອງ. ການສົ່ງຕໍ່ຄວາມຮູ້ ແລະ ສ້າງຄວາມອາດສາມາດໃຫ້ແກ່ພະນັກງານສູນພັກເຊົາ, ນັກສັງຄົມສົງເຄາະ, ທີ່ປຶກສາ, ຜູ້ຄຸ້ມຄອງກໍລະນີ ແລະ ຜູ້ໃຫ້ບໍລິການອື່ນໆ ແມ່ນເປັນສິ່ງທີ່ຕ້ອງການທີ່ສຸດ. ເຖິງຢ່າງໃດກໍຕາມ, ສິ່ງດັ່ງກ່າວ ມີຂໍ້ຈຳກັດດ້ານງົບປະມານຂອງໜ່ວຍງານທີ່ກ່ຽວຂ້ອງ ແລະ ສູນພັກເຊົາ ເພື່ອປະຕິບັດໜ້າທີ່ຂອງຕົນ - ບັນຫາດັ່ງກ່າວຍັງເປັນບັນຫາຕໍ່ເນື່ອງ ຮ້າຍແຮງ ຍ້ອນການແຜ່ລະບາດຂອງເຊື້ອພະຍາດ.

*ພວກເຮົາມີສູນພັກເຊົາພຽງແຕ່ສອງສູນ, ສູນໜຶ່ງຢູ່ ຮ່າໂນ້ຍ ແລະ ອີກສູນໜຶ່ງຢູ່ ຄັນໂທ (Can Tho) ເຊິ່ງມັນຍັງບໍ່ພຽງພໍ. ພວກເຮົາຢາກຂະຫຍາຍສູນໄປທົ່ວຫວຽດນາມ.*

*--- ບ້ານສັນຕິພາບ (Peace House), ກອງປະຊຸມປຶກສາຫາລືລະດັບຊາດຂອງຫວຽດນາມ, ວັນທີ 1 ເມສາ 2022.*

*ພວກເຮົາມີສູນພັກເຊົາຂອງລັດແຕ່ແຫ່ງດຽວ ເພື່ອຮອງຮັບຜູ້ຖືກເຄາະຮ້າຍທຸກປະເພດ. ເຊິ່ງບໍ່ແມ່ນເລື່ອງງ່າຍທີ່ຈະດຳເນີນງານ ໂດຍມີງົບປະມານທີ່ໜ້ອຍ ແລະ ຊັບພະຍາກອນທີ່ມີຢູ່.*

*--- ສູນກາງສະຫະພັນແມ່ຍິງລາວ, ກອງປະຊຸມປຶກສາຫາລືລະດັບຊາດ, ວັນທີ 28 ກຸມພາ 2022.*

*ຂ້າພະເຈົ້າ ຮູ້ສຶກເມື່ອຍ ເມື່ອເວົ້າເຖິງສູນພັກເຊົາ. ງົບປະມານມີພຽງແຕ່ 16 ຕື້ ຣູປີອິນໂດເນເຊຍ ຕໍ່ປີ ເຊິ່ງມັນບໍ່ພຽງພໍ ແລະ ພວກເຮົາມີກໍລະນີຄ້າມະນຸດ ຫຼາຍຂຶ້ນເລື້ອຍໆ. ພວກເຮົາສາມາດຮັບເອົາເຂົາເຈົ້າ, ມີອາຫານ ແລະ ໂອ້ລົມເຂົາເຈົ້າ ແຕ່ບໍ່ສາມາດຮັບປະກັນເລື່ອງຄຸນນະພາບ. ງົບປະມານດ້ານອາຫານແກ່ເດັກນ້ອຍຄົນໜຶ່ງ ແມ່ນຈຳກັດພຽງແຕ່ສອງອາທິດເທົ່ານັ້ນ. ນີ້ເປັນອຸປະສັກຂອງພວກເຮົາ.*

*--- ສູນບໍລິການ ແບບປະສົມປະສານເພື່ອການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ (P2TP2A), ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 28 ມັງກອນ 2022.*

### 3.5.3 ຄຸນນະພາບ ແລະ ຄວາມປອດໄພຂອງສູນພັກເຊົາ ທີ່ບໍ່ມີຄວາມສະໝ່ຳສະເໝີ

ຄຸນນະພາບ ແລະ ຄວາມປອດໄພຂອງສູນພັກເຊົາ ທີ່ມີຄວາມບໍ່ສະໝ່ຳສະເໝີ ເປັນຂໍ້ກັງວົນຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ. ສູນພັກເຊົາບາງແຫ່ງ, ຍັງບໍ່ມີຫຼັກການດ້ານຄວາມປອດໄພ, ສະຖານທີ່ພັກເຊົາ ຍັງບໍ່ມີການຮັກສາຄວາມປອດໄພທີ່ພຽງພໍ ຫຼື ສະຖານທີ່ ບໍ່ມີຄວາມປອດໄພຢ່າງພຽງພໍ. ການປະສົມປະສານນີ້ ເຮັດໃຫ້ມີຄວາມສັບສົນວ່າ ເປັນຄວາມຮັບຜິດຊອບຂອງໃຜ ຕໍ່ກັບຄວາມປອດໄພຂອງຜູ້ພັກອາໄສໃນສູນພັກເຊົາ - ຕຳຫຼວດ, ໜ່ວຍງານທີ່ກ່ຽວຂ້ອງຂອງລັດ ຫຼື ຜູ້ຄຸ້ມຄອງສູນພັກເຊົາ.

ບາງພາກສ່ວນທີ່ກ່ຽວຂ້ອງ ແບ່ງປັນວ່າ ມີເຫດການຮຸກຮານທາງເພດ ແລະ ການປະຕິບັດທີ່ບໍ່ຖືກຕ້ອງຕໍ່ກັບຜູ້ພັກອາໄສໃນສູນພັກເຊົາ. ເຫດການດັ່ງກ່າວ ບໍ່ຖືກລາຍງານ ຫຼື ຖືວ່າເປັນບັນຫາ ທີ່ຈຳເປັນຕ້ອງໄດ້ຮັບການແກ້ໄຂ. ເຂົາເຈົ້າສະແດງເຈດຈຳນົງ ຄວາມຕ້ອງການ ເພື່ອໃຫ້ສະຖານະການນີ້ໄດ້ຮັບການເປີດເຜີຍ ລວມທັງ ຄວາມສົນໃຈຂອງໄອຍະການ ແລະ ຜູ້ພິພາກສາ ເພື່ອໃຫ້ເຂົາເຈົ້າຮູ້ສຶກວ່າ ມັນຈຳເປັນຕ້ອງໄດ້ຊ່ວຍເລັ່ງລັດຄະດີຄ້າມະນຸດໂດຍໄວ. ດ້ວຍເຫດນັ້ນ, ໄລຍະເວລາທີຜູ້ຖືກເຄາະຮ້າຍອາໄສຢູ່ໃນສູນພັກເຊົາ ຈິ່ງບໍ່ຈຳເປັນຕ້ອງຢູ່ເປັນເວລາດົນ.



### 3.5.4 ການເບິ່ງແຍງຜູ້ຖືກເຄາະຮ້າຍທີ່ມີຄວາມຕ້ອງການທີ່ຊັບຊ້ອນ

ການເບິ່ງແຍງຜູ້ຖືກເຄາະຮ້າຍ ມີຄວາມກົດດັນຢ່າງຮຸນແຮງ ຫຼື ມີຄວາມຜິດປົກກະຕິດ້ານຈິດໃຈ ເປັນສິ່ງທ້າທາຍອັນໃຫຍ່ຫຼວງ ແກ່ຜູ້ປະຕິບັດຕົວຈິງ. ພາກສ່ວນທີ່ກ່ຽວຂ້ອງລາຍງານກ່ຽວກັບ "ຜູ້ຖືກເຄາະຮ້າຍທີ່ເປັ່ງສຽງຮ້ອງໝົດຄືນເປັນເວລາດົນ" ເພາະພວກເຂົາຮູ້ສຶກຫົດຫູ່ໃຈ. ເດັກໜຸ່ມບາງຄົນ ມີປະສົບການທີ່ກັບຄືນໄປຝັນຮ້າຍ  ແລະ ຍ່າງລະເມີ ເຊິ່ງເປັນຜົນມາຈາກປະສົບການຄວາມບອບຊໍ້າດ້ານຈິດໃຈ. ສູນພັກເຊົາ ຈຶ່ງຢູ່ພາຍໃຕ້ຄວາມກົດດັນ ໃນການມອບໝາຍນັກສັງຄົມສົງເຄາະ ທີ່ກຽມພ້ອມໃຫ້ບໍລິການຕະຫລາດ 24 ຊົ່ວໂມງ ໃນ 7 ມື້ ເຊິ່ງບໍ່ສາມາດເປັນໄປໄດ້ຕະຫຼອດ.

ສິ່ງທ້າທາຍອີກປະການໜຶ່ງ ທີ່ກ່ຽວຂ້ອງກັບການຮັບມືກັບຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ແລະ ຜູ້ທີ່ບໍ່ມີເອກະສານ ໃນການລະບຸຕົວຕົນ. ສູນພັກເຊົາ ບໍ່ສາມາດຢືນຢັນທີ່ຢູ່ຂອງຜູ້ຖືກເຄາະຮ້າຍເຫຼົ່ານີ້ໄດ້ ແລະ ຕິດຕໍ່ ຕິດຕໍ່ຄອບຄົວຂອງເຂົາເຈົ້າໄດ້ ສຳເລັດ. ດ້ວຍເຫດນັ້ນ, ບາງຄົນຈຶ່ງຈຳເປັນຕ້ອງອາໄສຢູ່ໃນສູນພັກເຊົາເປັນເວລາດົນນານໂດຍມີໂອກາດຫນ້ອຍ ທີ່ຈະຖືກສົ່ງຕົວກັບຄືນ. ຜູ້ໃຫ້ການບໍລິການ ຍັງມີການເຈລະຈາ ກັບເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ກ່ຽວກັບການເນລະເທດກັບ ຫຼື ການລົງໂທດທາງອາຍາແກ່ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຕ່າງປະເທດຜູ້ທີ່ເຂົ້າ-ອອກເມືອງໂດຍຜິດກົດໝາຍ.

*ປັດຈຸບັນນີ້, ພວກເຮົາກຳລັງໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ກາລິມັນຕັນ (Kalimantan). ພວກເຮົາບໍ່ສາມາດສົ່ງຜູ້ຖືກເຄາະຮ້າຍກັບຄືນໄດ້ ຍ້ອນພວກເຮົາບໍ່ສາມາດລະບຸຕົວຕົນຂອງຜູ້ຖືກເຄາະຮ້າຍໄດ້. ພວກເຮົາບໍ່ມີເລກທີບັດປະຈຳຕົວເພື່ອລະບຸຕົວຕົນ ເພາະຍັງເປັນເຍົາວະຊົນຢູ່. ພວກເຮົາບໍ່ສາມາດໃຫ້ການຊ່ວຍເຫຼືອດ້ານການສຶກສາ ຍ້ອນສຳນັກງານການສຶກສາ ໂຍຍາກາຕາ (Yogyakarta) ໃຫ້ການຊ່ວຍເຫຼືອດ້ານການສຶກສາແກ່ລູກຫຼານຂອງຜູ້ພັກອາໄສໃນ ໂຍຍາກາຕາ ເທົ່ານັ້ນ. ສະນັ້ນ, ພວກເຮົາຕ້ອງໄດ້ຕິດຕໍ່ສື່ສານກັບ ໜ່ວຍງານບໍລິການດ້ານສັງຄົມໃນກາລິມັນຕັນ.*

*---Rifka Annisa (NGO, ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ. ວັນທີ 28 ມັງກອນ 2022.*



### 3.5.5 ການປະສານງານລະຫວ່າງໜ່ວຍງານຕ່າງໆ ທີ່ເຮັດບໍ່ໄດ້ດີ

ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເປັນຂະບວນການທີ່ຊັບຊ້ອນ ຮຽກຮ້ອງການມີສ່ວນຮ່ວມຈາກຫຼາຍກະຊວງ ແລະ ອົງການຕ່າງໆ ເຊັ່ນ ໜ່ວຍງານບັງຄັບໃຊ້ກົດໝາຍ, ໜ່ວຍງານທາງສັງຄົມ, ໜ່ວຍງານປົກປ້ອງພະຍານ, ສະຫະພັນແມ່ຍິງ, ອົງການ NGO ແລະ ອົງການຂັ້ນຊຸມຊົນ. ການສື່ສານ ແລະ ການປະສານງານທີ່ບໍ່ມີປະສິດທິພາບ ລະຫວ່າງຜູ້ໃຫ້ການບໍລິການທີ່ກ່ຽວຂ້ອງຈະສົ່ງຜົນສະທ້ອນຕໍ່ກັບການຟື້ນຟູຟືນ ແລະ ການບໍາບັດຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍອາດຈະມີຄວາມບອບຊໍ້າດ້ານຈິດໃຈຊໍ້າຄືນ ຖ້າຫາກເຂົາເຈົ້າ ຖືກສໍາພາດ ຫຼື ຖືກຖາມຄໍາຖາມເກົ່າ ຊໍ້າໆຫຼາຍເທື່ອ ໂດຍໜ່ວຍງານຕ່າງໆ. ນອກນັ້ນ, ຂະບວນການສົ່ງຕໍ່ຜູ້ຖືກເຄາະຮ້າຍ ທີ່ຊັກຊ້າໂດຍບໍ່ຈໍາເປັນ ອາດເຮັດໃຫ້ຜູ້ຖືກເຄາະຮ້າຍຂາດຄວາມເຊື່ອໝັ້ນໃນຂະບວນການຊ່ວຍເຫຼືອ ຫຼື ຮ້າຍແຮງກວ່ານັ້ນ ແມ່ນຂັດຂວາງການສົ່ງກັບຄືນຊຸມຊົນຂັ້ນທ້ອງຖິ່ນຂອງເຂົາເຈົ້າ.

*ມີຄວາມຈໍາເປັນໃນການປັບປຸງການປະສານງານລະຫວ່າງໜ່ວຍງານຕ່າງໆ ກັບໜ່ວຍງານຄຸ້ມຄອງຊາຍແດນ ແລະ ກະຊວງແຮງງານ, ຄົນພິການ ແລະ ສັງຄົມ (MOLISA). ພວກເຮົາຍັງຈໍາເປັນທີ່ຕ້ອງປັບປຸງການກອບກູ້ຜູ້ຖືກເຄາະຮ້າຍ ແລະ ການສົ່ງຕໍ່ລະຫວາງ ກະຊວງ MOLISA ແລະ ບ້ານສັນຕິພາບ. ຫວຽດນາມ ມີການຮ່ວມມືທີ່ດີລະຫວ່າງໜ່ວຍງານຕ່າງໆ, ສະຫະພັນແມ່ຍິງຫວຽດນາມ ບໍ່ໄດ້ຖືກກໍານົດຢ່າງເປັນທາງການ ກ່ຽວກັບມາດຕະຖານຂັ້ນຕອນການປະຕິບັດງານ ທີ່ອອກໂດຍກະຊວງ MOLISA ກ່ຽວກັບການກອບກູ້ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.*

*--- ສະຫະພັນແມ່ຍິງຫວຽດນາມ, ກອງປະຊຸມປຶກສາຫາລືລະດັບຊາດຂອງຫວຽດນາມ. ວັນທີ 1 ເມສາ 2022.*

*ພວກເຮົາພະຍາຍາມຢ່າງຕັ້ງໜ້າ ເພື່ອໃຫ້ພວກເຮົາສາມາດໃຫ້ການສະໜັບສະໜູນແກ່ຜູ້ຖືກເຄາະຮ້າຍໃຫ້ທັນເວລາ. ຕົວຢ່າງ, ແທນທີ່ຈະລໍຖ້າເອກະສານຢ່າງເປັນທາງການມາຮອດ, ພວກເຮົາ ຕິດຕໍ່ພາກສ່ວນທີ່ກ່ຽວຂ້ອງໃນລະດັບທ້ອງຖິ່ນ ຫຼື ສູນກາງ ແລະ ຂໍການຮ່ວມມືກັບເຂົາເຈົ້າ.*

*--- ບ້ານສັນຕິພາບ, ກອງປະຊຸມປຶກສາຫາລືລະດັບຊາດຂອງຫວຽດນາມ. ວັນທີ 1 ເມສາ 2022.*

## 3.6 ນອກເໜືອຈາກສູນພັກເຊົາແບບປິດ: ການສ້າງສະພາບແວດລ້ອມທີ່ປອດໄພ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ທຸກຄົນ

ການສົນທະນາກ່ຽວກັບເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຍັງສືບຕໍ່ດຶງດູດມູມມອງຕ່າງໆ. ການໃຫ້ທີ່ພັກເຊົາແກ່ຜູ້ຖືກເຄາະຮ້າຍ ຈຳເປັນຕ້ອງມີຄວາມສົມດູນຢ່າງລະມັດລະວັງ ເພື່ອໃຫ້ບັນລຸຜົນ ລະຫວ່າງສິດທິຂອງຜູ້ຖືກເຄາະຮ້າຍ ແລະ ຜົນປະໂຫຍດທີ່ມີການແຂ່ງຂັນໃນບາງຄັ້ງຂອງພາກສ່ວນອື່ນໆ ໃນການນຳເອົາຜູ້ຄ້າມະນຸດເຂົ້າສູ່ຂະບວນການຍຸຕິທຳ ແລະ ຈັດການກັບການເຄື່ອນຍ້າຍແຮງງານທີ່ມີປະສິດທິພາບ. ກອງປະຊຸມປຶກສາຫາລືໃນລະດັບຊາດຂອງອາຊຽນ ຂອງພວກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີການຕີຄວາມໝາຍກ່ຽວກັບເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍທີ່ແຕກຕ່າງກັນ ແລະ ຄວາມໝາຍໃນພາກປະຕິບັດ. ວິກິດການຂອງການແຜ່ລະບາດເຊື້ອພະຍາດ ມີຍັງຜົນໃຫ້ມີຂໍ້ຈຳກັດຫຼາຍຢ່າງ ທີ່ຜູ້ໃຫ້ການບໍລິການສູນພັກເຊົາ ໄດ້ພົບພໍ້ ໃນຊ່ວງກ່ອນການແຜ່ລະບາດ ເຊິ່ງເຮັດມີຄວາມຮ້າຍແຮງຂຶ້ນ ເມື່ອພົບກັບງົບປະມານທີ່ຫຼຸດລົງ ແລະ ຊັບພະຍາກອນທີ່ຈຳກັດ.

ໃນອາຊຽນ, ມີຄວາມເປັນເອກະພາບກັນທີ່ຈະກ້າວໄປສູ່ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ວິທີການທີ່ອີງໃສ່ສິດທິຂອງຜູ້ຖືກເຄາະຮ້າຍ ໃນການສະໜອງສູນພັກເຊົາໃຫ້ແກ່ຜູ້ຖືກເຄາະຮ້າຍ. ຜູ້ປະຕິບັດຕົວຈິງ ຈະໄດ້ສ້າງຕົວກຳນົດ ແລະ ການພັດທະນາທີ່ມີຄວາມຄິດສ້າງສັນ ເພື່ອສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມສະພາບແວດລ້ອມທີ່ປອດໄພໃຫ້ແກ່ຜູ້ພັກອາໄສໃນສູນພັກເຊົາ ແລະ ພະນັກງານ. ເຖິງຈະມີສິ່ງທ້າທາຍຕ່າງໆ ທີ່ຜູ້ໃຫ້ບໍລິການສູນພັກເຊົາ ແລະ ເຈົ້າໜ້າທີ່ດ່ານໜ້າ ໄດ້ພົບພໍ້, ກໍ່ຍັງມີຄວາມສົນໃຈ ແລະ ຄວາມໝັ້ນໝາຍແທ້ຈິງ ຕໍ່ກັບນະວັດຕະກຳ ແລະ ວິທີການແບບໃໝ່ ໃນການເບິ່ງແຍງຜູ້ຖືກເຄາະຮ້າຍ. ມີບາງຕົວຢ່າງທີ່ເປັນຕົວແບບທີ່ດີ ທີ່ໄດ້ມີການແບ່ງປັນໃນກອງປະຊຸມປຶກສາຫາລືໃນລະດັບຊາດ ດັ່ງຂ້າງລຸ່ມນີ້.

### 3.6.1 ການສ້າງຄວາມໄວ້ວາງໃຈ ແລະ ຄວາມໝັ້ນໃຈ

ການສ້າງຄວາມໄວ້ໃຈກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເປັນບາດກ້າວທຳອິດທີ່ສຳຄັນ ແລະ ມີຈຸດປະສົງທີ່ແບ່ງປັນຮ່ວມກັນຈາກພາກສ່ວນທີ່ກ່ຽວຂ້ອງທັງໝົດ. ສິ່ງນີ້ມີຄວາມສຳຄັນເປັນພິເສດໃນການລິເລີ່ມຕ້ານການຄ້າມະນຸດ ເນື່ອງຈາກປະສົບການຈາກການຄ້າມະນຸດ ມັກຈະເກີດຂຶ້ນຈາກການໝູນໃຊ້ ແລະ ການເປີດເຜີຍ ແບບເລິກເຊິ່ງ.[26] ພາກສ່ວນທີ່ກ່ຽວຂ້ອງ ທີ່ມີສ່ວນຮ່ວມຢ່າງຕັ້ງໜ້າໃນການເບິ່ງແຍງຜູ້ຖືກເຄາະຮ້າຍໂດຍກົງ ມີຄວາມກົດດັນໃນການໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ຊັດເຈນແກ່ຜູ້ຖືກເຄາະຮ້າຍ ເຊິ່ງເປັນອົງປະກອບທີ່ສຳຄັນຂອງຂະບວນການສ້າງຄວາມໝັ້ນໃຈ. ການເບິ່ງແຍງນີ້ ຄວນເອົາໃຈໃສ່ວິທີການປະຕິບັດ ແລະ ໂອ້ລົມກັບຜູ້ຖືກເຄາະຮ້າຍ.



*ຜູ້ຖືກເຄາະຮ້າຍຈໍາເປັນຕ້ອງຮູ້ວ່າສູນພັກເຊົາຂອງພວກເຮົາເປັນສະຖານທີ່ໃຫ້ການປົກປ້ອງ ບໍ່ແມ່ນສູນກັກຂັງ, ສະນັ້ນເຂົາເຈົ້າມີຄວາມໄວ້ວາງໃຈທີ່ຈະຢູ່ໃນສູນພັກເຊົາ. ພວກເຮົາບໍ່ສາມາດຮັບປະກັນໄລຍະເວລາ ການຢູ່ໃນສູນໄດ້ ແຕ່ພວກເຮົາຈະລາຍງານຜູ້ຖືກເຄາະຮ້າຍຕໍ່ກັບຄວາມຄືບໜ້າໃນຄະດີ ເພື່ອໃຫ້ພວກເຮົາມີຄວາມໜ້າເຊື່ອຖື.*

*--- ກະຊວງ MSDHS, ກອງປະຊຸມປຶກສາຫາລືລະດັບຊາດຂອງໄທ, ວັນທີ 13 ທັນວາ 2022.*

*ພວກເຮົາມີຄວາມລະມັດລະວັງໃນການໃຊ້ພາສາທີ່ຮູ້ສຶກອຸ່ນໃຈ ແລະ ບໍ່ເປັນທາງການ ໃນເວລາທີ່ລົມກັບຜູ້ຖືກເຄາະຮ້າຍ ເພື່ອສົ່ງເສີມສະພາບແວດລ້ອມແບບຄອບຄົວໃຫ້ແກ່ເຂົາເຈົ້າ. ຜູ້ທີ່ເຂົ້າມາໃໝ່ ຈະໄດ້ຮັບການປະຖົມນິເທດ ແລະ ຄວາມຕ້ອງການຂອງເຂົາເຈົ້າ ຈະໄດ້ຮັບການສົນທະນາ ເພື່ອຮັບປະກັນສິດຂອງເຂົາເຈົ້າ ໄດ້ຮັບການສະໜອງໃຫ້. ພວກເຮົາເຄົາລົບການຕັດສິນໃຈຂອງເຂົາເຈົ້າ.*

*---ອົງການບ້ານຈຸດສຸມສາກົນ (ອົງການ NGO), ກອງປະຊຸມປຶກສາຫາລືລະດັບຊາດຂອງ ສປປ ລາວ ວັນທີ 28 ກຸມພາ 2022.*

*ພວກເຮົາຖາມຜູ້ຖືກເຄາະຮ້າຍວ່າ ເຂົາເຈົ້າມີຄວາມກັງວົນກ່ຽວກັບການຢູ່ໃນສູນ ຫຼື ບໍ່. ຖ້າພວກເຮົາເຫັນວ່າ ຊີວິດ ແລະ ຄວາມປອດໄພຂອງເຂົາເຈົ້າ ຖືກຂົ່ມຂູ່ ພວກເຮົາຈະເປີດເຜີຍຂໍ້ມູນໃຫ້ແກ່ເຂົາເຈົ້າ, ພວກເຮົາຈະສະເໜີໃຫ້ເຂົາເຈົ້າຮູ້ກ່ຽວກັບຈຸດດີ ແລະ ຈຸດອ່ອນໃນການອາໄສຢູ່ໃນສູນ. ແຕ່ຖ້າຫາກບໍ່ແມ່ນກໍລະນີດັ່ງກ່າວ, ຖ້າເຂົາເຈົ້າບໍ່ໄດ້ຖືກຂົ່ມຂູ່ ແຕ່ຕ້ອງການຢູ່ໃນສູນ ພວກເຮົາກໍ່ຍັງຮັບເອົາເຂົາເຈົ້າ.*

*--- Rumah Faye (ອົງການ NGO), ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 28 ມັງກອນ 2022*

### 3.6.2 ວິທີການໃນການຮອງຮັບກໍລະນີ ທີ່ເປັນແຕ່ລະກໍລະນີ

ພາກສ່ວນທີ່ກ່ຽວຂ້ອງໃນກອງປະຊຸມລະດັບຊາດ ຮັບຮູ້ລັກສະນະສະເພາະຂອງຜູ້ຖືກເຄາະຮ້າຍແຕ່ລະຄົນ ໂດຍການໃຫ້ບໍລິການຈະມີຄວາມຍືດຫຍຸ່ນໃນລະດັບສູງ ເມື່ອພິຈາລະນາການຈັດຫາສູນພັກເຊົາທີ່ດີທີ່ສຸດໃຫ້ແຕ່ລະບຸກຄົນ. ໃນປະເທດໄທ, ຜູ້ໃຫ້ບໍລິການສູນພັກເຊົາ ພິຈາລະນາປັດໄຈຕ່າງໆ ເຊັ່ນ: ວັດທະນະທຳ ແລະ ສາສະໜາຂອງຜູ້ຖືກເຄາະຮ້າຍ, ຄວາມຕ້ອງການດ້ານການເງິນ ໂດຍສະເພາະ ເພື່ອສະໜັບສະໜູນຄອບຄົວຂອງເຂົາເຈົ້າ, ປະເພດຂອງຄວາມຮູ້ ແລະ ທັກສະທີ່ຜູ້ຖືກເຄາະຮ້າຍຕ້ອງການໄດ້ຮັບ ແລະ ອື່ນໆ. ດັ່ງນັ້ນ, ຜູ້ໃຫ້ບໍລິການສູນພັກເຊົາ ຫຼື ຜູ້ຄຸ້ມຄອງກໍລະນີ ມີພັນທະໃນການສ້າງແຜນພັດທະນາໃຫ້ແຕ່ລະບຸກຄົນ ເພື່ອສ້າງຄວາມເຂົ້າໃຈຄວາມຕ້ອງການສະເພາະ ແລະ ວາງແຜນການຊ່ວຍເຫຼືອທີ່ມີປະສິດທິພາບທີ່ສຸດ. ຜູ້ຖືກເຄາະຮ້າຍຄົນໄທ ທີ່ບໍ່ຕ້ອງການຢູ່ໃນສູນພັກເຊົາ ສາມາດກັບຄືນສູ່ຄອບຄົວຂອງເຂົາເຈົ້າໄດ້ ໂດຍສູນພັກເຊົາໃຫ້ການຊ່ວຍເຫຼືອໃນການກັບບ້ານ.

*ຮູບແບບສູນພັກເຊົາທີ່ມີຄວາມສຸກຂອງໄທ ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ໃຫຍ່ ອອກຈາກສູນ ແລະ ຊອກວຽກເຮັດງານທຳ ພາຍຫຼັງໄລຍະເວລາໃນການຟື້ນຟູ ເພື່ອໃຫ້ເຂົາເຈົ້າບໍ່ຮູ້ສຶກວ່າຕິດກັບຢູ່ໃນສູນພັກເຊົາ. ຜູ້ຖືກເຄາະຮ້າຍ ມີອິດສະລະໃນການປະກອບຄວາມຄິດເຫັນ ຕໍ່ກັບເມນູອາຫານໃນແຕ່ລະອາທິດ, ແຕ່ງອາຫານພື້ນບ້ານຂອງຕົນ, ຕັດສິນໃຈທີ່ຈະຮັບການຝຶກອົບຮົມດ້ານວິຊາຊີບ ແລະ ເລືອກເວລາທີ່ຈະພັກຜ່ອນ. ສູນພັກເຊົາ ຄວນມີຄວາມຮູ້ສຶກຄືກັບບ້ານຂອງເຂົາເຈົ້າ. ພວກເຮົາຮັບຟັງຜູ້ຖືກເຄາະຮ້າຍດ້ວຍຄວາມຕັ້ງໃຈ. ຖ້າພວກເຮົາຄິດວ່າການຕັດສິນໃຈ ຫຼື ຄວາມປາດຖະໜາຂອງເຂົາເຈົ້າ ອາດຈະເຮັດໃຫ້ເຂົາເຈົ້າໄດ້ຮັບອັນຕະລາຍ. ພວກເຮົາຈະອະທິບາຍສິ່ງດັ່ງກ່າວໃຫ້ແກ່ເຂົາເຈົ້າ.*

*---ກະຊວງ MSDHS, ກອງປະຊຸມປຶກສາຫາລືລະດັບຊາດຂອງໄທ, ວັນທີ 13 ທັນວາ 2022.*

ອົງການ NGO ໃນກຳປູເຈຍ ພະຍາຍາມທີ່ຈະກຳນົດໄລຍະເວລາໃນການພັກອາໄສ ແລະ ໂຄງການຊ່ວຍເຫຼືອທີ່ສູນພັກເຊົາ ໂດຍຂຶ້ນກັບຄວາມຕ້ອງການ ແລະ ສະພາບແວດລ້ອມຂອງແຕ່ລະບຸກຄົນ. ມີການນຳໃຊ້ຮູບແບບທີ່ພັກເຊົາທີ່ເປັນໄລຍະຂ້າມຜ່ານ ໂດຍສຸມໃສ່ການບຳບັດຄວາມສຳພັນ ແລະ ການເຊື່ອມສານ ການພັດທະນາຂອງຜູ້ພັກອາໄສ ເຂົ້າໃນກິດຈະກຳປະຈຳວັນ. ຜູ້ຖືກເຄາະຮ້າຍສາມາດເລືອກທີ່ຈະຢູ່ໄດ້ໃນໄລຍະສັ້ນ ພຽງແຕ່ ໜຶ່ງ ຫາ ສາມອາທິດ ຫຼື ເລືອກທີ່ຈະຢູ່ດົນກວ່າ ເພື່ອໄດ້ຮັບການຝຶກອົບຮົມດ້ານວິຊາຊີບ ຫຼື ມີວຽກເຮັດງານທຳ. ການຈ້າງງານ ຫຼື ການຝຶກອົບຮົມວິຊາຊີບ ໃຫ້ແກ່ຜູ້ພັກອາໄສໄລຍະຍາວມີເວລາແຕ່ສາມເດືອນ ຫາ ຫົກເດືອນ ແລະ ມັກຈະມີການຝຶກອົບຮົມທີ່ຢູ່ນອກສູນພັກເຊົາ ໂດຍຜ່ານການຮ່ວມມືກັບອົງການ NGO ຮ່ວມກັບນາຍຈ້າງ ແລະ ແຜນງານຝຶກອົບຮົມ. ການຮັບຮູ້ວ່າ ການສະໜັບສະໜູນຜູ້ພັກເຊົາ ແລະ ການຄຸ້ມຄອງ ເປັນໜ້າທີ່ທີ່ຕ້ອງມີທັກສະນະທີ່ສູງ, ເຂົາເຈົ້າຈ້າງພະນັກງານທີ່ມີຄຸນວຸດທິ ເພື່ອຮັບຜິດຊອບຕໍ່ກັບການເບິ່ງແຍງຜູ້ຖືກເຄາະຮ້າຍໂດຍກົງ. ຮັບປະກັນວ່າພະນັກງານເຫຼົ່ານີ້ ໄດ້ຮັບການຊີ້ນຳທີ່ດີ ທັງການຊີ້ນຳທາງຄຣີນິກ/ການສອບຖາມ (ທັງພາຍໃນ ແລະ ພາຍນອກ ກ່ຽວກັບແຕ່ລະບຸກຄົນ ແລະ ກຸ່ມ) ແລະ ໃນແງ່ມຸມຂອງການເບິ່ງວຽກເພື່ອໃຫ້ມີການຄຸ້ມຄອງສະພາບແວດລ້ອມທີ່ພັກເຊົາທີ່ດີ.

ເຊັ່ນດຽວກັນກັບອົງການ NGO ໃນ ສປປ ລາວ ທີ່ນຳໃຊ້ວິທີການທີ່ເປັນແຕ່ລະກໍລະນີ ໃນເວລາສະໜອງທີ່ພັກເຊົາ ແລະ ການສະໜັບສະໜູນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

*ໄລຍະເວລາໃນການຢູ່ໃນສູນ ບໍ່ໄດ້ກຳນົດຕາຍຕົວ, ເຂົາເຈົ້າສາມາດຢູ່ກັບພວກເຮົາໄດ້ ເປັນໄລຍະເວລາສັ້ນ, ກາງ ແລະ ຍາວ ຂຶ້ນກັບສະພາບແວດລ້ອມຂອງເຂົາເຈົ້າ ແລະ ເພື່ອຮັບປະກັນວ່າ ເຂົາເຈົ້າປອດໄພທີ່ຈະກັບໄປຫາຄອບຄົວ. ນັກສັງຄົມສົງເຄາະຂອງພວກເຮົາ ຈະຕິດຕາມເຂົາເຈົ້າ ເພື່ອໃຫ້ການຊ່ວຍເຫຼືອ ເຖິງວ່າເຂົາເຈົ້າຈະຖືກສົ່ງກັບບ້ານແລ້ວ. ນະໂຍບາຍຫຼັກຂອງພວກເຮົາ ແມ່ນມີຄວາມຢືດຫຍຸ່ນ ອີງຕາມສະຖານະພາບ ແລະ ປະສົບການຖືກເຄາະຮ້າຍຂອງເຂົາເຈົ້າ.*

*---ອົງການບ້ານຈຸດສຸມສາກົນ (ອົງການ NGO), ກອງປະຊຸມປຶກສາຫາລືລະດັບຊາດຂອງ ສປປ ລາວ ວັນທີ 28 ກຸມພາ 2022.*

ໃນປະເທດມາເລເຊຍ, ກະຊວງພັດທະນາແມ່ຍິງ, ຄອບຄົວ ແລະ ຊຸມຊົນ (MWFCD) ໄດ້ດຳເນີນບາດກ້າວ ໃນການສົ່ງເສີມເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຜ່ານສອງແນວທາງ. ສູນພັກເຊົາຊຸກຍູ້ການນຳໃຊ້ໃຫ້ອະນຸຍາດເຄື່ອນຍ້າຍໄດ້ຢ່າງອິດສະລະໃນນາມຜູ້ຢູ່ອາໄສ ແຕ່ເບື້ອງຕົ້ນ ໃນລະຫວ່າງມີຄຳສັ່ງປົກປ້ອງຊົ່ວຄາວ. ຂະບວນການໃນການອະນຸຍາດດັ່ງກ່າວໄດ້ມີການເລັ່ງລັດໂດຍພາກສ່ວນທີ່ກ່ຽວຂ້ອງ ໃນມຸມມອງທີ່ເຫັນວ່າມີຄວາມສຳຄັນໃນການສົ່ງເສີມການເບິ່ງແຍງ ແລະ ປົກປ້ອງຜູ້ຖືກເຄາະຮ້າຍໃນມາເລເຊຍ. ການອະນຸມັດຂຶ້ນກັບການປະເມີນຄວາມສ່ຽງຢ່າງຮອບດ້ານ ເຊິ່ງປະກອບດ້ວຍປະເດັ່ນດ້ານຄວາມປອດໄພ, ຈິດຕະວິທະຍາ ແລະ ສຸຂະພາບ. ໃນຂະນະດຽວກັນ, ແຕ່ລະສູນພັກເຊົາ ມີດຸນພິນິດຂອງຕົນເອງ ໃນການຕັດສິນໃຈ ຕໍ່ກັບວິທີການທີ່ດີທີ່ສຸດ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ສາມາດເຄື່ອນຍ້າຍໄດ້ຢ່າງອິດສະລະ ໂດຍບໍ່ສູນເສຍດ້ານຄວາມປອດໄພ. ຜູ້ຖືກເຄາະຮ້າຍສ່ວນໃຫຍ່ ມັກຈະໃຫ້ມີບາງຄົນມາຢູ່ນຳ ໃນເວລາທີ່ອອກຈາກສູນພັກເຊົາ ເນື່ອງຈາກເຂົາເຈົ້າຮູ້ສຶກປອດໄພຕໍ່ກັບວິທີການນີ້. ໂດຍສະເພາະຢ່າງຍິ່ງ ໃນກໍລະນີ ທີ່ຜູ້ຖືກເຄາະຮ້າຍຄົນຕ່າງປະເທດ ທີ່ບໍ່ຄຸ້ນເຄີຍກັບປະເທດ ຫຼື ສະພາບແວດລ້ອມ.

### 3.6.3 ສົ່ງເສີມການນຳໃຊ້ ການເບິ່ງແຍງທີ່ພັກອາໄສ ທີ່ອີງໃສ່ຊຸມຊົນ

ການນຳໃຊ້ການເບິ່ງແຍງທີ່ພັກອາໄສ ໂດຍອີງໃສ່ຊຸມຊົນ ນອກຈາກສູນພັກເຊົາ ຫຼື ສະຖາບັນທີ່ເປັນທາງການ ແມ່ນ ຮັບຮູ້ວ່າ ເປັນການປະຕິບັດທີ່ເປັນຕົວແບບທີ່ດີ ໂດຍ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ. ສູນເບິ່ງແຍງທີ່ພັກອາໄສທີ່ ອີງໃສ່ຊຸມຊົນນັ້ນ ເຫັນວ່າເປັນວິທີການທີ່ດີກວ່າ ໃນການ ສົ່ງເສີມການຟື້ນຟູໃນໄລຍະຍາວ ແລະ ການຟື້ນຟູຜູ້ຖືກ ເຄາະຮ້າຍ. ນອກນັ້ນ, ພາກສ່ວນທີ່ກ່ຽວຂ້ອງ ຍັງໄດ້ລາຍງານ ວ່າ ມີຄວາມພະຍາຍາມ ທີ່ຈະໃຫ້ຜູ້ຖືກເຄາະຮ້າຍກັບຄືນຫາ ຄອບຄົວຂອງເຂົາເຈົ້າໄດ້, ຖ້າຫາກມີຄວາມປອດໄພ ແລະ ຖ້າຫາກຄອບຄົວພ້ອມທີ່ຈະຮັບເອົາ ແລະ ສະໜັບສະໜູນ ເຂົາເຈົ້າ ໂດຍສະເພາະ ໃນກໍລະນີຂອງຜູ້ຖືກເຄາະຮ້າຍທີ່ ເປັນເດັກ.

*ຖ້າຜູ້ຖືກເຄາະຮ້າຍ ບໍ່ຕ້ອງການທີ່ຈະຢູ່ໃນການຄຸ້ມຄອງ ປົກປ້ອງ ແລະ ຢູ່ໃນສູນ, ພວກເຮົາກໍໃຫ້ທາງເລືອກແກ່ ເຂົາເຈົ້າ. ພວກເຮົາຍັງໄດ້ຮັບການປະເມີນຄວາມສາມາດ ຂອງຄອບຄົວ ຫຼື ພໍ່ແມ່ ບົນພື້ນຖານຈາກເຈົ້າໜ້າທີ່ ສະຫວັດດີການສັງຄົມຂັ້ນທ້ອງຖິ່ນ ເພື່ອກວດເບິ່ງ ການກະກຽມ ແລະ ຄວາມພ້ອມຂອງຜູ້ຖືກເຄາະຮ້າຍ ໃນ ການກັບຄືນຫາຄອບຄົວ. ໃນກໍລະນີທີ່ ການບໍລິການຕ່າງໆ ທີ່ຈະໄດ້ຮັບພາຍໃນຊຸມຊົນ.*

*--- DSWD, ກອງປະຊຸມປຶກສາຫາລືລະດັບຊາດຂອງຟີລິບປິນ, ວັນທີ 14 ທັນວາ 2021*





*ພວກເຮົາໄດ້ປ່ຽນໄປສູ່ການບໍລິການ ທີ່ອີງໃສ່ຊຸມຊົນ ຫຼື ການເບິ່ງແຍງຂອງຄອບຄົວ. ໃນເບື້ອງຕົ້ນ, ຜູ້ຖືກເຄາະຮ້າຍໄດ້ຮັບການເບິ່ງແຍງໃນສູນພັກເຊົາ. ປົກກະຕິພວກເຮົາຈະຕິດຕໍ່ຄອບຄົວເຂົາເຈົ້າ ແລະ ໃຫ້ເຂົາເຈົ້າໃຫ້ການຊ່ວຍເຫຼືອ. ພວກເຮົາບໍ່ຕ້ອງການໃຫ້ຜູ້ຖືກເຄາະຮ້າຍຖືກສຽດສີ ໂດຍຊຸມຊົນທ້ອງຖິ່ນ ໃນເວລາທີ່ກັບຄືນຫາຄອບຄົວ. ພວກເຮົາຕ້ອງເສີມສ້າງແຮງບັນດານໃຈ, ຊີວິດ ແລະ ເຈດຈຳນົງ ເພື່ອໃຫ້ເຂົາເຈົ້າສາມາດໄປຕໍ່ໄດ້.*

*--- ກະຊວງສັງຄົມ, ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 28 ມັງກອນ 2022.*

*ໃນກໍລະນີທີ່ເໝາະສົມ, ການເບິ່ງແຍງຜູ້ພັກອາໄສ ໃນສູນພັກເຊົາ ຄວນຈະເປັນໄລຍະສັ້ນ. ໃນກໍລະນີທີ່ຜູ້ພັກອາໄສປາດຖະໜາທີ່ຈະຢູ່ດົນກວ່າ ເພື່ອໄດ້ຮັບຝຶກອົບຮົມວິຊາຊີບ ຫຼື ສະຖານທີ່ເຮັດວຽກ, ພວກເຮົານໍາໃຊ້ຄູ່ຮ່ວມງານພາຍນອກ ແລະ ພິຈາລະນາຄວາມເປັນໄດ້ໃນການເຊົ່າຫ້ອງທີ່ໃກ້ກັບບ່ອນເຮັດວຽກ ເພື່ອຫຼີກລ້ຽງການອາໄສຢູ່ສູນພັກເຊົາໂດຍບໍ່ຈໍາເປັນ.*

*--- Ratanak International, ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 3 ທັນວາ 2021.*

### 3.6.4 ການສຸມໃສ່ການຟື້ນຟູ ແລະ ການກັບຄືນສູ່ສັງຄົມ

ການສະໜອງສູນພັກເຊົາແກ່ຜູ້ຖືກເຄາະຮ້າຍ ແມ່ນບໍ່ໄດ້ສິ້ນສຸດແຕ່ພຽງເທົ່ານັ້ນ, ແຕ່ເປັນສ່ວນໜຶ່ງໃນການສືບຕໍ່ການເບິ່ງແຍງດູແລ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ພາກສ່ວນທີ່ກ່ຽວຂ້ອງເນັ້ນໃຫ້ເຫັນ ຄວາມສຳຄັນໃນການສະໜັບສະໜູນການຟື້ນຟູຜູ້ຖືກເຄາະຮ້າຍ ແລະ ກະກຽມການກັບຄືນສູ່ສັງຄົມຂອງເຂົາເຈົ້າ.

> *ແຜນງານການຟື້ນຟູ ແລະ ການສົ່ງກັບຄືນສູ່ສັງຄົມ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (RRPTP) ໄດ້ຮັບການອຳນວຍຄວາມສະດວກ ໂດຍຜ່ານການເຊື່ອມສານ ແລະ ຕອບສະໜອງຕໍ່ກັບຄຸ້ມຄອງກໍລະນີ ຕາມເພດພາວະ ໂດຍທີ່ນັກສັງຄົມສົງເຄາະທີ່ໄດ້ຮັບໃບອະນຸຍາດ ວິເຄາະບັນຫາ ແລະ ຄວາມຕ້ອງການຂອງຜູ້ຖືກຄ້າມະນຸດ ແລະ ຄອບຄົວຂອງເຂົາເຈົ້າ. ນັກສັງຄົມສົງເຄາະຂອງພວກເຮົາ ຮັບຮູ້ເຖິງອັກຄະຕິດ້ານເພດພາວະ ແລະ ນຳໃຊ້ການເບິ່ງແຍງທີ່ໄດ້ຮັບຮູ້ຄວາມບອບຊ້ຳດ້ານຈິດໃຈ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລອດຊີວິດຈາກການຄ້າມະນຸດ. ເຊິ່ງກຳນົດ ແລະ ປະເມີນຂໍ້ຂັດແຍ່ງພາຍໃນຄອບຄົວ ແລະ ຊ່ວຍຜູ້ຖືກເຄາະຮ້າຍຟື້ນຟູສາຍສຳພັນກັບຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ. ເມື່ອກັບຄືນສູ່ສັງຄົມສຳເລັດແລ້ວ, ພວກເຮົາຫວັງວ່າຜູ້ລອດຊີວິດຈາກການຄ້າມະນຸດ ສາມາດກ້າວຕໍ່ໄປໃນໄລຍະທີສາມໄດ້ ເຊິ່ງໝາຍເຖິງການຢູ່ໄດ້ດ້ວຍຕົນເອງ.*
>
> *--- DSWD, ກອງປະຊຸມປຶກສາຫາລືລະດັບຊາດຂອງຟິລິບປິນ, ວັນທີ 14 ທັນວາ 2021*

> *ພາຍໃຕ້ກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດຂອງໄທ, ພວກເຮົາ ໄດ້ສ້າງກອງທຶນຕ້ານການຄ້າມະນຸດ ໂດຍມີເປົ້າໝາຍໃນການສະໜອງຄ່າຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍ ແຕ່ສາມາດນຳໃຊ້ ໃນການສະໜັບສະໜູນຄ່າໃຊ້ຈ່າຍປະຈຳວັນ, ຄ່າປິ່ນປົວ, ການສຶກສາ ຫຼື ຝຶກອົບຮົມວິຊາຊີບ. ຕົວຢ່າງ, ຖ້າຜູ້ຖືກເຄາະຮ້າຍ ຕ້ອງການທີ່ຈະຝຶກການເປັນຜູ້ເຮັດກາເຟ ແລະ ຊົງກາເຟ (barista), ເປັນພໍ່ຄົວ ແມ່ຄົວ ແລະ ຮຽນເຮັດອາຫານ, ເຂົາເຈົ້າສາມາດຂໍທຶນສະໜັບສະໜູນໄດ້. ຜູ້ຖືກເຄາະຮ້າຍຫຼາຍຄົນ ຕ້ອງການຮຽນພາສາອັງກິດ ເພື່ອທີ່ຈະສາມາດເຮັດວຽກທີ່ຕ່າງປະເທດໄດ້ໂດຍຖືກກົດໝາຍ. ທຶນດັ່ງກ່າວ ສາມາດໃຫ້ທຶນຈຳນວນໜຶ່ງ ໃນການເລີ່ມຕົ້ນຊີວິດໃໝ່ໄດ້. ເງິນນີ້ ມີໃຫ້ທັງຄົນສັນຊາດໄທ ແລະ ບໍ່ແມ່ນສັນຊາດໄທ ແລະ ໃຫ້ໂດຍບໍ່ມີເງື່ອນໄຂໃດໆ. ເຖິງຢ່າງໃດກໍຕາມ, ຖ້າເຂົາເຈົ້າບໍ່ສາມາດເຂົ້າເຖິງກອງທຶນ, ພວກເຮົາສາມາດປະສານຫາອົງການ NGO ແລະ ຄູ່ຮ່ວມງານອື່ນໆ ເພື່ອຂໍການສະໜັບສະໜູນ.*
>
> *--- ກະຊວງ MSDHS, ກອງປະຊຸມປຶກສາຫາລືລະດັບຊາດຂອງໄທ, ວັນທີ 13 ທັນວາ 2022.*

> *ຜູ້ພັກອາໄສໃນສູນພັກເຊົາບາງແຫ່ງ ບໍ່ສາມາດຊອກຫາການຈ້າງງານທາງນອກໄດ້ ສະນັ້ນ, ສິ່ງທີພວກເຮົາເຮັດໄດ້ ແມ່ນສ້າງບົດບາດພາຍໃນສູນພັກເຊົາໃຫ້ແກ່ເຂົາເຈົ້າ ເຊັ່ນ: ຜູ້ນຳພາສູນ, ຜູ້ຊ່ວຍຄົວ, ຜູ້ປະສານງານຊັກລີດ, ຜູ້ແລ່ນວຽກ ຫຼື ປະສານງານເພື່ອການນັດໝາຍຜູ້ພັກອາໄສອື່ນ. ມີການໃຫ້ເງິນເດືອນແກ່ເຂົາເຈົ້າ ເພື່ອຊ່ວຍບັນເທົາຄວາມກັງວົນດ້ານການເງິນ. ຜູ້ພັກອາໄສສ່ວນໃຫຍ່ເປັນຜູ້ຫາລ້ຽງຊີບພຽງຄົນດຽວ ແລະ ເຂົາເຈົ້າມີຫຼາຍຄົນທີ່ຢູ່ທາງບ້ານ ທີ່ອາໄສລາຍຮັບຈາກເຂົາເຈົ້າ. ແລະ ຫຼາຍຄັ້ງ ພວກເຮົາໄດ້ຍິນຄອບຄົວ, ບໍ່ໄດ້ໂທມາຖາມວ່າ "ເຈົ້າເປັນແນວໃດ" ແຕ່ຖາມວ່າ "ເຈົ້າຈະໂອນເງິນກັບຕອນໃດ".*
>
> *---ບົດນຳສະເໜີ ໂດຍ HOME ຂອງສິງກະໂປ ທີ່ກອງປະຊຸມປຶກສາຫາລືຂອງຟິລິບປິນ, ວັນທີ 14 ທັນວາ 2021.*



### 3.6.5 ການສົ່ງເສີມວິທີການແບບສະຫະວິຊາຊີບ ຕໍ່ການສະໜັບສະໜູນຜູ້ຖືກເຄາະຮ້າຍ

ການນໍາໃຊ້ວິທີການແບບສະຫະວິຊາຊີບ ແມ່ນເພື່ອຮັບປະກັນວ່າ ມີການປະສານງານທີ່ເໝາະສົມລະຫວ່າງໜ່ວຍງານຕ່າງໆ ແລະ ລະຫວ່າງໜ່ວຍງານຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ທີ່ສໍາຄັນກວ່ານັ້ນ ແມ່ນຄວາມຕ້ອງການດ້ານຕ່າງໆຂອງຜູ້ຖືກເຄາະຮ້າຍ ໄດ້ຮັບການເບິ່ງແຍງດູແລ. ເມື່ອມີການຮ່ວມມືທີ່ເຂັ້ມແຂງ, ຜົນໄດ້ຮັບທັງຜູ້ໃຫ້ການບໍລິການ ແລະ ຜູ້ຖືກເຄາະຮ້າຍ ດໍາເນີນໄປໃນລັກສະນະທາງບວກ.

> *ພວກເຮົາເຮັດວຽກແບບທີມສະຫະວິຊາຊີບ, ບໍ່ພຽງແຕ່ VFI, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຫຼື ກະຊວງສຶກສາທິການ ແລະ ກິລາ ແຕ່ຍັງຮ່ວມມືກັບສະຫະພັນແມ່ຍິງຂັ້ນແຂວງ ກ່ຽວກັບການໃຫ້ຄໍາປຶກສາ ແລະ ຝຶກອົບຮົມວິຊາຊີບ. ໜ່ວຍງານທີ່ໃຫ້ການປິ່ນປົວແລະ ສາທາລະນະສຸກ ກໍເປັນອີກພາກສ່ວນໜຶ່ງທີ່ສໍາຄັນຂອງພວກເຮົາ. ພວກເຮົາຍັງເຮັດວຽກຢ່າງໃກ້ຊິດກັບທະນາຍຄວາມ ແລະ ຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃນການດໍາເນີນຄະດີ, ການສືບສວນ-ສອບສວນ ຫຼື ຊອກຫາຄອບຄົວ.*
>
> *---ອົງການບ້ານຈຸດສຸມສາກົນ (ອົງການ NGO), ກອງປະຊຸມປຶກສາຫາລືລະດັບຊາດຂອງ ສປປ ລາວ ວັນທີ 28 ກຸມພາ 2022.*

> *ພວກເຮົາແຈ້ງຜູ້ຖືກເຄາະຮ້າຍກ່ຽວກັບອົງການ NGO ທີ່ສາມາດໃຫ້ການຊ່ວຍເຫຼືອທີ່ເປັນໄປໄດ້ແກ່ເຂົາເຈົ້າໃນໄລຍະຍາວ ລວມທັງ ໜ່ວຍງານຕ່າງໆຂອງລັດຖະບານ ທີ່ສາມາດໃຫ້ການສະໜັບສະໜູນແກ່ເຂົາເຈົ້າ ໃນເວລາທີ່ກັບຄືນບ້ານ. ພວກເຮົາແບ່ງປັນ ຂໍ້ມູນກ່ຽວກັບກໍລະນີດັ່ງກ່າວ ກັບໜ່ວຍງານທີ່ຮັບຜິດຊອບ ເພື່ອໃຫ້ໜ່ວຍງານດັ່ງກ່າວກະກຽມການຊ່ວຍເຫຼືອຜູ້ແກ່ຖືກເຄາະຮ້າຍ. ອົງການ NGO ບາງອົງການ ມີຄວາມຊ່ຽວຊານໃນຂະບວນການຍຸຕິທໍາທາງອາຍາ ເຊິ່ງສາມາດສະໜັບສະໜູນຂະບວນການດໍາເນີນຄະດີ. ມັນຂຶ້ນກັບຜູ້ຖືກເຄາະຮ້າຍ ວ່າຈະເຂົ້າຮ່ວມ ແລະ ໃຫ້ NGO ເຮັດວຽກກັບເຂົາເຈົ້າ.*
>
> *---ກະຊວງ MSDHS, ກອງປະຊຸມປຶກສາຫາລືລະດັບຊາດຂອງໄທ, ວັນທີ 13 ທັນວາ 2022.*

## 3.6.6 ການປັບຕົວໃຫ້ເຂົ້າກັບສະພາບວິກິດການ ແລະ ມະນຸດສະທຳ

ການແຜ່ລະບາດຂອງພະຍາດ COVID-19 ບັງຄັບໃຫ້ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ບໍ່ແມ່ນພາກລັດ ປັບຕົວໃຫ້ເຂົ້າກັບວິກິດການທີ່ກຳລັງມີການປ່ຽນແປງ ແລະ ຄົ້ນຄິດສິ່ງໃໝ່ ໃນການເບິ່ງແຍງດູແລ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ. ການຮ່ວມມືຢ່າງໃກ້ຊິດລະຫວ່າງໜ່ວຍງານທີ່ກ່ຽວຂ້ອງ ມີລັກສະນະທີ່ເປັນປັດໄຈຫຼັກ ໃນການລິເລີ່ມຂອງຄວາມສຳເລັດຕ່າງໆ.

*ໃນຊ່ວງເວລາຂອງການແຜ່ລະບາດ, ພວກເຮົາເຮັດວຽກຢ່າງໃກ້ຊິດກັບກະຊວງສັງຄົມ ໃນຂັ້ນທ້ອງຖິ່ນ ເພື່ອສິ່ງຕໍ່ຜູ້ຖືກເຄາະຮ້າຍ ທີ່ຕ້ອງການກັບຄືນສູ່ຊຸມຊົນ. ໂດຍໃຫ້ທາງເລືອກແກ່ຜູ້ຖືກເຄາະຮ້າຍ ເຖິງວ່າບາງຄົນອາໄສຢູ່ເຂດທີ່ເຂົ້າເຖິງໄດ້ຍາກ ເນື່ອງຈາກສະຖານະການໂຄວິດໃນເວລານັ້ນ. ພວກເຮົາໄດ້ວາງແຜນການປິ່ນປົວສະເພາະ ສໍາລັບແຕ່ລະບຸກຄົນ ເພື່ອຮັບປະກັນວ່າການສະໜັບສະໜູນຂະໜາດນ້ອຍ ຫຼື ແບບຕົວຕໍ່ຕົວ. ສິ່ງນີ້ເປັນສິ່ງທີ່ສໍາຄັນຕໍ່ກັບອາລົມ ແລະ ຈິດໃຈຂອງຜູ້ຖືກເຄາະຮ້າຍ ເນື່ອງຈາກການເຄື່ອນໄຫວໄປມາຂອງເຂົາເຈົ້າຖືກຈຳກັດ ຍ້ອນການປິດເມືອງຂອງລັດ ແລະ ການປິດກິດຈະການ ການຈ້າງງານ ຫຼື ກິດຈະກຳຝຶກອົບຮົມວິຊາຊີບ.*

*--- Ratanak International, ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 3 ທັນວາ 2021.*



*ໃນຊ່ວງການແຜ່ລະບາດຂອງ COVID-19, ສູນສົ່ງຕໍ່ປອຍເປັດ ມີການຮ່ວມມືທີ່ດີກັບອົງການປົກຄອງຂັ້ນທ້ອງຖິ່ນ ແລະ ສູນກັກຕົວຂອງລັດຖະບານ ໃນຂັ້ນແຂວງ ໃນການສົ່ງແຮງງານກັບຈາກປະເທດໄທ ຫາສູນກັກຕົວ. ບໍ່ມີການກໍານົດຕົວຜູ້ຖືກເຄາະຮ້າຍທີ່ ສູນ PTC ເນື່ອງຈາກ COVID-19. ມີການກໍານົດຕົວຜູ້ຖືກເຄາະຮ້າຍ ຫຼັງຈາກທີ່ແຮງງານເຄື່ອນຍ້າຍທີ່ເດີນທາງກັບຈາກສູນກັກຕົວແລ້ວ 14 ວັນ ແລະ ໃນເວລາທີ່ເຂົາເຈົ້າກັບຄືນຊຸມຊົນ. ຜູ້ຖືກເຄາະຮ້າຍໄດ້ຮັບການກໍານົດຕົວໂດຍອົງການ NGO ໃນຂັ້ນທ້ອງຖິ່ນ, ຂັ້ນແຂວງ ແລະ ເມືອງ MOSVY.*

*--- ຜູ້ຈັດການສູນສົ່ງຕໍ່ປອຍເປັດ, ກະຊວງກິດຈະການສັງຄົມ, ນັກຮົບເກົ່າ ແລະ ການຟື້ນຟູຊາວໜຸ່ມ, ກອງປະຊຸມປຶກສາຫາລືລະດັບຊາດຂອງກໍາປູເຈຍ, ວັນທີ 3 ທັນວາ 2021.*

*ໃນຊ່ວງການແຜ່ລະບາດຂອງ ໂຄວິດ-19, ພວກເຮົາໄດ້ປັບຕົວໃຫ້ເຂົ້າກັບສະຖານະການໄດ້ໄວ ແລະ (ໄດ້ມີ) ຄໍາແນະນໍາ ໂດຍອີງໃສ່ຫຼັກການດ້ານສາທາລະນະສຸກ, ໃຫ້ບູລິມະສິດການບໍລິການທາງອອນລາຍ ແລະ ໃຫ້ການປຶກສາຫາລືແບບເຊິ່ງໜ້າ ກໍຕໍ່ເມື່ອມີຄວາມຈໍາເປັນເທົ່ານັ້ນ. ສູນພັກເຊົາໄດ້ອອກແບບ ການປ່ຽນແປງ ອີງຕາມມາດຕະຖານຫຼັກການສາທາລະນະສຸກ ແລະ ເອກະສານສະເພາະ ຂອງການບໍລິການຂອງພວກເຮົາ ໃນໄລຍະການແຜ່ລະບາດ.*

*--- Ratanak International, ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 3 ທັນວາ 2021*

*ກະຊວງສັງຄົມ ໄດ້ກະກຽມ ສູນປົກປ້ອງສະໜອງທີ່ພັກເຊົາ ແລະ ດູແລຄວາມບອບຊໍ້າດ້ານຈິດໃຈ (RPTC), Bambu Apus RPTC, ສູນຟື້ນຟູທາງສັງຄົມ 41 ສູນ ສໍາລັບການສົ່ງແຮງງານເຄື່ອນຍ້າຍຄືນອິນໂດເນເຊຍ ທີ່ມີບັນຫາຈໍານວນ 7,300 ຄົນ ກັບຈາກມາເລເຊຍ ໃນເດືອນມິຖຸນາ-ກໍລະກົດ 2021. ນອກນັ້ນ ເພື່ອປະສານງານກັບກະຊວງການຕ່າງປະເທດ, ກະຊວງກິດຈະການທາງສັງຄົມ ໄດ້ເຮັດວຽກຮ່ວມກັບໜ່ວຍສະເພາະກິດອື່ນໆ ລວມທັງລັດຖະບານລະດັບພາກພື້ນ ເພື່ອພັດທະນາແຜນການສົ່ງແຮງງານເຄື່ອນຍ້າຍອິນໂດເນເຊຍກັບຄືນ ໂດຍຜ່ານຈຸດຜ່ານເຂົ້າຂອງ Pinang ແລະ Pontianak*

*--- ກະຊວງສັງຄົມ, ກອງປະຊຸມປຶກສາຫາລືລະດັບຊາດຂອງອິນໂດເນເຊຍ, ວັນທີ 28 ມັງກອນ 2022*

*ເດືອນ ເມສາ 2020, DSWD ໄດ້ອອກຄໍາແນະນໍາ ໃຫ້ແກ່ຫົວໜ້າສູນທຸກແຫ່ງ ເພື່ອນໍາໃຊ້ມາດຕະການປ້ອງກັນໃນສູນ DSWD ແລະ NGO ເພື່ອຮັບປະກັນວ່າສູນພັກເຊົາທຸກແຫ່ງ ພ້ອມທີ່ຈະຕອບໂຕ້ກັບ ບັນຫາທາງສຸຂະພາບ ແລະ COVID-19.*

*—-- DSWD, ກອງປະຊຸມປຶກສາຫາລືລະດັບຊາດຂອງຟີລິບປິນ, ວັນທີ 14 ທັນວາ 2021*

# ພາກທີ 4:
# ຂໍ້ແນະນຳ

ການໃຫ້ບໍລິການສູນພັກເຊົາ ແກ່ຜູ້ລອດຊີວິດຈາກການຄ້າມະນຸດ ແລະ ການຂູດຮີດທາງເພດ ເປັນສິ່ງທີ່ຫຍຸ້ງຍາກ ແລະ ຊັບຊ້ອນ. ກອງປະຊຸມປຶກສາຫາລືລະດັບຊາດ ໄດ້ສະເໜີຂໍ້ສະເໜີແນະນຳຕ່າງໆ ໃນການຕອບໂຕ້ກັບການປຶກສາຫາລືຂອງ ຕໍ່ກັບການປະຕິບັດຕົວຈິງຂອງສູນພັກເຊົາໃນອາຊຽນ. ບາງຂໍ້ສະເໜີແນະນຳ ໄດ້ກ່າວເຖິງບັນຫາເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍໂດຍກົງ ແລະ ບາງຄຳເຫັນກໍ່ກ່າວເຖິງສິ່ງທ້າທາຍໃນການເບິ່ງແຍງດູແລ ແລະ ປົກປ້ອງຜູ້ຖືກເຄາະຮ້າຍໄວ້ແບບກວ້າງຂວາງ ຕາມທີ່ອະທິບາຍໄວ້ໃນເອກະສານສະບັບນີ້. ຄະນະກຳມາທິການ ACWC ຕ້ອງການທີ່ຈະສະເໜີ ຂໍ້ສະເໜີແນະນຳລຸ່ມນີ້ ໃນເວລາທີ່ໃຫ້ບໍລິການສູນພັກເຊົາ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ບາງຂໍ້ສະເໜີແນະນຳ ກໍພັດທະນາມາຈາກບົດລາຍງານແຜນງານ ASEAN-ACT ປີ 2018.

### ສຳລັບຜູ້ປະຕິບັດຕົວຈິງ

1. ນຳໃຊ້ວິທີການບໍ່ເຮັດໄພອັນຕະລາຍ ໃນການສະໜອງສູນພັກເຊົາ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[27] ສິ່ງນີ້ຮຽກຮ້ອງໃຫ້ຜູ້ໃຫ້ບໍລິການສູນພັກເຊົາ ຄຳນຶງວ່າຕ້ອງບໍ່ສ້າງມຸມມອງທີ່ກະທົບຕໍ່ກັບປະສົບການຄວາມບອບຊ້ຳດ້ານຈິດໃຈຂອງຜູ້ລອດຊີວິດ, ນຳເອົາການປະຕິບັດທີ່ຮັບຮູ້ເຖິງຄວາມບອບຊ້ຳດ້ານຈິດໃຈ ແລະ ເຄົາລົບຄວາມຕ້ອງການທີ່ປອດໄພທາງອາລົມຢ່າງຕໍ່ເນື່ອງ.

2. ສົ່ງເສີມສູນພັກເຊົາທີ່ອີງໃສ່ສິດທິຂອງຜູ້ຖືກເຄາະຮ້າຍ ທີ່ສຸມໃສ່ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ແລະ ໃຫ້ການເບິ່ງແຍງດູແລ ແລະ ບໍລິການເຂົາເຈົ້າ ດ້ວຍຄວາມເຫັນອົກເຫັນໃຈ ແລະ ບໍ່ມີການຕັດສິນເຂົາເຈົ້າ. ວິທີການດັ່ງກ່າວ ໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍ ໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າ ໃນການວາງແຜນ ແລະ ການຕັດສິນໃຈຕໍ່ກັບຄວາມປອດໄພ, ການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງເຂົາເຈົ້າ. ມັນຈຳເປັນ ທີ່ຜູ້ໃຫ້ບໍລິການສູນພັກເຊົາ ຕ້ອງມີສ່ວນຮ່ວມກັບຜູ້ຖືກເຄາະຮ້າຍຢ່າງຮອບດ້ານ ແລະ ກົງໄປກົງມາ ແລະ ພັດທະນາແຜນການປິ່ນປົວ ແຕ່ລະບຸກຄົນ.

3. ຮັບປະກັນວ່າສູນພັກເຊົາ ແລະ ຜູ້ໃຫ້ບໍລິການອື່ນໆ ແມ່ນໄດ້ສະໜອງການຊ່ວຍເຫຼືອດ້ວຍຄວາມສະໝັກໃຈ ແລະ ໄດ້ຮັບຄວາມຍິນຍອມຂັ້ນພື້ນຖານ. ຜູ້ຖືກເຄາະຮ້າຍ ຄວນເຂົ້າໃຈສິດ ແລະ ພັນທະຂອງຕົນເອງຢ່າງເຕັມສ່ວນ ກ່ອນທີ່ຈະເຂົ້າພັກໃນສູນພັກເຊົາ. ພະນັກງານສູນພັກເຊົາ ຕ້ອງໃຊ້ເວລາໃນການອະທິບາຍລະບຽບຂອງສູນພັກເຊົາ ແກ່ຜູ້ຖືກເຄາະຮ້າຍ ແລະ ມີຜູ້ແປພາສາ ຖ້າຈຳເປັນ ແລະ ຮັບປະກັນວ່າຜູ້ຖືກເຄາະຮ້າຍ ສະບາຍໃຈກັບລະບຽບດັ່ງກ່າວ. ຄວນໄດ້ຮັບການຍິນຍອມເປັນຂັ້ນພື້ນຖານ ແລະ ຜູ້ຖືກເຄາະຮ້າຍ ຄວນອອກຈາກສູນພັກເຊົາ ຖ້າມີຄວາມປອດໄພ.



4. ອໍານວຍຄວາມສະດວກດ້ານຄວາມປອດໄພ ແລະ ໂອກາດຢ່າງມີໂຄງສ້າງ ແກ່ຜູ້ຖືກເຄາະຮ້າຍ ເພື່ອຕິດຕໍ່ກັບຄອບຄົວຂອງເຂົາເຈົ້າ ໂດຍການສະໜັບສະໜູນຈາກພະນັກງານ. ຜູ້ຖືກເຄາະຮ້າຍຄວນມີອິດສະລະທີ່ຈະພົບກັບຄອບຄົວ, ໝູ່ເພື່ອນ, ເວັ້ນແຕ່ ຄວາມປອດໄພ ແລະ ສະຫວັດດີພາບຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ພັກອາໄສອື່ນ ຫຼື ພະນັກງານສູນພັກເຊົາ ອາດຈະຖືກບຸກລຸກ. ການສ້າງການສື່ສານທີ່ຊັດເຈນ ແລະ ຈິງໃຈກັບຄອບຄົວຜູ້ຖືກເຄາະຮ້າຍ ລວມທັງການຈັດການກັບການຄຸ້ມຄອງຄວາມຄາດຫວັງຂອງເຂົາເຈົ້າ ໃນເວລາທີ່ສາມາດພົບປະ ຫຼື ເວົ້າກັບຜູ້ຖືກເຄາະຮ້າຍ. ສິ່ງນີ້ ຈະຊ່ວຍໃຫ້ຄອບຄົວຂອງຜູ້ຖືກເຄາະຮ້າຍເຂົ້າໃຈໃນເວລາທີ່ຜູ້ຖືກເຄາະຮ້າຍ ຮູ້ສຶກບໍ່ພ້ອມ ທີ່ຈະພົບກັບເຂົາເຈົ້າ.

5. ຮັບປະກັນວ່າດ້ານໜ້າ ແລະ ພາຍໃນຂອງສູນພັກເຊົາບໍ່ຖືກັບຄຸກ. ສົ່ງເສີມສະພາບແວດລ້ອມທີ່ອົບອຸ່ນ ແລະ ເປັນມິດຢູ່ພາຍໃນສູນ. ສູນພັກເຊົາ ຄວນຈະຕັ້ງຢູ່ໃນຊຸມຊົນ ແລະ ບໍ່ແມ່ນເຂດຫ່າງໄກ ແລະ ໄກຈາກຄວາມຈະເລີນ. ສູນພັກເຊົາ ຄວນຈະຫຼີກລ້ຽງປ້າຍທີ່ຊັດເຈນ ແລະ ສະຖານທີ່ຄວນຮັກສາເປັນຄວາມລັບ ເພື່ອປົກປ້ອງຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງພະນັກງານສູນ ແລະ ຜູ້ພັກອາໄສ.

6. ເພື່ອຮັບປະກັນການຊ່ວຍເຫຼືອທີ່ເໝາະສົມ ແລະ ມີປະສິດທິພາບ, ມັນເປັນສິ່ງທີ່ສຳຄັນ ທີ່ຕ້ອງການໃຫ້ການສະ ໜັບສະໜູນ ສະເພາະແຕ່ລະບຸກຄົນ ເພື່ອພິຈາລະນາຄວາມຕ້ອງການສະເພາະຂອງແຕ່ລະຄົນ, ຈຸດດີ ແລະ ຊັບພະຍາກອນ ແລະ ແຮງບັນດານໃຈຂອງແຕ່ລະຄົນ. ຕົວຢ່າງ, ການຝຶກອົບຮົມວິຊາຊີບ ຄວນໃຫ້ທັກສະທີ່ຈຳເປັນແກ່ຜູ້ຖືກເຄາະຮ້າຍ ໃນການຊອກຫາວຽກເຮັດງານທຳທີ່ຖືກກົດໝາຍ ແລະ ເໝາະສົມຫຼັງຈາກທີ່ພວກເຂົາອອກຈາກສູນ. ນີ້ໝາຍຄວາມວ່າ ການບໍລິການສູນພັກເຊົາ ຄວນຈະມີຄວາມຍືດຫຍຸ່ນ ແລະ ກະກຽມແກ້ໄຂຄວາມຕ້ອງການ ແລະ ສະຖານະການທີ່ແຕກຕ່າງກັນ ຜ່ານການສ້າງລະບົບການສົ່ງຕໍ່ແບບກວ້າງຂວາງ ແລະ ຮັກສາການເຊື່ອມໂຍງຢ່າງໃກ້ຊິດລະຫວ່າງຜູ້ໃຫ້ບໍລິການຕ່າງໆ, ໜ່ວຍງານຂອງລັດຂັ້ນທ້ອງຖິ່ນ ແລະ ພາກສ່ວນເອກະຊົນ.

7. ຮັບປະກັນວ່າສູນພັກເຊົາທຸກສູນ ມີລະບຽບດ້ານຈັນຍາບັນ ສຳລັບພະນັກງານ ແລະ ຜູ້ພັກອາໄສ, ພະນັກງານສູນພັກເຊົາ ແລະ ຜູ້ພັກອາໄສທຸກຄົນມີຄວາມເຂົ້າໃຈກ່ຽວກັບລະບຽບການດັ່ງກ່າວ, ເຊິ່ງມີຄຳແນະນຳສະເພາະວ່າພະນັກງານຄວນເຮັດອັນໃດ ແລະ ໃຜທີ່ຄວນໄດ້ຮັບແຈ້ງເຫດການຈິງ ຫຼື ໄພອັນຕະລາຍທີ່ອາດຈະເກີດຂຶ້ນ ຕໍ່ກັບຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ຫຼື ພະນັກງານ ຫຼື ໃນເວລາທີ່ຜູ້ຖືກເຄາະຮ້າຍ ຮ້ອງຂໍ ຫຼື ສະແດງເຈດຈຳນົງ ທີ່ຈະອອກຈາກສູນ.

8. ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານສູນພັກເຊົາ ເພື່ອສ້າງຄວາມອາດສາມາດ ແລະ ແຈ້ງຜູ້ຖືກເຄາະຮ້າຍຢ່າງມີປະສິດທິພາບ ເພື່ອຕັດສິນໃຈກ່ຽວກັບການປົກປ້ອງ, ການຊ່ວຍເຫຼືອ, ການຟື້ນຟູ ແລະ ກັບຄືນສູ່ສັງຄົມໂດຍສະເພາະຢ່າງຍິ່ງ ເພື່ອຮັບປະກັນວ່າພະນັກງານຈະບໍ່ບັງຄັບໃຫ້ຜູ້ຖືກເຄາະຮ້າຍໃຫ້ຄວາມຍິນຍອມເພື່ອຮັບເອົາການບໍລິການ.

9. ສ້າງກົນໄກ ທີ່ຜູ້ຖືກເຄາະຮ້າຍໄດ້ຮັບການລາຍງານຄວາມຄືບໜ້າ ກ່ຽວກັບສະຖານະຂອງຄະດີຕົນ ແລະ ວິທີການທີ່ເຂົາເຈົ້າຈະໄດ້ຮັບຂໍ້ມູນກ່ຽວກັບຄວາມຄືບໜ້າ ແລະ ສະຖານະຂອງຄະດີຕະຫຼອດເວລາ.

10. ກຳນົດ ແລະ ກຳຈັດອຸປະສັກ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດພົບພໍ້ໃນວລາເຂົ້າເຖິງການປົກປ້ອງ ແລະ ການຊ່ວຍເຫຼືອຢູ່ນອກສູນພັກເຊົາ ເພື່ອເປັນພື້ນຖານໃນການພັດທະນາຮູບແບບສູນພັກເຊົາແບບເປີດ ແລະ ການຊ່ວຍເຫຼືອ ແລະ ປົກປ້ອງໃນຂັ້ນຊຸມຊົນໃຫ້ຫຼາຍຂຶ້ນ.

### ສຳລັບຜູ້ສ້າງນະໂຍບາຍ

11. ຮັບປະກັນວ່າສູນພັກເຊົາ ແລະ ການປົກປ້ອງ ແຍກອອກຈາກເຈດຈຳນົງຂອງຜູ້ຖືກເຄາະຮ້າຍ ໃນການເຂົ້າຮ່ວມຂະບວນການຍຸຕິທຳທາງອາຍາ. ຖ້າຫາກສິ່ງດັ່ງກ່າວ ມີຄວາມຊັດເຈນໃນນະໂຍບາຍ ແລະ ກົດໝາຍພາຍໃນ, ຮັບປະກັນວ່າ ສິ່ງນີ້ ຖືກຮັບຮູ້ຢ່າງກວ້າງຂວາງຕໍ່ກັບຜູ້ຖືກເຄາະຮ້າຍ, ຜູ້ບັງຄັບໃຊ້ກົດໝາຍ ແລະ ຜູ້ໃຫ້ການບໍລິການ. ມັນເປັນສິ່ງທີ່ສຳຄັນ ທີ່ຈະບໍ່ຕັ້ງສົມມຸດຕິຖານວ່າ ຜູ້ປະຕິບັດຕົວຈິງທຸກຄົນ ຮັບຮູ້ຢ່າງເຕັມສ່ວນກ່ຽວກັບນະໂຍບາຍ ແລະ ກົດໝາຍ.

12. ທົບທວນກອບກົດໝາຍກ່ຽວກັບສູນພັກເຊົາ ທີ່ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍ-ພະຍານ ທີ່ກ່ຽວຂ້ອງກັບການດຳເນີນຄະດີ ອາໄສຢູ່ນອກສູນພັກເຊົາ ທີ່ດຳເນີນງານໂດຍລັດຖະບານ. ຖ້າຫາກບໍ່ສາມາດຢູ່ກັບຄອບຄົວຂອງເຂົາເຈົ້າໄດ້, ຄວນມີການກະກຽມທາງເລືອກໃນການອາໄສຢູ່ກັບນາຍຈ້າງ ຫຼື ອົງການຈັດຕັ້ງທີ່ອີງໃສ່ຂັ້ນຊຸມຊົນ ຫຼື ອົງການ NGO.

13. ສົ່ງເສີມວິທີການ ຕາມແຕ່ລະກໍລະນີ ເມື່ອພິຈາລະນາເຖິງການກະກຽມສູນພັກເຊົາທີ່ດີທີ່ສຸດ ໃນການເບິ່ງແຍງ/ປົກປ້ອງຜູ້ຖືກເຄາະຮ້າຍ ແຕ່ລະບຸກຄົນ. ສິ່ງນີ້ເປັນການປະຕິບັດທີ່ເປັນຕົວແບບທີ່ດີ ທີ່ຈັດຕັ້ງປະຕິບັດແລ້ວໃນຫຼາຍປະເທດສະມາຊິກອາຊຽນ. ມັນຊ່ວຍໃຫ້ຜູ້ສ້າງນະໂຍບາຍ ແລະ ຜູ້ໃຫ້ບໍລິການພັດທະນາກິດຈະກຳທີ່ອີງໃສ່ລັກສະນະສະເພາະ ແລະ ຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ ແຕ່ລະບຸກຄົນ ເຖິງວ່າ ຈະມີຂໍ້ຈຳກັດດ້ານນະຍໂບາຍ ແລະ ກົດໝາຍທີ່ມີຢູ່ກໍ່ຕາມ.

14. ຮັບປະກັນວ່າ ການແຊກແຊງໃດໆຕໍ່ກັບຄວາມເປັນອິດສະລະໃນການເຄື່ອນຍ້າຍ ຫຼື ເສລີພາບ ດ້ວຍເຫດຜົນທາງດ້ານຄວາມປອດໄພ ຂຶ້ນຢູ່ກັບການປະເມີນຄວາມສ່ຽງສ່ວນບຸກຄົນ ທີ່ເຮັດຂຶ້ນໂດຍຕຳຫຼວດ ໃນການຮ່ວມມືຢ່າງໃກ້ຊິດກັບຜູ້ຖືກເຄາະຮ້າຍ ແຕ່ລະບຸກຄົນ ແລະ ຂໍ້ຈຳກັດໃດໆ ທີ່ກຳນົດ ການຮຽກຮ້ອງຂັ້ນຕ່ຳ ເພື່ອຫຼຸດຜ່ອນໄພຄຸກຄາມທີ່ມີເຊື່ອວ່າຈະມີຜົນ ຕໍ່ກັບຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຜູ້ຖືກເຄາະຮ້າຍ.

15. ຮັບປະກັນວ່າຜູ້ຖືກເຄາະຮ້າຍ ທີ່ປະເມີນຄວາມສ່ຽງສິ່ງຜົນໃຫ້ພັກອາໄສຢູ່ໃນສູນພັກເຊົາແບບປິດ, ການປະເມີນຄວາມສ່ຽງທີ່ເຮັດຂຶ້ນຢ່າງຕໍ່ເນື່ອງ ແລະ ອັບເດດການຕອບສະໜອງຕໍ່ສະຖານະການການປ່ຽນແປງຂອງຜູ້ຖືກເຄາະຮ້າຍ ເພື່ອທົບທວນຄວາມຈຳເປັນຂອງການຢູ່ໃນສູນພັກເຊົາຢ່າງຕໍ່ເນື່ອງ.

16. .ສືບຕໍ່ ສ້າງຄວາມເຂັ້ມແຂງ ແລະ ພັດທະນາທາງເລືອກແກ່ຜູ້ຖືກເຄາະຮ້າຍ ໃນການເຂົ້າຮ່ວມຂະບວນຍຸຕິທຳທາງອາຍາ ໂດຍບໍ່ຕ້ອງຢູ່ໃນສູນພັກເຊົາ ລວມທັງ ໃຫ້ຄຳໃຫ້ການຜ່ານວິດີໂອ, ໃຫ້ການລ່ວງໜ້າ ຫຼື ຜູ້ຖືກເຄາະຮ້າຍທີ່ຖືກສົ່ງກັບມາ ເພື່ອໃຫ້ການໃນການດຳເນີນຄະດີຂອງສານ. ເຊັ່ນດຽວກັບການສ້າງຄວາມພະຍາຍາມທີ່ດີທີ່ສຸດ ເພື່ອຫຼຸດຜ່ອນໄລຍະເວລາການດຳເນີນຄະດີທາງກົດໝາຍ ໃນຄະດີຄ້າມະນຸດ, ໂດຍສະເພາະ ໃນຄະດີທີ່ຜູ້ຖືກເຄາະຮ້າຍ ມີຂໍ້ຈຳກັດໃນການເຄື່ອນຍ້າຍ ລວມທັງ ນຳໃຊ້ສານແບບສະເພາະໂດຍສະເພາະ ຜູ້ພິພາກສາ ແລະ ໄອຍະການ ທີ່ໄດ້ຮັບການຝຶກອົບຮົມ ແລະ ຜູ້ພິພາກສາ ແລະ ໄອຍະການທີ່ຄຳນຶງເຖິງຄວາມອ່ອນໄຫວຕໍ່ຜົນກະທົບທີ່ເປັນອັນຕະລາຍ ພາໃຫ້ເກີດມີຄວາມຊັກຊ້າຕໍ່ກັບຜູ້ຖືກຄ້າມະນຸດ.

17. ມຸມມອງການຈັດຫາສູນພັກເຊົາ ບໍ່ແມ່ນວິທີການທີ່ຈະເຮັດໃຫ້ຈຸດປະສົງຂອງຄວາມຍຸຕິທຳທາງອາຍາມີຄວາມກ້າວໜ້າ ແຕ່ເປັນສ່ວນໜຶ່ງຂອງການສະໜັບສະໜູນໃຫ້ແກ່ການຟື້ນຟູ, ການຟື້ນຟູຄືນ ແລະ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ດັ່ງນັ້ນ ຈຶ່ງມີຄວາມສຳຄັນ ໃນການພັດທະນາ ຫຼື ຍົກລະດັບມາດຕະຖານຂັ້ນຕ່ຳຂອງສູນພັກເຊົາຂອງລັດ ແລະ ສູນພັກເຊົາທີ່ບໍ່ແມ່ນຂອງລັດ ບົນພື້ນຖານຄວາມເຂົ້າໃຈກ່ຽວກັບການຟື້ນຟູ ແລະ ການກັບຄືນຫາຊຸມຊົນ, ເພື່ອເປັນພື້ນຖານໃນການພັດທະນາເງື່ອນໄຂທີ່ອີງໃສ່ສິດທິ ໃນການຕິດຕາມສູນພັກເຊົາ ລວມທັງເງື່ອນໄຂທີ່ກ່ຽວຂ້ອງກັບອິດລະສະ ແລະ ເສລີພາບໃນການເຄື່ອນຍ້າຍ.

18. ນຳໃຊ້ບາງຫຼັກການ ທີ່ເຄີຍນຳໃຊ້ ໃນການຮັບມືກັບຜົນກະທົບຂອງການແຜ່ລະບາດ COVID-19 ສຳລັບວິກິດການ ຫຼື ສະຖານະການດ້ານມະນຸດສະທຳທີ່ເກີດຂຶ້ນໃນອະນາຄົດ. ຫຼັກການເຫຼົ່ານີ້ ລວມມີ: ສຸມໃສ່ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງຜ່ານຂະບວນການທັງໝົດ; ເພີ່ມທະວີການຮ່ວມມືລະຫວ່າງໜ່ວຍງານ/ພາກສ່ວນຕ່າງໆ ແລະ ການຮ່ວມມືຫຼາຍລະດັບ ເພື່ອໃຫ້ສືບຕໍ່ການສະໜັບສະໜູນ ແລະ ການບໍລິການທີ່ສຳຄັນ; ປະສົມປະສານຫຼັກການພາຍໃນ ລະຫວ່າງໜ່ວຍງານຕ່າງໆຂອງລັດ ແລະ ຜູ້ໃຫ້ການບໍລິການອື່ນໆ ເພື່ອຫຼຸດຜ່ອນຄວາມສັບສົນ ແລະ ຢຸດ ການສະໜັບສະໜູນຜູ້ຖືກເຄາະຮ້າຍ; ໃຊ້ປະໂຫຍດຈາກສິ່ງອຳນວຍຄວາມສະດວກທີ່ມີຢູ່ ຫຼື ເຄືອຂ່າຍການບໍລິການ ເພື່ອສະໜັບສະໜູນກຸ່ມຄົນທີ່ດ້ອຍໂອກາດ ທີ່ຈຳເປັນຕ້ອງມີການສະໜັບສະໜູນໃນກໍລະນີສຸກເສີນ.



# ຂໍ້ມູນອ້າງອີງ


ອາຊຽນ (2016). ຄູ່ມືແນະນຳໃນການເຮັດວຽກກັບແມ່ຍິງທີ່ເປັນບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງຊາຍ. ຈາກາຕ້າ: ກອງເລຂາອາຊຽນ.

ອາຊຽນ (2023). ຄູ່ມືອາຊຽນ ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ່ານໜ້າ: ການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຈາກາຕ້າ: ກອງເລຂາອາຊຽນ.

Cordisco Tsai, L., Lim, V., Nhanh, C., & Namy, S. (2022). "ເຂົາເຈົ້າບໍ່ໄດ້ໃຫ້ຄວາມສົນໃຈ ຫຼື ຕ້ອງການທີ່ຈະຟັງ ໃນເວລາທີ່ພວກເຮົາເວົ້າ": ປະສົບການຂອງແມ່ຍິງ ໃນສູນພັກເຊົາສໍາລັບການຄ້າມະນຸດ ໃນກໍາປູເຈຍ. ສາຂາ: 37(1), 151–168.

Gallagher, A and McAdam, M (ND). 'ບົດບັນທຶກຂໍ້ມູນວ່າດ້ວຍ ເສລີພາບໃນການເຄື່ອນຍ້າຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ'. ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ.

Gallagher, A and Pearson, E (2010). 'ເສລີພາບທີ່ມີມູນຄ່າສູງ: ວິເຄາະກົດໝາຍ ແລະ ນະໂຍບາຍກ່ຽວກັບສູນພັກເຊົາແບບກັກຂັງ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ', ສິດທິມະນຸດປະຈໍາໄຕມາດ 32 (2010) 73-114.

McAdam, M (2018). ເສລີພາບໃນການເຄື່ອນຍ້າຍ ສໍາລັບບຸກຄົນທີ່ຖືກກໍານົດຕົວ ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ວິເຄາະກົດໝາຍ, ນະໂຍບາຍ ແລະ ການປະຕິບັດຕົວຈິງໃນພາກພື້ນອາຊຽນ. ແຜນງານ ອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ.

McAdam, M (2022) ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ. ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ.

Nordin, R. (2019). ການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ມາເລເຊຍ ໄດ້ປະຕິບັດຢ່າງພຽງພໍແລ້ວບໍ່? ວາລະສານກ່ຽວກັບສິດທິມະນຸດໃນອາຊີຕາເວັນອອກສ່ຽງໃຕ້, 300–316.

Surtees R (2013). ຫຼັງຈາກການຄ້າມະນຸດ: ປະສົບການ ແລະ ສິ່ງທ້າທາຍໃນການກັບຄືນສູ່ສັງຄົມຂອງຜູ້ຖືກຄ້າມະນຸດໃນພາກພື້ນລຸ່ມແມ່ນໍ້າຂອງ. ບາງກອກ, ປະເທດໄທ, ສະຖາບັນ UNIAP/ NEXUS

# ຄະນະກຳມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ

ການປຶກສາຫາລື ແລະ ຂໍ້ແນະນຳ ກ່ຽວກັບ
ການປະຕິບັດຂອງສູກພັກເຊົ້າໃນອາຊຽນ ໂດຍຄະນະກຳມາທິການ ACWC